HELVETAS Swiss Intercooperation

LIWG LAND ISSUES WORKING GROUP

# ວຽກການຂໍການສະໜັບສະໜູນຂອງກຸ່ມເຄືອຂ່າຍທີ່ດິນ ກ່ຽວກັບເອກະສານນະໂຍບາຍທີ່ດິນແຫ່ງຊາດລາວ ແລະ ການວິເຄາະຂໍ້ມູນ

ທ່ານBernd Steimann,ອົງການ HELVETAS Swiss Intercooperation Zurich / ນະຄອນຫຼວງວຽງຈັນ, ເດືອນມິຖຸນາ 2015

# ສາລະບານ


ບົດສະຫຼຸບສັງລວມ 2
ຄວາມໝາຍຕົວອັກສອນຫຍໍ້ 3

**1 ຄວາມເປັນມາແລະຈຸດປະສົງການສຶກສາຂໍ້ມູນ 4**

**2 ເຄື່ອງມືແລະວິທີການວິເຄາະຂໍ້ມູນ 5**

2.1 ການວິເຄາະຂະບວນການກຳນົດນະໂຍບາຍຈາກທັດສະນະເສດຖະກິດທາງດ້ານການເມືອງ 5
2.2 ວິທີການ 6

**3 ການເກັບກຳວຽກງານການຂໍການສະໜັບສະໜູນກ່ຽວກັບນະໂຍບາຍທີ່ດິນແຫ່ງຊາດຂອງກຸ່ມເຄືອຂ່າຍທີ່ດິນ7**

3.1 ພາກສ່ວນທີ່ກ່ຽວຂ້ອງ: ຄວາມສົນໃຈ, ຊັບພະຍາກອນແລະການປະຕິບັດວຽກງານ 7
3.1.1 ວົງມົນດ້ານໃນ 7
3.1.2 ວົງມົນດ້ານນອກ 8
3.1.3 ວົງມົນດ້ານນອກສຸດ 9
3.2 ໄລຍະເວລາໂດຍຫຍໍ້ ກ່ຽວກັບວຽກ ການຂໍການສະໜັບສະໜູນ ກ່ຽວກັບ ນະໂຍບາຍທີ່ດິນແຫ່ງຊາດ (NLP) ຂອງກຸ່ມເຄືອຂ່າຍທີ່ດິນ 11

**4 ການວິເຄາະວຽກການຂໍກາສະໜັບສະໜູນກ່ຽວກັບນະໂຍບາຍທີ່ດິນແຫ່ງຊາດໃນສປປລາວ ຂອງກຸ່ມເຄືອຂ່າຍທີ່ດິນ 13**

4.1 ປັດໄຈພາຍນອກຂອງຄວາມສຳເລັດແລະການລົ້ມເຫຼວ 13
4.2 ປັດໄຈພາຍໃນຂອງຄວາມສຳເລັດແລະຄວາມລົ້ມເຫຼວ 14
4.3 ຜົນກະທົບຂອງນະໂຍບາຍ 16
4.4 ຈຸດດີ 18
4.5 ຈຸດອ່ອນ 19

**5 ສະຫຼຸບແລະຄຳແນະນຳ 22**

5.1 ປະສົມປະສານວິທີການເຮັດວຽກແບບແຕ່ເທິງ-ລົງ-ລຸ່ມແລະແຕ່ລຸ່ມ-ຂຶ້ນ-ເທິງ 22
5.2 ເປີດກວ້າງການປຶກສາຫາລືແລະສ້າງພື້ນທີ່ໃຫ້ພາກສ່ວນອື່ນໆ 24
5.3 ຄັດເລືອກເອົານະໂຍບາຍທີ່ຖືກຕ້ອງ 25

ເອກະສານອ້າງອີງ 27
ເອກະສານແນບທ້າຍ: ຄຳຖາມແນະແນວ 28

# ບົດກ່າວຂອບໃຈ

ຜູ້ຂຽນຂໍສະແດງຄວາມຂອບໃຈກຸ່ມເຄືອຂ່າຍທີ່ດິນ, ໂດຍສະເພາະແມ່ນກອງເລຂາຂອງເຄືອຂ່າຍຄື: ທ່ານຣັນນາຊາ ຣິນເນນ, ທ່ານເພັດດາໄລພອນ ທະວີໄຊ ແລະ ທ່ານ ວໍລະສອນ ແດນໄກຍາພິຈິດ ສໍາລັບການຕ້ອນຮັບທີ່ອົບອຸ່ນ ແລະ ການສະໜັບສະໜູນທີ່ມີຄຸນຄ່າໃນໄລຍະການສຶກສາຂໍ້ມູນຄັ້ງນີ້. ນອກນັ້ນ, ຂໍຮູ້ບຸນຄຸນອົງການເຮວວີຕັດສະວິດສ໌ເພື່ອການຮ່ວມມືສາກົນສໍາລັບການສະໜັບສະໜູນທາງດ້ານງົບປະມານແລະສິ່ງອໍານວຍຄວາມສະດວກຕ່າງໆ ທັງພາຍໃນປະເທດລາວແລະໃນປະເທດສະວິດເຊີແລນ. ຂໍຂອບໃຈພິເສດແກ່ທ່ານນາຊານດິດຊັນນາຍັກ, ອົງການ VFI ທີ່ໄດ້ແລກປ່ຽນເອກະສານກ່ຽວກັບວຽກການຂໍການສະໜັບສະໜູນທີ່ຕິດພັນນະໂຍບາຍທີ່ດິນແຫ່ງຊາດ. ທ້າຍສຸດ, ຂໍສະແດງຄວາມຂອບໃຈຢ່າງຫຼວງຫຼາຍຕໍ່ໝົດທຸກທ່ານທີ່ຕອບແບບສອບຖາມສໍາລັບເວລາ ແລະການແລກປ່ຽນທັດສະນະຂອງພວກເຂົາຢ່າງເປີດເຜີຍຊຶ່ງເຮັດໃຫ້ການວິໄຈຄັ້ງນີ້ໄດ້ຮັບຜົນສໍາເລັດເປັນຢ່າງດີ.

# ບົດສະຫຼຸບສັງລວມ

ເປັນເວລາຫຼາຍກວ່າ 4 ປີແລ້ວ, ພາກສ່ວນທີ່ກ່ຽວຂ້ອງໃນສປປລາວໄດ້ສົນທະນາກັນກ່ຽວກັບນະໂຍບາຍທີ່ດິນແຫ່ງຊາດ (NLP) - ແຕ່ວ່າຈົນເຖິງປະຈຸບັນກໍ່ຍັງບໍ່ທັນໄດ້ຮັບຜົນອອກທີ່ຊັດເຈນ. ກຸ່ມເຄືອຂ່າຍທີ່ດິນ (LIWG; ໃນເອກະສານນີ້ເອີ້ນວ່າ ,ກຸ່ມ'), ຊຶ່ງເປັນກຸ່ມຍ່ອຍຂອງເຄືອຂ່າຍອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດໃນສປປລາວ, ໄດ້ເຂົ້າຮ່ວມສົນທະນາກ່ຽວກັບບັນຫານີ້ໃນປີ 2011, ໄດ້ດຳເນີນວຽກການຂໍການສະໜັບສະໜູນຢ່າງແຂງແຮງກ່ຽວກັບນະໂຍບາຍທີ່ດິນເພື່ອປົກປ້ອງສິດຜົນປະໂຫຍດຂອງຊຸມຊົນຢູ່ຊົນນະບົດ. ສີ່ປີຕໍ່ມາ, ກຸ່ມເຄືອຂ່າຍທີ່ດິນມີຈຸດປະສົງທີ່ຈະປະເມີນວ່າວຽກໂຄສະນາຂົນຂວາຍຂອງຕົນທີ່ໄດ້ຮັບການຈັດຕັ້ງປະຕິບັດ ມີປະສິດທິພາບຫຼາຍເທົ່າໃດ ແລະພາກສ່ວນທີ່ກ່ຽວຂ້ອງມີທັດສະນະແນວໃດຕໍ່ວຽກງານດັ່ງກ່າວນີ້ຊຶ່ງເປັນພາກສ່ວນທີ່ມີສ່ວນຮ່ວມໃນການສົນທະນາກ່ຽວກັບນະໂຍບາຍທີ່ດິນ.

ສະນັ້ນ, ຈຸດປະສົງຂອງການສຶກສາຄັ້ງນີ້ແນໃສ່ເກັບກຳຂໍ້ມູນ, ວິເຄາະແລະປະເມີນຜົນວຽກໂຄສະນາຂົນຂວາຍກ່ຽວກັບນະໂຍບາຍທີ່ດິນແຕ່ອະດີດຈົນເຖິງປະຈຸບັນແລະແນໃສ່ກຳນົດທິດທາງຍຸດທະສາດຂອງກຸ່ມໃນອະນາຄົດ. ໃນໄລຍະທ້າຍ, ການສຶກສາຂໍ້ມູນຄັ້ງນີ້ຈະນຳໃຊ້ທັດສະນະເສດຖະກິດທາງດ້ານການເມືອງ, ສຶກສາເນື້ອໃນການສົນທະນາກ່ຽວກັບນະໂຍບາຍທີ່ດິນຊຶ່ງເປັນຂະບວນໂຕ້ວາທີກັນລະຫວ່າງພາກສ່ວນຕ່າງໆທີ່ມີຄວາມສົນໃຈ, ຄວາມເຊື່ອ, ແລະຊັບພະຍາກອນ (ອຳນາດ) ທີ່ແຕກຕ່າງກັນ. ຂໍ້ມູນຕົວຈິງທີ່ນຳສະເໜີໃນທີ່ນີ້ໄດ້ຮັບໃນການສຶກສາຂໍ້ມູນພາຍໃນໄລຍະ 2 ອາທິດໃນເດືອນພຶດສະພາ 2015 ທີ່ນະຄອນຫຼວງວຽງຈັນ. ການສຶກສາຂໍ້ມູນປະກອບດ້ວຍການທົບທວນເອກະສານແລະການສຳພາດບຸກຄົນທີ່ເປີດກວ້າງກັບຜູ້ຕອບແບບສອບຖາມແລະຊ່ຽວຊານປະຈຳຂະແໜງການ ຈຳນວນ 27 ທ່ານໃນນະຄອຍຫຼວງວຽງຈັນແລະແຂວງອື່ນໆ.

ພາກທີ່ໜຶ່ງຂອງການສຶກສາຂໍ້ມູນຈະນຳໃຊ້ວິທີການທົບທວນເອກະສານໂດຍການກຳນົດພາກສ່ວນທີ່ກ່ຽວຂ້ອງຕົ້ນຕໍໃນຂະບວນການຮ່າງນະໂຍບາຍທີ່ດິນແຫ່ງຊາດຊຶ່ງເປັນກຸ່ມເປົ້າໝາຍຕົ້ນຕໍແລະກຸ່ມເປົ້າໝາຍສຳຮອງເຊັ່ນດຽວກັນກັບພັນທະມິດແລະຜູ້ສະໜັບສະໜູນກຸ່ມເຄືອຂ່າຍທີ່ດິນ. ນອກນັ້ນ, ວິທີການນີ້ຍັງສະໜອງຂໍ້ມູນກ່ຽວກັບໄລຍະເວລາໂດຍປະມານກ່ຽວກັບວຽກການຂໍການສະໜັບສະໜູນນະໂຍບາຍ NLP ຂອງກຸ່ມແຕ່ປີ 2011 ເປັນຕົ້ນມາ.

ພາກທີສອງຂອງການສຶກສາຂໍ້ມູນຈະນຳໃຊ້ວິທີການວິເຄາະຂໍ້ມູນໂດຍການສຶກສາເບິ່ງພາກສ່ວນທີ່ກ່ຽວຂ້ອງ, ປັດໃຈແລະມາດຕະການຕ່າງທີ່ສົ່ງຜົນຕໍ່ຂະບວນການກຳນົດຂະໂຍບາຍ NLPວ່າມີຄວາມແຕກຕ່າງກັນແນວໃດ. ບົນພື້ນຖານການຄາດຄະເນທາງດ້ານຄຸນນະພາບຂອງຜົນກະທົບຂອງນະໂຍບາຍຂອງກຸ່ມເຄືອຂ່າຍທີ່ດິນ, ການສຶກສາຂໍ້ມູນຄັ້ງນີ້ເຫັນວ່າເຖິງແມ່ນວ່າຈຸດປະສົງສູງສຸດຂອງກຸ່ມ (ເຊັ່ນ: ນະໂຍບາຍທີ່ດິນທີ່ສົມເຫດສົມຜົນ) ຍັງຄົງຢູ່ຫ່າງໄກຈາກຜົນສຳເລັດ, ແຕ່ວ່າຈຸດປະສົງດັ່ງກ່າວນັ້ນໄດ້ຮັບການກຳນົດຮ່ວມກັນໃນການສົນທະນາກ່ຽວກັບທີ່ດິນໃນສປປລາວຢ່າງເໝາະສົມ. ສະນັ້ນ, ຈຸດປະສົງນີ້ບໍ່ພຽງແຕ່ໄດ້ຮັບການພິຈາລະນາເຂົ້າໃນຂະບວນການທີ່ຜູ້ຕັດສິນບັນຫາໃນສປປລາວທີ່ຮັບຮູ້ແລະສົນທະນາກ່ຽວກັບບັນຫາທີ່ດິນ, ແຕ່ວ່າມັນຍັງມີບົດບາດສຳຄັນຕໍ່ການປະຕິບັດເສດຂອງສະພາແຫ່ງຊາດຕໍ່ຮ່າງນະໂຍບາຍ NLPໃນປີ 2013 ອີກດ້ວຍ. ກ່ຽວກັບຈຸດດີແລະຈຸດອ່ອນຂອງຂອງວຽກງານການຂໍການສະໜັບສະໜູນຂອງກຸ່ມ, ຜົນການສຶກສາຂໍ້ມູນຊີ້ໃຫ້ເຫັນເຖິງຄວາມອາດສາມາດ, ການສ້າງຕັ້ງກຸ່ມ, ຄວາມມຸ້ງໝັ້ນແລະລະດັບຂອງອົງການຈັດຕັ້ງຂອງກຸ່ມ, ຊຶ່ງສົ່ງຜົນເຮັດໃຫ້ກຸ່ມມີຈຸດຢືນທາງດ້ານສະຖາບັນທີ່ໜັກແໜ້ນໃນປະຈຸບັນ. ໃນຂະນະດຽວກັນ, ການສຶກສາຂໍ້ມູນຍັງຊີ້ໃຫ້ເຫັນຄວາມບໍ່ດຸ່ນດ່ຽງໃນປະຈຸບັນລະຫວ່າງຄູ່ຮ່ວມມືພາຍໃນປະເທດແລະຄູ່ຮ່ວມມືສາກົນ, ສາເຫດທີ່ພາໃຫ້ມີຄວາມກັງວົນຫຼາຍກ່ຽວກັບບັນຫານີ້ແມ່ນຄວາມເປັນເຈົ້າການຂອງທ້ອງຖິ່ນ. ນອກນັ້ນ, ຍັງມີຄຳຖາມກ່ຽວກັບການຕັດສິນໃຈຂອງກຸ່ມໃນປີ 2012 ທີ່ຍອມຮັບເອົາພາລະບົດບາດເປັນທີ່ປຶກສາວິຊາການໃຫ້ກຸ່ມເປົ້າໝາຍຕົ້ນຕໍຈຳນວນໜຶ່ງຊຶ່ງວ່າການຕັດສິນໃຈດັ່ງກ່າວນີ້ ອາດຈະສົ່ງຜົນສະທ້ອນທາງລົບເຮັດໃຫ້ກຸ່ມ ຂາດການຄວບຄຸມຂະບວນການຕັດສິນບັນຫາລະດັບນະໂຍບາຍ.

ພາກສະຫຼຸບ, ຜົນການສຶກສາຂໍ້ມູນຄັ້ງນີ້ກຳນົດຄຳແນະນຳຕົ້ນຕໍຈຳນວນ 3 ຂໍ້. ຂໍ້ທີໜຶ່ງ, ມີຄວາມຈຳເປັນຢ່າງຮີບດ່ວນສຳລັບສະມາຊິກກຸ່ມ LIWG ເພື່ອເຫັນດີເປັນເອກະພາບກັນກ່ຽວກັບທິດສະດີການປ່ຽນແປງອັນດຽວກັນທີ່ຕິດພັນກັບນະໂຍບາຍ NLP. ບັນຫານີ້ອາດຈະສົ່ງຜົນສະທ້ອນໃຫ້ມີການປະສານສົມທົບຢ່າງເປັນລະບົບຫຼາຍຂຶ້ນກວ່າເກົ່າກ່ຽວກັບການຂໍການສະໜັບສະໜູນ,ວິທີການເຮັດວຽກແບບແຕ່ເທິງລົງລຸ່ມແລະແບບແຕ່ລຸ່ມຂຶ້ນເທິງ, ແລະຈະຊ່ວຍເຊື່ອມສານ ຄູ່ຮ່ວມືທີ່ເປັນຄົນລາວເຂົ້າໃນວຽກງານນີ້ພ້ອມທັງເປັນການແກ້ໄຂພື້ນຖານອົງການ INGO ທີ່ບໍ່ແຂງແຮງ. ຂໍ້ທີສອງ, ຕໍ່ກັບສະພາບການຂາດການຄວບຂະບວນການ, ກຸ່ມ LIWG ຄວນຈະຄົ້ນຄວ້າຫາວິທີນຳໃຊ້ຈຸດຢືນທາງສະຖາບັນຂອງຕົນເພື່ອເພີ້ມທະວີການສົນທະນາກ່ຽວກັບທີ່ດິນຢ່າງຕັ້ງໜ້າເຊັ່ນ: ການເຂົ້າຫາພາກສ່ວນອື່ນ, ແຕ່ວ່າບໍ່ຕັດພາກສ່ວນທີ່ກ່ຽວຂ້ອງໃນປະຈຸບັນ ອອກ. ຂໍ້ທີສາມ, ອາດຈະມີຄວາມຄຸ້ມຄ່າທີ່ຈະນຳໃຊ້ນະໂຍບາຍຂອງພາກລັດໃຫ້ຫຼາຍຂຶ້ນກວ່າເກົ່າຄື 'ການຫັນຊັບສິນມາເປັນທຶນ' ເພື່ອເຜີຍແຜ່ຂໍ້ມູນຂ່າວສານຂອງກຸ່ມໃຫ້ມີປະສິດທິພາບສູງຂຶ້ນກ່ວາເກົ່າ. ເຖິງຢ່າງໃດກໍ່ດີ, ສິ່ງທ້າທາຍທີ່ອາດຈະເກີດຂຶ້ນແມ່ນການຮັກສາຄວາມດຸ່ນດ່ຽງໃຫ້ເໝາະສົມ ລະຫວ່າງຄວາມລັງເລແລະການຂາດຄວາມອົດທົນ, ລະຫວ່າງຄວາມໜ້າເຊື່ອຖືແລະການຖືກຍອມຮັບ, ແລະລະຫວ່າງຄວາມດິເລີດແລະຄວາມປະຕິບັດນິຍົມ.

# ຄວາມໝາຍຕົວອັກສອນຫຍໍ້

| | |
|---|---|
| ADB | ທະນາຄານພັດທະນາອາຊີ |
| AEPF | ກອງປະຊຸມຂອງປະຊາຊົນອາຊີ - ເອີຣົບ |
| ASEAN | ສະມາຄົມປະຊາດຊາດອາຊີຕາເວັນອອກສ່ຽງໃຕ້ |
| EPFC-NA | ຄະນະກຳມາທິການການເງິນແລະການວາງແຜນເສດຖະກິດປະຈຳສະພາແຫ່ງຊາດ |
| FAO | ອົງການອາຫານແລະການກະສິກຳ |
| FPIC | ການເຫັນດີລ່ວງໜ້າແບບສຳໝັກໃຈ |
| GIZ | ອົງການການຮ່ວມມືສາກົນຂອງປະເທດເຢຍລະມັນ (Deutsche Gesellschaft für Internationale Zusammenarbeit) |
| INGO | ອົງການສາກົນທີ່ສັງກັດລັດ |
| JVC | ສູນອາສາສະໝັກສາກົນປະເທດຍີ່ປຸ່ນ |
| LIWG | ກຸ່ມເຄືອຂ່າຍທີ່ດິນ |
| LSSWG | ໜ່ວຍງານຍ່ອຍຂອງກຸ່ມເຄືອຂ່າຍທີ່ດິນ |
| MAF | ກະຊວງກະສິກຳແລະປ່າໄມ້ |
| MIC-MAC | ການເຊື່ອມໂຍງເສດຖະກິດມະຫາພາກແລະຈຸລະພາກ |
| MONRE | ກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ |
| MRLG | ໂຄງການການປົກຄອງທີ່ດິນລະດັບພາກພື້ນແມ່ນ້ຳຂອງ |
| NA | ສະພາແຫ່ງຊາດ |
| NLP | ນະໂຍບາຍທີ່ດິນແຫ່ງຊາດ |
| NPA | ສະມາຄົມທີ່ບໍ່ຫວັງຜົນກຳໄລ |
| NPB | ຫືວໜ່ວຍທູລະກິດທີ່ບໍ່ຫວັງຜົນກຳໄລ |
| NRESWG | ໜ່ວຍງານຊັບພະຍາກອນທຳມະຊາດ |
| SDC | ອົງການສະວິດສ໌ເພື່ອການຮ່ວມມືດ້ານການພັດທະນາ |
| UNDP | ອົງການສະຫະປະຊາຊາດເພື່ອການພັດທະນາ |
| UNIPP | ອົງການສະຫະປະຊາຊາດເພື່ອການຮ່ວມືຂອງຄົນພື້ນເມືອງ |
| UNPEI | ໂຄງການສິ່ງແວດລ້ອມ-ຄວາມທຸກຍາກຂອງUNDP |
| WB | ທະນາຄານໂລກ |

# 1 ຄວາມເປັນມາແລະຈຸດປະສົງຂອງການສຶກສາຂໍ້ມູນ

ໃນປະຈຸບັນ, ນະໂຍບາຍທີ່ດິນແຫ່ງຊາດ (NLP) ກໍາລັງຢູ່ໃນຂັ້ນຕອນການຮ່າງນະໂຍບາຍແລະຍັງຄົງຢູ່ໃນໄລຍະການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ. ນອກນັ້ນ, ກົດໝາຍທີ່ດິນ, ກົດໝາຍປ່າໄມ້ແລະກົດໝາຍວ່າດ້ວຍນໍ້າກໍ່ກໍາລັງຢູ່ໃນຂັ້ນຕອນການດັດແກ້ເຊັ່ນກັນ. ການປຶກສາຫາລືກ່ຽວກັບນະໂຍບາຍລະດັບຊາດເຫຼົ່ານີ້ສ່ອງແສງໃຫ້ເຫັນການສົນທະສາກັນຂອງສະທາລະນະຊົນກ່ຽວກັບການເຂົ້າເຖິງແລະການຄວບຄຸມຊັບພະຍາກອນທໍາມະຊາດໂດຍສະເພາະແມ່ນທີ່ດິນ. ການສົນທະນາດັ່ງກ່າວນີ້ກ່ຽວຂ້ອງກັບຄວາມກັງວົນຕໍ່ການລົງທຶນຕ່າງປະເທດທີ່ມີລະດັບເພີ່ມຂຶ້ນໃນຂະແໜງການສໍາປະທານຂຸດຄົ້ນບໍ່ແຮ່, ການປູກພືດກະສິກໍາແລະພະລັງງານໄຟຟ້ານໍ້າຕົກກໍ່ຄືຜົນກະທົບຂອງການລົງທຶນດັ່ງກ່າວນັ້ນຕໍ່ການຄຸ້ມຄອງຊັບພະຍາກອນທໍາມະຊາດແບບຍືນຍົງເຊັ່ນດຽວກັນກັບ ວຽກຄໍ້າປະກັນການຖືຄອງກໍາມະສິດທີ່ດິນຂອງຊຸມຊົນ.

ກຸ່ມເຄືອຂ່າຍທີ່ດິນ (LIWG) ແມ່ນໜ່ວຍງານຍ່ອຍຂອງເຄືອຂ່າຍອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດ (ເຄືອຂ່າຍໄອເອັນຈີໂອ)ໃນສປປລາວ. ໄດ້ເລີ່ມຕົ້ນດໍາເນີນງານໃນປີ 2007, ອົງການດັ່ງກ່າວນີ້ໄດ້ຂໍການສະໜັບສະໜູນຢ່າງເຂັ້ມແຂງເພື່ອນະໂຍບາຍທີ່ດິນທີ່ປົກປ້ອງສິດຜົນປະໂຫຍດ ແລະຊີວິດຄວາມເປັນຢູ່ຂອງຊຸມຊົນ. ເວົ້າສະເພາະ, ກຸ່ມເຄືອຂ່າຍທີ່ດິນໄດ້ຮ່ວມງານກັບລັດຖະບານເຊັ່ນ: ກະຊວງຊັບພະຍາກອນທໍາມະຊາດແລະສິ່ງແວດລ້ອມແລະສະພາແຫ່ງຊາດ, ຄູ່ຮ່ວມພັດທະນາແລະອົງການຈັດຕັ້ງທາງສັງຄົມເພື່ອສົ່ງເສີມການຄໍ້າປະກັນການຖືຄອງກໍາມະສິດທີ່ດິນຂອງຊຸມຊົນແລະການເຂົ້າເຖິງທີ່ຍຸຕິທໍາຕໍ່ຊັບພະຍາກອນທໍາມະຊາດໃນການສົນທະນາກ່ຽວກັບເນື້ອໃນນະໂຍບາຍທີ່ດິນແຫ່ງຊາດ. ກຸ່ມເຄືອຂ່າຍທີ່ດິນແລະຄູ່ຮ່ວມມືຈໍານວນໜຶ່ງໄດ້ຈັດຕັ້ງປະຕິບັດວຽກງານຊຶ່ງມີຜົນໄດ້ຮັບຈໍານວນໜຶ່ງເຊັ່ນ: ຜົນການສຶກສາຂໍ້ມູນ, ບົດຄວາມໂດຍຫຍໍ້ກ່ຽວກັບນະໂຍບາຍ, ກອງປະຊຸມມສໍາມະນາແລະຄໍາແນະນໍາຈໍານວນໜຶ່ງເພື່ອສະໜັບສະໜູນຍຸດທະສາດວຽກການຂໍການສະໜັບສະໜູນເຫຼົ່ານີ້.

ພາກສ່ວນທີ່ກ່ຽວຂ້ອງຈໍານວນໜຶ່ງໄດ້ມີສ່ວນຮ່ວມໃນວຽກການຂໍການສະໜັບສະໜູນດັ່ງກ່າວນີ້: ສະມາຊິກກຸ່ມເຄືອຂ່າຍທີ່ດິນແລະກອງເລຂາຂອງກຸ່ມແລະພະນັກງານຈໍານວນໜຶ່ງຈາກອົງການຈັດຕັ້ງຄູ່ຮ່ວມພັດທະນາ. ນອກນັ້ນ, ພວກເຂົາຂໍສະແດງຄວາມຂອບໃຈມາຍັງພະນັກງານຕົ້ນຕໍຂອງພາກລັດທີ່ມີຄວາມມຸ້ງໝັ້ນຊຶ່ງເປັນພາກສ່ວນທີ່ມີອໍານາດໃນການຕັດສິນບັນຫາໃນລະດັບສະຖາບັນເຊັ່ນດຽວກັນກັບສະມາຊິກສະພາແຫ່ງຊາດຊຶ່ງເປັນພາກສ່ວນທີ່ຍົກເອົາບັນຫາທີ່ດິນ ຂຶ້ນມາສົນທະນາຢ່າງຕໍ່ເນື່ອງໃນໄລຍະຫຼາຍປີທີ່ຜ່ານມາ. ພາຍຫຼັງທີ່ໄດ້ດໍາເນີນການຂໍການສະໜັບສະໜູນກ່ຽວກັບນະໂຍບາຍທີ່ດິນແຫ່ງຊາດເປັນເວລາຫຼາຍກວ່າ 4 ປີ, ກຸ່ມເຄືອຂ່າຍທີ່ດິນເຫັນວ່າມັນເຖິງເວລາແລ້ວທີ່ຈະດໍາເນີນການປະເມີນປະສິດທິພາບຂອງວຽກການຂໍການສະໜັບສະໜູນແລະທັດສະນະຂອງພາກສ່ວນທີ່ກ່ຽວຂ້ອງຕໍ່ກັບວຽກງານນີ້. ສະນັ້ນ, ຜົນໄດ້ຮັບຈາກການສຶກສາຂໍ້ມູນຄັ້ງນີ້ຈະເປັນທິດເບື້ອງທາງໃຫ້ການດັດປັບຍຸດທະສາດໃນອະນາຄົດຂອງກຸ່ມເຄືອຂ່າຍທີ່ດິນ.

**ຈຸດປະສົງລວມ**ຂອງການສຶກສາຂໍ້ມູນຄັ້ງນີ້ແມ່ນເພື່ອຖອດຖອນບົດຮຽນລະດັບບຸກຄົນແລະອົງກອນທີ່ມີສ່ວນຮ່ວມຫຼືຈະມີສ່ວນຮ່ວມໃນການສະໜັບສະໜູນການກໍານົດນະໂຍບາຍແລະນິຕິກໍາໃນ ສປປລາວທີ່ຕິດພັນກັບການປົກຄອງແລະການຄຸ້ມຄອງທີ່ດິນແລະຊັບພະຍາກອນທໍາມະຊາດ.

**ຈຸດປະສົງສະເພາະທີໜຶ່ງ**ແນໃສ່ກໍານົດຮູບແບບຂອງກິດຈະກໍາ, ປັດໄຈແລະພາກສ່ວນທີ່ກ່ຽວຂ້ອງທີ່ມີອໍານາດຕັດສິນບັນຫາແລະເພື່ອສຶກສາເບິ່ງວ່າ ພວກກ່ຽວຕັດສິນບັນຫາແນວໃດກ່ຽວກັບການກໍານົດແລະເນື້ອໃນຂອງນະໂຍບາຍທີ່ດິນເຊັ່ນດຽວກັນກັບຄວາມຄິດແລະທັດສະນະຂອງພາກສ່ວນທີ່ກ່ຽວຂ້ອງກ່ຽວກັບນະໂຍບາຍທີ່ດິນ. **ຈຸດປະສົງສະເພາະທີສອງ**ແນໃສ່ກໍານົດຈຸດດີ, ຈຸດອ່ອນແລະຂໍ້ຄົງຄ້າງໃນວຽກການຂໍການສະໜັບສະໜູນແລະຍຸດທະສາດທີ່ມີ ໃນປະຈຸບັນແລະສະເໜີຄໍາແນະນໍາສໍາລັບການສົນທະນາທາງດ້ານນະໂຍບາຍກ່ຽວກັບບັນຫາທີ່ດິນໃນອະນາຄົດ.

ໃນຂະນະທີ່ເອກະສານໜ້າວຽກຂອງການສຶກສາຂໍ້ມູນຄັ້ງນີ້ຮຽກຮ້ອງໃຫ້ເບິ່ງຄືນວຽກການຂໍການສະໜັບສະໜູນກ່ຽວກັບນະໂຍບາຍທີ່ດິນແຫ່ງຊາດຂອງກຸ່ມເຄືອຂ່າຍທີ່ດິນເປັນຕົ້ນຕໍ, ບົດລາຍງານສະບັບນີ້ມີເນື້ອໃນຫຼາຍກວ່າບັນຫານີ້. ການວິເຄາະພາລະບົດບາດຂອງກຸ່ມເຄືອຂ່າຍທີ່ດິນທີ່ຕິດພັນກັບຂະບວນການໂຄສະນາຂົນຂວາຍກ່ຽວກັບນະໂຍບາຍທີ່ດິນແຫ່ງຊາດຮຽກຮ້ອງໃຫ້ມີຄວາມເຂົ້າໃຈວ່າກຸ່ມເຄືອຂ່າຍທີ່ດິນເຮັດວຽກແນວໃດເຊັ່ນ: ຄະນະຊີ້ນຳຂອງກຸ່ມ, ສະມາຊິກຫຼັກແລະຜູ້ສະໜັບສະໜູນຮ່ວມມືແລະປະສານງານກັນແນວໃດ. ນອກນັ້ນ,ເພື່ອທຳຄວາມເຂົ້າໃຈວຽກການຂໍການສະໜັບສະໜູນກ່ຽວກັບນະໂຍບາຍທີ່ດິນແຫ່ງຊາດ,ການສຶກສາຂໍ້ມູນຄັ້ງນີ້ຈິ່ງສຶກສາເບິ່ງໂຄງຮ່າງການຈັດຕັ້ງລະດັບສະຖາບັນ ຂອງກຸ່ມເຄືອຂ່າຍທີ່ດິນແລະທັດສະນະຂອງສະມາຊິກແຕ່ລະພາກສ່ວນ.

# 2 ເຄື່ອງມືແລະວິທີການວິເຄາະຂໍ້ມູນ

## 2.1 ການວິເຄາະຂະບວນການກຳນົດນະໂຍບາຍຈາກທັດສະນະເສດຖະກິດທາງດ້ານການເມືອງ

ການກຳນົດນະໂຍບາຍສ່ວນໃຫຍ່ແມ່ນຂະບວນການທີ່ບໍ່ເປັນເສັ້ນຊື່ຊຶ່ງຕິດພັນກັບການສົນທະນາຮ່ວມກັນລະຫວ່າງບຸກຄົນແລະພາກສ່ວນຕ່າງໆທີ່ມີຄວາມສົນໃຈ, ມີຄວາມເຊື່ອ, ມີທັດສະນະແລະມີຊັບພະຍາກອນທີ່ແຕກຕ່າງກັນ. ສະນັ້ນ, ແຕ່ລະພາກສ່ວນຈຶ່ງມີຄວາມເປັນໄປໄດ້ທີ່ແຕກຕ່າງກັນໃນການແຊກແຊງຂະບວນການກຳນົດນະໂຍບາຍແລະຜົນອອກຂອງຂະບວນການດັ່ງກ່າວນັ້ນ. ວິທີການເສດຖະກິດທາງການເມືອງສາມາດປະກອບສ່ວນໃນການແກ້ໄຂຂໍ້ຫຍຸ້ງຍາກຂອງອົງການປະກອບເຫຼົ່ານີ້ ທີ່ແຕກຕ່າງກັນແລະການກຳນົດທີ່ຕັ້ງໃຫ້ຢູ່ພາຍໃນຄວາມເຂົ້າໃຈລວມຂອງຂະບວນການເສດຖະກິດແລະຂະບວນການທາງການເມືອງ. ໝາຍຄວາມວ່າ: ວິທີການນີ້ແນໃສ່ກຳນົດໝົດທຸກພາກສ່ວນທີ່ກ່ຽວຂ້ອງ - ຊຶ່ງອາດຈະເປັນອົງກອນຫຼືບຸກຄົນກໍ່ໄດ້ - ແລະທຳຄວາມເຂົ້າໃຈແຮງຈູງໃຈຂອງພວກເຂົາ, ສາຍພົວພັນຂອງພວກເຂົາ, ເຊັ່ນດຽວກັນກັບຄວາມຂັດແຍ້ງແລະການກະຈາຍອຳນາດລະຫວ່າງພາກສ່ວນເຫຼົ່ານີ້. ນອກນັ້ນ, ວິທີການເສດຖະກິດທາງການເມືອງຍັງພະຍາຍາມອະທິບາຍຫຼາຍກວ່າການວິເຄາະໂຄງສ້າງທີ່ເປັນທາງການແລະໂຄງການທີ່ປະຈັກຕາ - ເຊັ່ນ: ວິທີການທີ່ເປັນທາງການກ່ຽວກັບການພົວພັນວຽກງານ, ລະບຽບກົດໝາຍ - ໂດຍການສຶກສາເບິ່ງປະເດັນທີ່ບໍ່ເປັນທາງການ, ບາງຄັ້ງລວມເອົາໂຄງສ້າງທີ່ບໍ່ປະຈັກຕາ, ຂອງຄວາມເຊື່ອແລະນະໂຍບາຍຂອງແຕ່ລະພາກສ່ວນທີ່ແຕກຕ່າງກັນ (ອ້າງອີງເອກະສານຂອງ Acosta ແລະ Pettit 2013).

ສະນັ້ນ, ບົດລາຍງານສະບັບນີ້ຈຶ່ງແນໃສ່ທຳຄວາມເຂົ້າໃຈຂະບວນການກຳນົດນະໂຍບາຍທີ່ດິນແຫ່ງຊາດ (NPL) ແລະວຽກໂຄສະນາຂັບຂວາຍທີ່ກ່ຽວຂ້ອງຂອງກຸ່ມເຄືອຂ່າຍທີ່ດິນທີ່ກວມເອົາ 4 ດ້ານດັ່ງຂ້າງລຸ່ມນີ້:

a) ພາກສ່ວນ, ຄວາມສົນໃຈແລະຍຸດທະສາດຂອງແຕ່ລະພາກສ່ວນ;
b) ຂະບວນການຮ່ວມມືແລະການສົນທະນາກັນ;
c) ໂຄງສ້າງທີ່ເປັນທາງການແລະທີ່ປະຈັກຕາ, ບັນທັດຖານ, ແລະ 'ລະບຽບຫຼັກການຂອງເກມ'; ແລະ
d) ໂຄງສ້າງທີ່ບໍ່ເປັນທາງການແລະບໍ່ປະຈັກຕາ, ຄວາມເຊື່ອແລະນະໂຍບາຍ.

ຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບແຕ່ລະດ້ານທີ່ກ່າວມານັ້ນຈະເຮັດໃຫ້ຜົນມີການວິເຄາະທີ່ແຕກຕ່າງກັນ, ຍ້ອນວ່າມັນຈະໄຈ້ແຍກວຽກໂຄສະນາຂັບຂວາຍແຕ່ລະອັນແທນທີ່ຈະເຂົ້າໃຈວ່າວຽກງານນີ້ເປັນຂະບວນການແບບເສັ້ນຊື່ຕາມປົກກະຕິທີ່ມີຜົນອອກອັນດຽວ (ເຊັ່ນ: ນະໂຍບາຍທີ່ຖືກຮັບຮອງ). ນອກນັ້ນ, ວຽກງານນີ້ຍັງເຮັດໃຫ້ພວກເຮົາສາມາດວັດແທກຜົນກະທົບຂອງວຽກການຂໍການສະໜັບສະໜູນໄດ້ຢ່າງເໝາະສົມ, ໂດຍຜ່ານການຮັບຮູ້ວ່າຜົນກະທົບສາມາດເກີດຂຶ້ນໃນແຕ່ລະຂັ້ນຕອນຂອງຂະບວນການ, ໃນໄລຍະເວລາທີ່ບໍ່ເຄີຍມີມາກ່ອນ. ສິ່ງນີ້ມີຄວາມສອດຄ່ອງໂດຍສະເພາະໃນສະພາບການຂອງສປປລາວ, ຊຶ່ງວ່າຂະບວນການກຳນົດນະໂຍບາຍໃນປະຈຸບັນມີຄວາມຊັກຊ້າ ແລະ ສັບສົນຫຼາຍລົບຫຼາຍຕ່າວລະຫວ່າງຫຼາຍພາກສ່ວນທີ່ແຕກຕ່າງກັນແລະບາງຄັ້ງກໍ່ບໍ່ຮູ້ວ່າພາກສ່ວນໃດຮັບຜິດຊອບ. ເຖິງຢ່າງໃດກໍ່ດີ, ການປ່ຽນແປງສຸກເສີນແລະບໍ່ຄາດຫັວງມາກ່ອນສາມາດເກີດຂຶ້ນໄດ້ໃນສະພາບການດັ່ງກ່າວນີ້. ທ້າຍສຸດ, ການສຶກສາຂໍ້ມູນຄັ້ງນີ້ຈະຈຳແນກໃຫ້ເຫັນຄວາມແຕກຕ່າງ 5 ດ້ານຂອງການປ່ຽນແປງນະໂຍບາຍ (ອ້າງອີງເອກະສານຂອງອົງການ HELVETAS Swiss Intercooperation ປີ 2015) ດັ່ງຂ້າງລຸ່ມນີ້:

- **ການປ່ຽນແປງດ້ານຄຳນິຍາມ:** ກຸ່ມເປົ້າໝາຍແລະພາກສ່ວນທີ່ກ່ຽວຂ້ອງອື່ນໆມີຄວາມເຂົ້າໃຈບັນຫາທີ່ຈະແກ້ໄຂ (ເຊັ່ນ: ສະມາຊິກສະພາແຫ່ງຊາດຮັບຮູ້ຂໍ້ສະເໜີກ່ຽວກັບຊື້ຂາຍທີ່ດິນທີ່ສຳຄັນທີ່ມີການປະຕິບັດຕົວຈິງວ່າສາມາດນຳໄປສູ່ຍາດຊິງເອົາຊັບພະຍາກອນ).

- **ການປ່ຽນແປງດ້ານການປະພຶດ:** ສາທາລະຊົນ, ຄູ່ຮ່ວມມືລະດັບຍຸດທະສາດ, ພັນທະມິດແລະພາກສ່ວນທີ່ຂ້ອງຕົ້ນຕໍສາມາດສະແດງຄວາມຄິດເຫັນໄດ້ຢ່າງເປີດເຜີຍກ່ຽວກັບບັນຫາທີ່ຈະແກ້ໄຂ (ເຊັ່ນ: ຫົວຂໍ້ຂ່າວໃນສື່ມວນຊົນ, ການໂຕ້ວາທີກັນໃນສະພາ).
- **ການປ່ຽນແປງດ້ານການພົວພັນວຽກງານ:** ບາດກ້າວທີ່ຊັດເຈນໄດ້ຮັບການຈັດຕັ້ງປະຕິບັດເພື່ອແກ້ໄຂບັນຫາ (ເຊັ່ນ: ການສ້າງຕັ້ງໜ່ວຍງານວິຊາການ, ຂະບວນການນິຕິກຳມີການເລີ່ມຕົ້ນ).
- **ການປ່ຽນແປງດ້ານນະໂຍບາຍ:** ການປ່ຽນແປງໃນກອບນິຕິກຳ (ເຊັ່ນ: ບັນຫາ ໃນນະໂຍບາຍທີ່ດິນແຫ່ງຊາດສະບັບໃໝ່, ການຮັບຮູ້ຢ່າງເປັນທາງການໂດຍລັດກ່ຽວກັບສິດຕາມປະເພນີ).
- **ການປ່ຽນແປງດ້ານການກະທຳ:** ມີການປັບປຸງຢ່າງຊັດເຈນສຳລັບພາກສ່ວນທີ່ກ່ຽວຂ້ອງຕົ້ນຕໍ (ເຊັ່ນ: ການບັງຄັບໃຊ້ກົດໝາຍໂດຍຜ່ານມາດຕະການທາງດ້ານນິຕິກຳ).

## 2.2 ວິທີການ

ການສຶກສາຂໍ້ມູນໃນປະຈຸບັນອີງຕາມຜົນການສຶກສາເອກະສານແລະການທົບທວນທາງວັນນະຄະດີແລະການສໍາພາດແບບເຊິ່ງໜ້າ ແລະເປີດກວ້າງກັບຜູ້ໃຫ້ສໍາພາດ ແລະຊ່ຽວຊານປະຈໍາຂະແໜງການຈໍານວນ 27 ທ່ານຢູ່ນະຄອນຫຼວງວຽງຈັນແລະຜ່ານທາງໂທລະສັບແລະລະບົບສະໄກ້ພ໌ (Skype). ພາກສ່ວນເຫຼົ່ານີ້ປະກອບດ້ວຍຕາງໜ້າຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດ (INGO), ອົງການຈັດຕັ້ງທາງສັງຄົມ (NPA) ແລະຫົວໜ່ວຍທຸລະກິດທີ່ບໍ່ຫວັງຜົນກໍາໄລ (NPB), ອົງການຜູ້ໃຫ້ທຶນແບບທະວິພາຄີແລະພາຫຸພາຄີ, ສະຖານທູດ, ກະຊວງ, ສະພາແຫ່ງຊາດແລະສະຖາບັນການສຶກສາ. ໃນຂະນະດຽວກັນ, ຜູ້ໃຫ້ສໍາພາດຈໍານວນໜຶ່ງມາຈາກກຸ່ມເຄືອຂ່າຍທີ່ດິນເຊັ່ນ: ກອງເລຂາກຸ່ມເຄືອຂ່າຍທີ່ດິນ, ຄະນະຊີ້ກໍາກຸ່ມເຄືອຂ່າຍທີ່ດິນ, ອົງການທີ່ເປັນສະມາຊິກຕົ້ນຕໍແລະອົງການສະໜັບສະໜູນ. ຜູ້ໃຫ້ສໍາພາດຫຼືຜູ້ໃຫ້ຂໍ້ມູນຖືກແບ່ງອອກເປັນ 2 'ວົງວຽນ'. ວົງວຽນທີໜຶ່ງປະກອບດ້ວຍບຸກຄົນທີ່ມາຈາກກຸ່ມເຄືອຂ່າຍທີ່ດິນເອງຊຶ່ງເປັນຜູ້ທີ່ ເຄີຍມີພາລະບົດບາດຫຼືຍັງຄົງມີພາລະບົດບາດໃນວຽກການຂໍການສະໜັບສະໜູນກ່ຽວກັບ NLP. ວົງວຽນທີສອງປະກອບມີພາກສ່ວນອື່ນໆຊຶ່ງເປັນຜູ້ທີ່ສັງເກດການຫຼືມີສ່ວນຮ່ວມໃນຂະບວນການ NLPໃນທາງໃດທາງໜຶ່ງ. ບົນພື້ນຖານຄວາມລະອຽດອ່ອນທາງການເມືອງກ່ຽວກັບຫົວຂໍ້ນີ້, ຜູ້ຕອບແບບສອບຖາມທັງໝົດຖືກຮັບປະກັນວ່າຂໍ້ມູນຂອງພວກເຂົາຈະຖືກເກັບເປັນຄວາມລັບ. ສະນັ້ນ, ບົດລາຍງານສະບັບນີ້ຈຶ່ງບໍ່ລະບຸຊື່ແລະສະຖາບັນຂອງຜູ້ໃຫ້ຂໍ້ມູນ.

ການສໍາພາດໄດ້ຮັບການຈັດຂຶ້ນພາຍໃຕ້ຄໍາຖາມແນະແນວ (ເບິ່ງເອກະສານແນບທ້າຍ), ຊຶ່ງໄດ້ຮັບການກໍານົດຂຶ້ນໂດຍຜ່ານການຮ່ວມມືກັບກຸ່ມເຄືອຂ່າຍທີ່ດິນ. ເຖິງຢ່າງໃດກໍ່ດີ, ຄໍາຖາມເຫຼົ່ານີ້ຖືວ່າເປັນ 'ເສັ້ນຝ້າຍສີແດງ' ແທນທີ່ຈະເປັນແບບສອບຖາມ, ຍ້ອນວ່າຕາມປົກກະຕິແລ້ວການສໍາພາດຖືກດໍາເນີນໃນລັກສະນະເປີດກວ້າງ. ສິ່ງນີ້ຈະເຮັດໃຫ້ພວກເຮົາສາມາດຕອບຮັບບັນຫາທີ່ອາດຈະເກີດຂຶ້ນ, ທົດສອບສົມມຸດຖານໃໝ່, ແລະກວດກາຄວາມຖືກຕ້ອງຂອງຂໍ້ມູນໃໝ່. ບົດສໍາພາດທັງໝົດໄດ້ຮັບການຈັດບັນທຶກແລະຈາກນັ້ນຈຶ່ງພິມເປັນເອກະສານໂດຍຜູ້ຂຽນບົດລາຍງານ, ສະນັ້ນ, ຈຶ່ງເຮັດໃຫ້ສາມາດໃສ່ລະຫັດແລະສາມາດວິເຄາະຂໍ້ມູນທາງດ້ານຄຸນນະພາບໂດຍນໍາໃຊ້ໂປຼແກຼມ TAMSAnalysis, ຊຶ່ງເປັນຊອບແວແບບເປີດກວ້າງ (ໂດຍບໍ່ເສຍຄ່າລິຂະສິດ).

# 3 ການເກັບກຳວຽກງານໂຄສະນາຂົນຂວາຍກ່ຽວກັບນະໂຍບາຍທີ່ດິນແຫ່ງຊາດຂອງກຸ່ມເຄືອຂ່າຍທີ່ດິນ

ພາກນີ້ນຳໃຊ້ວິທີການສຶກສາເອກະສານໂດຍການກຳນົດແຕ່ລະພາກສ່ວນທີ່ກ່ຽວຂ້ອງ, ພາລະບົດບາດແລະຄວາມຮັບຜິດຊອບຂອງພວກເຂົາທີ່ຕິດພັນກັບຂະບວນການກຳນົດນະໂຍບາຍທີ່ດິນແຫ່ງຊາດ. ພາກທີ 3.1 ເນັ້ນໜັກໃສ່ພາກສ່ວນທີ່ກ່ຽວຂ້ອງແລະຕຳແໜ່ງຂອງພວກເຂົາ. ພາກທທີ 3.2 ກຳນົດໄລຍະເວລາຂອງວຽກໂຄສະນາຂົນຂວາຍກ່ຽວກັບນະໂຍບາຍທີ່ດິນແຫ່ງຊາດຂອງກຸ່ມເຄືອຂ່າຍທີ່ດິນໄລຍະປີ 2011 ເຖິງ 2015. ສະນັ້ນ, ພາກທີ 3 ນີ້ຕອບສະໜອງສ່ວນໜຶ່ງຕໍ່ຈຸດປະສົງທີໜຶ່ງຂອງການສຶກສາຂໍ້ມູນຄັ້ງນີ້ຄື: ແນໃສ່ກຳນົດຮູບແບບຂອງກິດຈະກຳ, ປັດໄຈ ແລະພາກສ່ວນທີ່ກ່ຽວຂ້ອງທີ່ມີອຳນາດຕັດສິນບັນຫາແລະພວກກ່ຽວຕັດສິນບັນຫາແນວໃດກ່ຽວກັບການກຳນົດ ແລະເນື້ອໃນຂອງນະໂຍບາຍທີ່ດິນເຊັ່ນດຽວກັນກັບຄວາມຄິດແລະທັດສະນະຂອງພາກສ່ວນທີ່ກ່ຽວຂ້ອງກ່ຽວກັບນະໂຍບາຍທີ່ດິນແຫ່ງຊາດ. ຈາກນັ້ນ, ພາກທີ 4 ຈະດຳເນີນການວິເຄາະວ່າພາກສ່ວນທີ່ກ່ຽວຂ້ອງແລະກຸ່ມ LIWG ສາມາດແຊກແຊງຂະບວນການກຳນົດນະໂຍບາຍທີ່ດິນແຫ່ງຊາດແນວໃດແນ່ໃນຕົວຈິງ.

## 3.1 ພາກສ່ວນທີ່ກ່ຽວຂ້ອງ: ຄວາມສົນໃຈ, ຊັບພະຍາກອນແລະການປະຕິບັດວຽກງານ

ເພື່ອໃຫ້ຮັບຮູ້ພາກສ່ວນທີ່ກ່ຽວຂ້ອງ ໃນຂະບວນການ NLP ໃຫ້ດີຂຶ້ນກວ່າເກົ່າ, ໃນປີ 2013 ກຸ່ມ LIWG ຈຶ່ງໄດ້ດຳເນີນກິດຈະກຳກຳນົດທີ່ຕັ້ງແລະພາລະບົດບາດຂອງແຕ່ລະພາກສ່ວນຊຶ່ງເປັນກິດຈະກຳທີ່ຄົນສ່ວນໃຫ່ຍເອີ້ນວ່າ 'ການກຳນົດແຜ່ນທີ່ພາລະບົດບາດ', ທັງພາກລັດແລະເອກະຊົນທີ່ມີຄວາມສົນໃຈແລະ/ຫຼືມີພາລະບົດບາດທີ່ຫ້າວຫັນໃນຂະບວນການ NLP. ເຖິງແມ່ນວ່າກິດຈະກຳກຳນົດພາລະບົດບາດຈະເປັນກິດຈະກຳທີ່ມີເນື້ອໃນແບບລວມໆ ແລະບໍ່ສາມາດສະແດງໃຫ້ເຫັນວ່າພາລະບົດບາດເຫຼົ່ານັ້ນຈັດຕັ້ງປະຕິບັດແນວໃດລະຫວ່າງພາກສ່ວນທີ່ກ່ຽວຂ້ອງລະດັບຖາບັນ (ສົມທຽບກັບຂໍ້ 4.2), ແຕ່ວ່າກິດຈະກຳນີ້ສາມາດກຳນົດໃຫ້ເຫັນພາບລວມຂອງສະຖານບັນຕ່າງໆທີ່ກ່ຽວຂ້ອງກັບວຽກງານນີ້ (ເບິ່ງແຜນວາດ 3.1). ສະນັ້ນເນື້ອໃນດັ່ງກ່າວນີ້ຈຶ່ງສຸມໃສ່ກຸ່ມເປົ້າໝາຍຕົ້ນຕໍຂອງວົງມົນດ້ານໃນແລະດ້ານນອກແລະສຸມໃສ່ພາກສ່ວນທີ່ກ່ຽວຂ້ອງທີ່ຖືກຄັດເລືອກໄວ້ຢູ່ໃນວົງມົນຂ້າງນອກສຸດ.

### 3.1.1 ວົງມົນດ້ານໃນ

**ພັກປະຊາຊົນປະຕິວັດລາວ (ພັກ)** - ເຖິງແມ່ນວ່າພັກຖືກກຳນົດໄວ້ໃນຈຸດໃຈກາງຂອງກິດຈະກຳກຳນົດທີ່ຕັ້ງແລະພາລະບົດບາດ ຂອງກຸ່ມ LIWG ກໍ່ຕາມ, ແຕ່ວ່າເອກະສານບໍ່ມີຂໍ້ມູນເພີ່ມຕື່ມ ກ່ຽວກັບບັນຫານີ້. ສິ່ງນີ້ສອ່ງແສງໃຫ້ເຫັນບັນຫາທີ່ຮ້າຍແຮງດ້ານຄວາມຈຳກັດຂອງຈຳນວນຂໍ້ມູນຂ່າວສານທີ່ກຸ່ມ LIWG ແລະພາກສ່ວນອື່ນໆ ມີກ່ຽວກັບພາລະບົດບາດຕົວຈິງຂອງພັກໃນຂະບວນການຮ່າງເອກະສານ NLP. ພາຍໃນພັກ, ຄະນະກຳມະການກົມການເມືອງສູນກາງພັກ (PB) ແມ່ນອົງການຈັດຕັ້ງທີ່ກຳນົດນະໂຍບາຍຕົ້ນຕໍ. ພັກປະກອບດ້ວຍສະມາຊິກຈຳນວນ 11 ທ່ານຄື: ປະທານປະເທດ, ນາຍົກລັດຖະມົນຕີ, ປະທານສະພາແຫ່ງຊາດແລະລັດຖະມົນຕີປະຈຳກະຊວງທີ່ມີອຳນາດສູງສຸດ. ການເຂົ້າເຖິງ PB ມີຄວາມຫຍຸ້ງຍາກຫຼາຍ; ສະຖານທູດເອີຣົບກໍ່ມີການຕິດຕໍ່ພົວພັນທີ່ຈຳກັດກັບສະມາຊິກ PB ຈຳນວນໜຶ່ງ. ຍ້ອນວ່າສະພາແຫ່ງຊາດສາມາດຮັບຮອງເອົານະໂຍບາຍທີ່ຜ່ານການອະນຸມັດຈາກ PB ເທົ່ານັ້ນ, ຜູ້ຕອບຄຳຖາມຈຳນວນໜຶ່ງຈຶ່ງເຫັນວ່າ PB ແມ່ນພາກສ່ວນທີ່ມີອຳນາດສູງສຸດໃນການຕັດສິນບັນຫາ. ຜູ້ຕອບຄຳຖາມຄົນອື່ນໆຄິດວ່າ PB ສາມາດຕັດສິນບັນຫາໄດ້ໂດຍປາດສະຈາກການເຫັນດີເຫັນພ້ອມຂອງກະຊວງອື່ນໆທີ່ກ່ຽວຂ້ອງທີ່ບໍ່ໄດ້ເປັນສະມາຊິກຂອງ PB. ເຖິງຢ່າງໃດກໍ່ດີ, ຜູ້ຕອບຄຳຖາມໝົດທຸກຄົນເຫັນດີເປັນເອກະພາບກັນວ່າການຈັດພິມ 'ຮ່າງມະຕິຕົກລົງວ່າດ້ວຍທີ່ດິນຂອງກົມການເມືອງສູນກາງພັກ' ໃນປີ 2014 ແມ່ນຄວາມພະຍາຍາມຢ່າງເປີດເຜີຍເພື່ອກັບຄືນມາຄວບຄຸມຂະບວນການຮ່າງນະໂຍບາຍທີ່ດິນແຫ່ງຊາດອີກຄັ້ງໜຶ່ງ.

““ພັກຍາມໃດກໍ່ມີຄວາມສຳຄັນຫຼາຍກວ່າລັດຖະບານສະເໝີ”.”

(ຄູ່ຮ່ວມພັດທະນາ)

**ສະພາແຫ່ງຊາດ (NA)** - ແມ່ນອົງການທີ່ມີອຳນາດສູງສຸດຂອງລັດ (ຢ່າງໜ້ອຍບົນພື້ນຖານທາງດ້ານນິຕິກຳ), ສະພາແຫ່ງຊາດຈຳເປັນຕ້ອງຮັບຮອງເອົາ ນະໂຍບາຍຕ່າງໆຢ່າງເປັນທາງການເຊັ່ນ: ນະໂຍບາຍທີ່ດິນແຫ່ງຊາດ. ຜູ້ຕອບຄຳຖາມສ່ວນໃຫ່ຍເຫັນດີວ່າເປັນໄລຍະເວລາດົນນານແລ້ວທີ່ສະພາແຫ່ງຊາດປະຕິບັດພາລະບົດບາດຂອງຕົນພຽງແຕ່ເປັນພາກສ່ວນຈ້ຳກາແດງຮັບຮອງເອົາຜົນການຕັດສິນຂອງພັກ. ເຖິງຢ່າງໃດກໍ່ດີ, ໃນໄລຍະ 2 – 3 ປີທີ່ຜ່ານມາ, ສະພາແຫ່ງຊາດກາຍເປັນອົງການທີ່ມີຄວາມໝັ້ນໃຈຕົນເອງເພີ່ມຂຶ້ນເທື່ອລະກ້າວ. ຕົວຊີ້ວັດທີ່ເຂັ້ມຂອງ ຂອງຂະບວນການປ່ຽນແປງດັ່ງກ່າວນີ້ແມ່ນການປະຕິເສດຂອງສະພາແຫ່ງຊາດຕໍ່ຮ່າງນະໂຍບາຍທີ່ດິນແຫ່ງຊາດໃນປີ 2013 ຊຶ່ງເປັນເປັນຄວາມແປກໃຈຂອງຫຼາຍພາກສ່ວນ. ສະພາແຫ່ງຊາດປະກອບດ້ວຍຄະນະກຳມາທິການຈຳນວນ 9 ໜ່ວຍງານສະເພາະແຕ່ລະຂົງເຂດວຽກງານ, ໜຶ່ງໃນນັ້ນແມ່ນຄະນະກຳມາທິການດ້ານການເງິນ ແລະການວາງແຜນເສດຖະກິດ (EPFC) ເປັນຜູ້ຮັບຜິດຊອບຕົ້ນຕໍບັນຫາທີ່ດິນ (ເບິ່ງ 3.1.2).




**ແຜນວາດ. 3.1:** ພາກສ່ວນທີ່ກ່ຽວຂ້ອງໃນຂະບວນການ NLP (ແຜນວາດທີ່ສ້າງຂຶ້ນເອງອີງຕາມກິດຈະກຳກຳນົດທີ່ຕັ້ງຂອງພາກສ່ວນທີ່ກ່ຽວຂ້ອງໃນປີ 2013).

**ສຳນັກງານນາຍົກລັດຖະມົນຕີ (PMO)** - ໄດ້ມອບໝາຍຢ່າງເປັນທາງການໃຫ້ກະຊວງ MONRE ເປັນຜູ້ຮັບຜິດຊອບຮ່າງນະໂຍບາຍ NLP. ບົນພື້ນຖານຂັ້ນຕອນ ຕາມນິຕິກຳແລ້ວ, ເອກະສານນະໂຍບາຍທີ່ຮ່າງຂຶ້ນໂດຍຄະນະ

ກໍາມາທິການຮ່າງນະໂຍບາຍ ຂອງກະຊວງ MIONRE ຕ້ອງກ່ອນອື່ນສົ່ງເຖິງນາຍົກລັດຖະມົນຕີ (PM), ຊຶ່ງເປັນຜູ້ຕັດສິນວ່າຈະປະຕິເສດຫຼືຜ່ານເອກະສານແລ້ວສົ່ງເຖິງສະພາແຫ່ງຊາດ. ໃນເວລາດຽວກັນ, ນາຍົກລັດຖະມົນຕີແມ່ນສະມາຊິກກົມການເມືອງ, ສະນັ້ນຈຶ່ງເຮັດໃຫ້ມີໃຫ້ມີການແຊກແຊງຈໍານວນໜຶ່ງຕໍ່ຂະບວນການຮ່າງນະໂຍບາຍ NLP. ລະດັບຄວາມດຸ່ນດ່ຽງຕົວຈິງ ຂອງອໍານາດໃນການຕັດສິນບັນຫາລະຫວ່າງນາຍົກລັດຖະມົນຕີແລະພັກກ່ຽວກັບບັນຫານີ້ຍັງບໍ່ທັນຊັດເຈນ.

### 3.1.2 ວົງມົນດ້ານນອກ

**ຄະນະກໍາມະການແຫ່ງຊາດເພື່ອຊີ້ນໍາວຽກງານ NLP (NSC) -** ໃນປີ 2013, ຄະນະກໍາມະການ NSC ທີ່ປະກອບມີຕາງໜ້າຈາກ 10 ກະຊວງແລະສໍານັກງານນາຍົກ (ສ່ວນໃຫ່ຍແມ່ນລັດຖະມົນຕີຊ່ວຍ). ໂດຍທົ່ວໄປແລ້ວ, ຄະນະກໍາມະການດັ່ງກ່າວນີ້ບໍ່ແມ່ນຜູ້ຂຽນເອກະສານ ແຕ່ວ່າເປັນພຽງຜູ້ໃຫ້ທິດຊີ້ນໍາທາງດ້ານເນື້ອໃນຂອງນະໂຍບາຍ NLP ແລະຂໍ້ຕໍ່ທີ່ສ◌ໍາຄັນໂດຍກົງລະຫວ່າງຄະນະກໍາມະການຮ່າງນະໂຍບາຍ, ຝ່າຍໜຶ່ງ, ແລະຫ້ອງການກະຊວງແລະກົມການເມືອງ, ອີກຝ່າຍໜຶ່ງ. ໃນນາມທີ່ເປັນສະຖາບັນທີ່ມີອໍານາດສູງຂອງລັດເຊັ່ນ: ກະຊວງການເງິນ, ການອຸດສະຫະກໍາແລະການຄ້າ, ກະຊວງປ້ອງການປະເທດແລະກະຊວງປ້ອງກັນຄວາມສະຫງົບ, ຜູ້ຕອບຄໍາຖາມຈໍານວນໜຶ່ງເຂົ້າໃຈວ່າຄະນະກໍາມະການ NSC ຈະມີບົດບາດສໍາຄັນນອກເໜືອຈາກພັກແລະສະພາແຫ່ງຊາດໃນເວລາຕັດສິນບັນຫາກ່ຽວກັບເນື້ອໃນຂອງນະໂຍບາຍ NLP ໃນໄລຍະສຸດທ້າຍ.

**ຄະນະກໍາມະການຮ່າງນະໂຍບາຍ NLP (ພາຍໃຕ້ກະຊວງ MONRE) -**ກະຊວງ MONRE ໄດ້ຮັບມອບໝາຍຢ່າງເປັນທາງການຈາກສໍານັກງານນາຍົກໃຫ້ຮ່າງນະໂຍບາຍ NLP. ເພື່ອປະຕິບັດໜ້າທີ່ນີ້ໃຫ້ສໍາເລັດ, ກະຄະນະກໍາມະການຮ່າງນະໂຍບາຍໄດ້ຮັບການສ້າງຕັ້ງຂຶ້ນຊຶ່ງປະກອບດ້ວຍຕາງໜ້າຈາກກົມກອງອ້ອມຂ້າງກະຊວງ MONRE ແລະຕາງໜ້າຈາກກະຊວງທີ່ກ່ຽວຂ້ອງ. ແຕ່ວ່າ, ໃນເບື້ອງຕົ້ນຄະນະກໍາມະນາຮ່າງນະໂຍບາຍຍັງບໍ່ທັນມີຄວາມຮູ້ແລະທັກສະໃນການຮ່າງນະໂຍບາຍ. ສະນັ້ນຄະນະກໍາມະການດັ່ງກ່າວນີ້ຈະຂໍ້ຄໍາແນະນໍາແລະສະໜັບສະໜູນຈາກອົງການ GIZ (ຊຶ່ງເປັນປະຕິບັດໜ້າທີພາຍໃນກະຊວງ MONRE) ແລະກຸ່ມ LIWG. ເຖິງແມ່ນວ່າມີໜ້າທີ່ຄວາມຮັບຜິດຊອບໃນການຮ່າງນະໂຍບາຍ NLP ກໍ່ຕາມ, ແຕ່ວ່າຄະນະກໍາມະນາດັ່ງກ່າວນີ້ມີພາບະບົດບາດທາງດ້ານວິຊາການເທົ່ານັ້ນ, ໂດຍປາດສະຈາກອໍານາດຕົວຈິງ ສໍາລັບການຕັດສິນເນື້ອໃນຂັ້ນສຸດທ້າຍຂອງນະໂຍບາຍ. ອີງຕາມຕາງໜ້າຂອງກະຊວງ MONRE, ຄໍາຄິດເຫັນຈາກກຸ່ມ LIWG ຖືກຕອບຮັບຢ່າງອົບອຸ່ນ ແຕ່ບໍ່ມີຜົນກະທົບຫຍັງໝົດຍ້ອນວ່າຄະນະກໍາມະການ NSC ແລະ/ຫຼືກົມການເມືອງຈະປະຕິບັດຕາມເຫດຜົນຂອງພວກເຂົາເອງ.

> "‘‘ຍັງບໍ່ທັນມີຄວາມຈະແຈ້ງເທື່ອ ສໍາລັບຄະນະກໍາມະການຮ່າງນະໂຍບາຍວ່າຈະພິຈາລະນາເອົາຄໍາຄິດເຫັນຈາກກຸ່ມເຄືອຂ່າຍທີ່ດິນໄດ້ແນວໃດ. ການຕັດສິນບັນຫາຂອງກົມການເມືອງມີຄວາມສໍາຄັນຫຼາຍກວ່າ’’"
>
> (ຕາງໜ້າກະຊວງຊັບພະຍາກອນທໍາມະຊາດແລະສິ່ງແວດລ້ອມ)

**ຄະນະກ◌ໍາມາທິການດ້ານການເງິນແລະການວາງແຜນເສດຖະກິດຂອງສະພາແຫ່ງຊາດ (EPFC) -** ຄະນະກໍາມາທິການ EPFC ປະກອບດ້ວຍສະມາຊິກສະພາ ແລະພະນັກງານສະພາແຫ່ງຊາດຈໍານວນ 20 ທ່ານແລະເປັນປະທານໂດຍທ່ານນາງສຸວັນເພັງ. ອີງຕາມພາລະບົດບາດຂອງໜ່ວຍງານນີ້, ໃນປີ 2012 ທ່ານນາງ ສຸວັນເພັງ ຈຶ່ງເຊີນກຸ່ມ LIWG ໃຫ້ສະໜັບສະໜູນຂະບວນການຮ່າງນະໂຍບາຍ MLP ຢ່າງຕັ້ງໜ້າ (ເບິ່ງຂໍ້ 3.2). ຜູ້ຕອບແບບສອບຖາມຈໍານວນໜຶ່ງເຫັນດີວ່າຄະນະກໍາມາທິການ EPFC ແມ່ນກໍາລັງຂັບເຄື່ອນທີ່ຢູ່ເບື້ອງຫຼັງການປະຕິເສດຂອງສະພາແຫ່ງຊາດຕໍ່ນະໂຍບາຍທີ່ດິນແຫ່ງຊາດໃນທ້າຍປີ 2013. ນອກນັ້ນ, ຄະນະກໍາມາທິການ EPFC ແມ່ນພາກສ່ວນທີ່ມີປະສິດທິພາບສູງໃນການຮັບປະກັນທຶນຊ່ວຍເຫຼືອແລະການສະໜັບສະໜັບຈາກພາກນອກຈາກ ຄູ່ຮ່ວມພັດທະນາແລະພາກສ່ວນອື່ນໆທີ່ກ່ຽວຂ້ອງ. ສິ່ງນີ້ມີການປ່ຽນແປງຫຼັງຈາກການສ້າງຕັ້ງກອງເລຂາການຄຸ້ມຄອງໂຄງການແລະ

ການຮ່ວມມືສາກົນຂອງສະພາແຫ່ງຊາດ (ICPMS). ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2014 ໂດຍການສະໜັບສະໜູນຈາກຜູ້ໃຫ້ທຶນ, ຈຸດປະສົງຂອງກອງເລຂາແມ່ນໃສ່ປັບປຸງຄວາມອາດສາມາດທາງດ້ານນິຕິກຳ ຂອງສະພາແຫ່ງຊາດ ແລະເພື່ອສ້າງຄວາມເຂັ້ມແຂງປະສິດທິພາບຂອງສະພາ. ໃນປະຈຸບັນ, ກອງເລຂາກາຍເປັນຊ່ອງທາງໃນການຕິດຕໍ່ພົວພັນທັງໝົດລະຫວ່າງພາກນອກພາຍນອກແລະສະພາແຫ່ງຊາດ. ສະນັ້ນ, ຜູ້ໃຫ້ທຶນແລະອົງການຈັດຕັ້ງທາງສັງຄົມທັງໝົດຈຳເປັນຕ້ອງຜ່ານກອງເລຂາ ICPMS ໃນກໍລະນີທີ່ພວກເຂົາຕ້ອງການຮ່ວມມືຫຼືສະເໜີທຶນຮອນໃຫ້ສະພາແຫ່ງຊາດຫຼືໃຫ້ໜຶ່ງໃນຄະນະມາມິການຂອງສະພາແຫ່ງຊາດ, ແລະເຊັ່ນດຽວກັນກັບ ໃນກໍລະນີທີ່ສະພາຕ້ອງການຄວາມຊ່ວຍເຫຼືອຈາກພາຍນອກ. ກົນໄກນີ້ບໍ່ພຽງແຕ່ຍົກລະດັບຄວາມໂປ່ງໃສພຽງເທົ່ານັ້ນ, ແຕ່ວ່າມັນຍັງນຳໄປສູ່ການກະຈ່າຍທຶນຊ່ວຍເຫຼືອຈາກພາຍນອກ ຢ່າງສະເໝີພາບກັນພາຍໃນແຕ່ລະຄະນະກຳມາທິການຂອງສະພາແຫ່ງຊາດ. ສະນັ້ນ, ຄະນະກຳມາທິການ ICPMS ກາຍເປັນປັດໄຈສຳຄັນສຳລັບຄວາມເຕີບໂຕຂອງສະພາແຫ່ງຊາດໃນການກຳນົດນະໂຍບາຍເຖິງແມ່ນວ່າບາງພາກສ່ວນ ອາດຈະບໍ່ດີໃຈນຳຄວາມເຕີບໂຕດັ່ງກ່າວນີ້ກໍ່ຕາມ.

### 3.1.3 ວົງມົນດ້ານນອກສຸດ

ນອກຈາກກຸ່ມ LIWG ທີ່ມີສະມາຊິກແລະຜູ້ສະໜັບສະໜູນທີ່ແຕກຕ່າງກັນ, ວົງມົນດ້ານນອກສຸດຍັງປະກອບດ້ວຍສະຖາບັນອື່ນໆທີ່ມີຄວາມສົນໃຈແລະມີສ່ວນຮ່ວມໃນຂະບວນການກຳນົດນະໂຍບາຍ NLP.

**ໜ່ວຍງານຍ່ອຍຂອງກຸ່ມເຄືອຂ່າຍທີ່ດິນ (LSSWG)** - ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2013 ຊຶ່ງເປັນໜ່ວຍງານຍ່ອຍຂອງໜ່ວຍງານຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ, ໜ່ວຍງານ LSSWG ແມ່ນໜ່ວຍງານທີ່ປະກອບມີຫຼາຍພາກສ່ວນທີ່ນຳເອົາແຕ່ລະພາກສ່ວນຈາກຫຼາຍຂະແໜງການທີ່ມີຄວາມສົນໃຈກ່ຽວກັບເລື່ອງທີ່ດິນເຊັ່ນ: ກະຊວງ, ອົງການ INGO, ອົງການຈັດຕັ້ງທາງສັງຄົມ/ອົງການທີ່ບໍ່ຫວັງຜົນກຳໄລ, ຕາງໜ້າຜູ້ໃຫ້ທຶນ, ສະຖາບັນຄົ້ນຄວ້າ, ແລະຫືອໜ່ວຍທຸລະກິດເອກະຊົນ. ໜ່ວຍງານ LSSWG ເປັນປະທານຮ່ວມໂດຍກະຊວງ MONRE, ອົງການ GIZ ແລະກຸ່ມ LIWG (ຕາງໜ້າຢ່າງເປັນທາງການໂດຍອົງການ CARE). ໜ່ວຍງານນີ້ແບ່ງອອກເປັນ 3 ກຸ່ມສະເພາະຄື: ກຸ່ມການວາງແຜນນຳໃຊ້ທີ່ດິນ; ກຸ່ມຂຶ້ນທະບຽນທີ່ດິນແລະການອອກກຳມະສິດທີ່ດິນ; ແລະກຸ່ມນະໂຍບາຍແລະຄໍ້າປະກັນທີ່ດິນ. ນັບແຕ່ເລີ່ມຕົ້ນໃນປີ 2013, ໜ່ວຍງານ LSSWG ໄດ້ຈັດກອງປະຊຸມຢ່າງເປັນທາງການຈຳນວນ 3 ຄັ້ງພຽງເທົ່ານັ້ນ, ແລະການແບ່ງໜ້າທີ່ຄວາມຮັບຜິດຊອບພາຍໃນກຸ່ມຍັງບໍ່ທັນຈະແຈ້ງ. ເຊັ່ນດຽວກັນກັບຂົງເຂດວຽກງານຂອງກຸ່ມໃນການສະເໜີບົດສະເໜີໂຄງການເຖິງລັດຖະບານ. ອີກບັນຫາໜຶ່ງທີ່ສຳຄັນ, ໜ່ວຍງານນີ້ບໍ່ມີງົບປະມານສຳລັບຈັດຕັ້ງປະຕິບັດກິດຈະກຳຂອງແຕ່ລະກຸ່ມສະເພາະ, ນີ້ໝາຍຄວາມວ່າສະມາຊິກຕ້ອງຮັບຜິດຊອບຄ່າໃຊ້ຈ່າຍດ້ວຍຕົນເອງ - ນີ້ແມ່ນສິ່ງກີດຂວາງທີ່ເຫັນໄດ້ຢ່າງຊັດເຈນສຳລັບອົງການຈັດຕັ້ງຂອງປະເທດລາວສ່ວນໃຫ່ຍ. ສະນັ້ນ, ຜູ້ຕອບແບບສອບຖາມຈຳນວນໜຶ່ງຈຶ່ງເຫັນວ່າໜ່ວຍງານ LSSWG ບໍ່ມີປະສິດທິພາບແລະບໍ່ສອດຄ່ອງກັບ ຂະບວນການທີ່ມີໃນປະຈຸບັນເຊັ່ນ: ການສົນທະນາກັນ ກ່ຽວກັບ NLP. ຜູ້ຕອບຄຳຖາມອື່ນໆເຫັນວ່າໜ່ວຍງານ LSSWG ແມ່ນກາລະໂອກາດເພີ່ມຕື່ມໃນການແລກປ່ຽນ, ຊຶ່ງຈະຊ່ວຍຂະຫຍາຍພື້ນທີ່ການໂຕ້ຖຽງກັນນອກເໜືອຈາກໃນກອງປະຊຸມຢ່າງເປັນທາງການ.

> "“ເຖິງແມ່ນວ່າໜ່ວຍງານLSSWGຈະຍັງບໍ່ທັນຫ້າວຫັນ, ແຕ່ວ່າໜ່ວຍງານນີ້ແມ່ນພາກສ່ວນໜຶ່ງທີ່ສຳຄັນໃນການສົນທະນາແບບບໍ່ເປັນທາງການແລະນອກນັ້ນຍັງເປັນຈຸດຢືນທີ່ໜັກແໜ້ນສຳລັບປະທານຮ່ວມ.”"
>
> (ຄູ່ຮ່ວມພັດທະນາ)

**ອົງການຮ່ວມມືສາກົນ ຂອງປະເທດເຢຍລະມັນ (GIZ)** - ອົງການ GIZແມ່ນໜຶ່ງໃນພັນທະມິດຕົ້ນຕໍ ຂອງກຸ່ມ LIWG ແລະເປັນແຫຼ່ງຂໍ້ມູນທີ່ສຳຄັນເປັນເວລາຫຼາຍປີແລ້ວ. ຍ້ອນສາຍພົວພັນການຮ່ວມມືອັນຍາວນານກັບກະຊວງ MONRE, ອົງການ GIZ ແມ່ນອົງການຈັດຕັ້ງພາຍນອກ ອົງການດຽວທີ່ຖືກເຊີນເຂົ້າຮ່ວມກອງປະຊຸມພາຍ

ໃນຂອງລັດຖະບານ, ເຊັ່ນ: ກອງປະຊຸມປຶກສາຫາລືກ່ຽວກັບການຮ່າງນະໂຍບາຍ NLP. ໂຄງການຫຼ້າສຸດ ກ່ຽວກັບທີ່ດິນແມ່ນໂຄງການຄຸ້ມຄອງທີ່ດິນແລະການກະຈ່າຍອຳນາດໃນການວາງແຜນ (LMDP) ຊຶ່ງເລີ່ມຕົ້ນໃນເດືອນມັງກອນ 2015 ໂດຍສົມທົບກັບກົມການຄຸ້ມຄອງທີ່ດິນຂອງກະຊວງ MONRE. ສຳລັບວຽກງານນີ້, ອົງການ GIZ ໄດ້ຈັດສັນພະນັກງານແລະຫ້ອງການຢູ່ພາຍໃນອາຄານຂອງກະຊວງ MONRE. ໃນໄລຍະຫຼາຍປີທີ່ຜ່ານມາ, ອົງການ GIZ ໄດ້ແລກປ່ຽນຫຼາຍທັດສນະນະກັບຜູ້ຕັດສິນບັນຫາ, ໂດຍຜ່ານກອງປະຊຸມສຳມະນາສຳລັບກະຊວງ, ພະນັກງານລັດ, ອົງການຈັດຕັ້ງທາງສັງຄົມແລະນັກຄົ້ນຄ້ວາວິໄຈ. ໃນນາມທີ່ເປັນອົງການຮ່ວມມືຂອງລັດຖະບານປະເທດເຢຍລະມັນ, ອົງການ GIZ ໄດ້ເຮັດວຽກການຮ່ວມມື ຢ່າງໄກ້ຊິດກັບ…..

**ສະຖານທູດເຢຍລະມັນ** -ເປັນຜູ້ໃຫ້ທຶນແບບສອງຝ່າຍທີ່ໃຫ່ຍທີ່ສຸດ ອັນດັບສອງໃນສປປລາວແລະມີຄວາມສົນໃຈເປັນພິເສດກ່ຽວກັບນະໂຍບາຍທີ່ດິນ, ສະຖານທຸດເຢຍລະມັນອາດຈະແມ່ນພັນທະມິດທີ່ສຳຄັນທີ່ສຸດຂອງກຸ່ມ LIWG. ສະຖານທູດໄດ້ (ຮ່ວມ)ຈັດພິມຄຳຄິດເຫັນແລະຂໍ້ສະເໜີຂອງກຸ່ມ, ສະນັ້ນ, ສິ່ງນີ້ຖືກວ່າແມ່ນການສະໜັບສະໜັບສະໜູນແລະການປົກປ້ອງ ລະດັບສະຖາບັນ. ນອກນັ້ນ, ພະນັກງານສະຖານທູດຍັງນຳໃຊ້ເວທີການທູດຂອງຕົນເຂົ້າໃນການຕິດຕໍ່ພົວພັນກັບພະນັກງານລະດັບສູງທີ່ກຸ່ມ LIWG ບໍ່ສາມາດເຂົ້າເຖິງໄດ້.

**ສະຫະພາບເອີຣົບ (EU)** - ມີຄວາມແຕກຕ່າງຈາກອົງການ GIZ ແລະສະຖານທູດເຢຍລະມັນ, ການເຮັດວຽກຂອງ EU ໃນສປປລາວບໍ່ພຽງແຕ່ກ່ຽວຂ້ອງໂດຍກົງກັບຂະບວນການ NLP ເທົ່ານັ້ນ, ແຕ່ EU ຍັງຕິດຕໍ່ພົວພັນຢ່າງເປັນປົກກະຕິກັບກອງເລຂາ LIWG ເພື່ອສົ່ງຕໍ່ຂໍ້ມູນຂ່າວສານຂອງກຸ່ມໂດຍຜ່ານຊ່ອງທາງຂອງຕົນເອງ. EU ໄດ້ຍົກໃຫ້ເຫັນຄວາມກັງວົນຂອງຕົນກ່ຽວກັບການເວນຄືນທີ່ດິນເພື່ອເປົ້າໝາຍຂອງພາກເອກະຊົນແລະການຈ່າຍຄ່າຊົດເຊີຍໃນກອງປະຊຸມປຶກສາຫາລືດ້ານສິດທິມະນຸດປະຈຳປີ 2004 ຕໍ່ລັດຖະບານແຫ່ງສປປລາວ.

**ອົງການການຮ່ວມມືຂອງປະເທດສະວິດ (SDC)** - ໃນຂະນະທີ່ອົງການ SDC ຍັງບໍ່ທັນເປັນພັນທະມິດທີ່ໄກ້ຊິດຂອງກຸ່ມ LIWG, ຄວາມໝາຍຄວາມສຳຄັນອົງການນີ້ຈະເພີ້ມທະວີຂຶ້ນໃນອະນາຄົດອັນໄກ້. ໂດຍມີແຜນງານການປົກຄອງທີ່ດິນປະຈຳພາກພື້ນແມ່ນ້ຳຂອງ (MRLG), ໃນໄລຍະບໍ່ດົນມານີ້ອົງການ SDC ໄດ້ເປີດແຜນງານພັດທະນາຂະໜາດໃຫ່ຍກ່ຽວກັບທີ່ດິນຊຶ່ງກວມເອົາສປປລາວ, ກຳປູເຈຍ, ມຽນມ້າແລະຫວຽດນາມ. ໃນໄລະການສຶກສາຂໍ້ມູນຄັ້ງນີ້, ກຸ່ມ LIWG ໄດ້ປະສົບຜົນສຳເລັດໃນການສະເໜີຂໍທຶນຈາກແຜນງານດັ່ງກ່າວນີ້. ນອກຈາກແຜນງານນີ້ແລ້ວ, ອົງການ SDC ຍັງມີອີກ 2 ໂຄງການທີ່ກ່ຽວຂ້ອງກັບທີ່ດິນໃນປະເທດລາວຄື: ໂຄງການຂໍ້ມູນແລະໂຄງການ Lao DECIDE Info (ຮ່ວມກັບອົງກນ cde) ແລະໂຄງການRights-LINK (ຮ່ວມກັບອົງການVFI).

**ຜູ້ໃຫ້ທຶນແບບທະວິພາຄີແລະພາຫຸພາຄີອື່ນໆ**ທີ່ມີຄວາມສົນໃຈແລະການຕັດສິນບັນຫາກ່ຽວກັບທີ່ດິນລວມມີປະເທດອັງກິດ, ປະເທດຟິນແລນແລະສະຖານທູດຝັ່ງ, ເຊັ່ນດຽວກັນກັບອົງການ UNDP, UNIPP, PEI, FAO, WB, ແລະ ADB.ເຖິງຢ່າງໃດກໍ່ດີ, ໃນໄລຍະສຶກສາຂໍ້ມູນຄັ້ງນີ້ການຕິດຕໍ່ພົວພັນກັບພາກສ່ວນນີ້ຍັງມີຄວາມຈຳກັດ. **ພາກສ່ວນທີ່ກ່ຽວຂ້ອງອື່ນໆ**ລວມມີສະຖາບັນການສຶກສາ, ພາກເອກະຊົນ, ສື່ມວນຊົນແລະບຸກຄົນທີ່ກ່ຽວຂ້ອງ.

## 3.2 ໄລຍະເວລາໂດຍຫຍໍ້ກ່ຽວກັບວຽກການຂໍການສະໜັບສະໜູນ ກ່ຽວກັບນະໂຍບາຍທີ່ດິນແຫ່ງຊາດ (NLP) ຂອງກຸ່ມເຄືອຂ່າຍທີ່ດິນ

2011 **ເດືອນພຶດສະພາ - ທັນວາ:** ກຸ່ມ LIWG ໄດ້ຈັດກອງປະຊຸມສຳມະນາ ຈຳນວນໜຶ່ງກ່ຽວກັບການອອກກຳມະສິດທີ່ດິນຊຸມຊົນ (CLT), ໂດຍມີສະມາຊິກລະດັບສູງເຂົ້າຮ່ວມນຳ. ແຕ່ວ່າກຸ່ມ LIWG ຍັງບໍ່ທັນສາມາດເຂົ້າເຖິງການຮ່າງນະໂຍບາຍ NLP. ໃນຕອນທ້າຍຂອງປີ, ກຸ່ມ LIWG ໄດ້ເລີ່ມຕົ້ນຈັດຕັ້ງປະຕິບັດຄຳແນະນຳຮ່ວມກັນກ່ຽວກັບ CLT.

2012 **ເດືອນມັງກອນ - ມີນາ:** ໄດ້ຈັດກອງປະຊຸມປຶກສາຫາລືຢ່າງເຂັ້ມຂຸ້ນກ່ຽວກັບຈຸດຢືນຮ່ວມກັນຂອງກຸ່ມ LIWG ກ່ຽວກັບເລື່ອງ CLT, ສົ່ງຜົນໃຫ້ມີການຈັດພິມບົດລາຍງານ CLT, ຊຶ່ງສ້າງຂຶ້ນຈາກກໍລະນີສຶກສາຂອງ ອົງການຈັດຕັ້ງທີ່ເປັນສະມາຊິກແລະຍັງມີຂໍ້ແນະນຳຈຳນວນໜຶ່ງ. ກອງປະຊຸມຢູ່ທະນາຄານໂລກເຂົ້າຮ່ວມໂດຍຄະນະກຳມາທິການທົບທວນນະໂຍບາຍທີ່ດິນແຫ່ງຊາດ, ຊຶ່ງເປັນກອງປະຊຸມໜຶ່ງທີ່ມີຜົນໄດ້ຮັບທາງບວກ. ກຸ່ມ LIWG ໄດ້ຕິດຕໍ່ພົວພັນເປັນຄັ້ງທຳອິດກັບຫົວໜ້າຄະນະກຳມາທິການຮ່າງນະໂຍບາຍ NLP.

**ເດືອນພຶດສະພາ:** ກະຊວງ MONRE (RIC) ແລະ TERRA ໄດ້ເຊີນກຸ່ມ LIWG ເຂົ້າຮ່ວມກອງປະຊຸມກ່ຽວກັບທີ່ດິນຊຶ່ງເປັນກອງປະຊຸມທີ່ຜູ້ຕາງໜ້າອົງການ CSO ນຳໃຊ້ສຳລັບຖະແຫຼງການແບບຕັ້ງໜ້າ (8-10 ພຶດສະພາ).

**ເດືອນກໍລະກົດ - ສິງຫາ:** ບົນພື້ນຖານຄຳຮ້ອງຂໍຂອງອົງການ GIZ, ກະຊວງ MONRE ໄດ້ເຊີນກຸ່ມ LIWG ເຂົ້າຮ່ວມປຶກສາຫາລືກ່ຽວກັບ NLP, ແຕ່ວ່າກະຊວງໄດ້ປະຕິເສດຄຳຮ້ອງຂໍຂອງກຸ່ມ LIWG ກ່ຽວກັບການບໍ່ອະນຸຍາດໃຫ້ມີການເວນຄືນທີ່ດິນສຳລັບຈຸດປະສົງຂອງພາກລັດ (6 ກໍລະກົດ). ຄວາມພະຍາຍາມທີ່ລົ້ມເຫຼວໃນການສ້າງຖະແຫຼງການຮ່ວມກັນລະຫວ່າງກຸ່ມ LIWG - ອົງການ GIZ. ສະຫະພາບເອີຣົບສ້າງກິດຈະກຳຂະໜາດນ້ອຍຈຳນວນໜຶ່ງໃນກອງປະຊຸມໂຕະມົນ. ໃນກາງປີ 2012, ໃນທີ່ສຸດກຸ່ມ LIWG ກໍ່ສາມາດເຂົ້າເຖິງຮ່າງນະໂຍບາຍ NLP ສະບັບຫຼ້າສຸດ (ສະບັບທີ 8) ແລະແປເປັນພາສາອັງກິດ - ແລະໄດ້ຮັບຮູ້ວ່າເກືອບບໍ່ມີເນື້ອໃນໃດເລີຍທີ່ເວົ້າກ່ຽວກັບສິດທິແລະຂໍ້ສະເໜີຂອງກຸ່ມ LIWG ກ່ຽວກັບເລື່ອງ CLT ກໍ່ບໍ່ຖືກລວມເຂົ້າໃນເນື້ອໃນຂອງນະໂຍບາຍ. “ສິດທິໃນການປະຕິເສດ“ (ຈາກພາກສ່ວນ FPIC) ໄດ້ຮັບການສັງລວມເຂົ້າໃນເອກະສານແຕ່ວ່າຖືກຕັດອອກໃນໄລຍະຕໍ່ມາ. ສະມາຊິກກຸ່ມ LIWG ທົບທວນຄືນເອກະສານດັ່ງກ່າວນັ້ນ, ສັງລວມຄຳຄິດເຫັນຂອງຕົນແລະເລີ່ມຕົ້ນສະແດງຄຳຄິດເຫັນແລະຂໍ້ສະເໜີຜ່ານຫຼາຍຊ່ອງທາງ. ໃນຂະນະດຽວກັນ, ອົງການ GIZ ກໍ່ສະເໜີຄຳຄິດເຫັນເຊັ່ນກັນແລະເຮັດວຽກໂດຍກົງກັບກະຊວງ MONRE.

**ເດືອນກັນຍາ - ທັນວາ:** ຮ່າງນະໂຍບາຍ NLP ທີ່ລວມມີຄຳແນະນຳຈາກອົງການ GIZ, ແຕ່ວ່າບໍ່ໄດ້ລວມເອົາຄຳແນະນຳຈາກກຸ່ມ LIWG ເລີຍ. ເອກະສານສະບັບຮ່າງທັງໝົດຍັງຄົງມີຈຸດອ່ອນດ້ານສິດທິພົນລະເຮືອນ. ຈາກນັ້ນ, ນາຍົກລັດຖະມົນຕີປະຕິເສດເອກະສານສະບັບດັ່ງກ່າວນັ້ນແລະຈຶ່ງບໍ່ສາມາດສົ່ງເຖິງສະພາແຫ່ງຊາດເພື່ອຂໍອະນຸມັດ. ໃນປະໂຫຍກເລີ່ມຕົ້ນກ່າວວ່າ: ກະຊວງ MONRE ໄດ້ເຊີນກຸ່ມ LIWG ເພື່ອໃຫ້ສະໜັບສະໜູນວຽກດັດແກ້ຮ່າງນະໂຍບາຍ NLP, ຊຶ່ງສົ່ງຜົນໃຫ້ມີການຮ່ວມມືຢ່າງໃກ້ຊິດແລະເຂັ້ມຂຸ້ນ. ໃນເວລາດຽວກັນ, ສະພາແຫ່ງຊາດເລີ່ມຕົ້ນໃຫ້ຄວາມສົນໃຈຫຼາຍຂຶ້ນໃນຂະບວນການ NLP, ຈຶ່ງເຮັດໃຫ້ມີການຕິດຕໍ່ພົວພັນເປັນຄັ້ງທຳອິດກັບຄະນະກຳມາທິການ EPFC. ຕາງໜ້າກຸ່ມ LIWG ໄດ້

ຖືກເຊີນຢ່າງຕໍ່ເນື່ອງໃຫ້ສະແດງຄໍາເຫັນຫຼືກະກຽມເນື້ອໃນຈໍານວນໜຶ່ງ ໃຫ້ຄະນະກໍາມາທິການ EPFC.

ການຫາຍຕົວໄປແບບຖືກບັງຄັບຂອງທ່ານ ສົມບັດ ສົມພອນ ແລະການສົ່ງທ່ານນາງ ແອນໂຊຟີກິນໂດຣສ໌ ອອກປະເທດ ຫຼັງຈາກກອງປະຊຸມປະຊາຊົນອາຊີ - ເອີຣົບໄດ້ສົ່ງສັນຍານເຕືອນໃຫ້ອົງການ NGO ແລະ ປະຊາຄົມຜູ້ໃຫ້ທຶນ. ອົງການຈໍານວນໜຶ່ງ (ສ່ວນໃຫ່ຍເປັນອົງການຂອງລາວ)ໄດ້ຖອນຕົວອອກຈາກການ ໂຕ້ວາທີກັນກ່ຽວກັບ NLP ແລະກຸ່ມ LIWG. ໃນໄລຍະຫຼາຍເດືອນຕໍ່ມາ, ກຸ່ມ LIWG ເກືອບຈະລົ້ມ ສະຫຼາຍ.

2013 **ເດືອນມັງກອນ:** ປະໂຫຍດປົດທ້າຍມີຄື: ການຕິດຕໍ່ພົວພັນກັບຄະນະກໍາມາທິການ EPFC ສິ້ນສຸດລົງ ຢ່າງກະທັນຫັນ, ແລະກຸ່ມ LIWG ກໍ່ຖືກຈັບຕາເບິ່ງຢ່າງຕໍ່ເນື່ອງຈາກລັດ. ເຖິງຢ່າງໃດກໍ່ດີ, ກຸ່ມໄດ້ຕັດສິນ ໃຈສືບຕໍ່ວຽກໂຄສະນາຂົນຂວາຍຂອງຕົນກ່ຽວກັບ NLP, ໂດຍຜ່ານການພິຈາລະນາວ່າເປັນເລື່ອງລະ ອຽດອ່ອນຂອງກິດຈະກໍາທັງໝົດຂອງຕົນ.

**ເດືອນມີນາ - ມິຖຸນາ:** ໃນກອງປະຊຸມທີ່ເປັນປະທານໂດຍ ລັດຖະມົນຕີຊ່ວຍວ່າການກະຊວງ MONRE ແລະປະທານຄະນະກໍາມາທິການ EPFC, ສິດທິໃນການປະຕິເສດຖືກລວມເຂົ້າໃນເນື້ອໃນເອກະສານ NLP ອີກຄັ້ງໜຶ່ງ, ໂດຍການໃຫ້ນິຍາມຄໍາວ່າ ,ຄວາມເຫັນດີເຫັນພ້ອມ' ແມ່ນສຽງສ່ວນໃຫ່ຍຂອງ 2/3. ຈາກນັ້ນ, ຕາງໜ້າກຸ່ມ LIWG ໄດ້ປະຊຸມກັບຫົວໜ້າຄະນະຮ່າງນະໂຍບາຍກ່ຽວກັບບັນຫານີ້ຊຶ່ງຈາກນັ້ນ ໄດ້ມີດັດແກ້ຄໍານິຍາມຂອງການເຫັນດີເຫັນພ້ອມມາເປັນສຽງສ່ວນໃຫ່ຍຂອງ ¾. ທ້າຍສຸດ, ສິດທິໃນການ ປະຕິເສດຖືກຕັດອອກອີກຄັ້ງໜຶ່ງໃນກອງປະຊຸມລະດັບສູງ.

**ເດືອນພຶດສະພາ:**ກຸ່ມ LIWG ນໍາໃຊ້ຊ່ອງທາງຂອງສະພາແຫ່ງຊາດເພື່ອເຜີຍແຜ່ເອກະສານ NLP.

**ເດືອນກໍລະກົດ:**ສະມາຊິກສະພາແຫ່ງຊາດປະຕິເສດຮ່າງນະໂຍບາຍ NLP, ຄວາມຈິງແລ້ວ, ເອກະສານ ໄດ້ຮັບການແຈກຢາຍໃນເດືອນພຶດສະພາມີຄວາມສໍາຄັນຫຼາຍສໍາລັບໃຊ້ເຂົ້າໃນການຕັດສິນໃຈຄັ້ງນີ້.

**ເດືອນສິງຫາ - ທັນວາ:**ກຸ່ມ LIWG ໄດ້ສ້າງຕັ້ງຕົນເອງຄືນໃໝ່ໂດຍການສ້າງຕັ້ງຄະນະຊີ້ນໍາທີ່ປະກອບມີ ສະມາຊິກ 7 ພາກສ່ວນແລະໄດ້ເລີ່ມຕົ້ນຍຸດທະສາດການໂຄສະນາຂົນຂວາຍຢ່າງຕັ້ງໜ້າຫຼາຍຂຶ້ນກວ່າເກົ່າ, ໂດຍສຸມໃສ່ຂໍ້ສະເໜີຈໍານວນໜຶ່ງ, ໄດ້ດໍາເນີນກິດຈະກໍາກໍານົດທີ່ຕັ້ງແລະພາລະບົດບາດ (ເບິ່ງຂໍ້ 3.1), ໄດ້ ສ້າງເຄືອຂ່າຍທີ່ຫ້າວກັນ, ແລະໂຄສະນາຕາມກຸ່ມເປົ້າໝາຍ. ສະມາຊິກກຸ່ມ LIWG ທີ່ແຕກຕ່າງກັນໄດ້ ຊ່ວຍກັນໂຄສະນາແລະ ສົ່ງຕໍ່ຂໍ້ມູນຕົ້ນຕໍຜ່ານໜ່ວຍງານຍ່າຍປະຈໍາແຕ່ລະຂະແໜງການ, ກອງປະຊຸມສໍາ ມະນາແລະກອງປະຊຸມລະດັບບຸກຄົນທີ່ເຂົ້າຮ່ວມໂດຍຄູ່ຮ່ວມພັດທະນາ, ການຝຶກອົບຮົມໃນກະຊວງ MONRE. ນອກນັ້ນ, ກຸ່ມຍັງໄດ້ພະຍາຍາມຄືນອີກຄັ້ງໜຶ່ງເພື່ອເຂົ້າເຖິງສະພາແຫ່ງຊາດ. ກຸ່ມ LIWG ຈັດພິມຂໍ້ສະເໜີທີ່ສໍາຄັນຂອງກຸ່ມໂດຍໄດ້ຮັບການສະໜັບສະໜູນຈາກສະຖານທູດອັງກິດແລະເຢຍລະ ມັນ. ກະຊວງ MONREໄດ້ແຈກຢາຍຂໍ້ສະເໜີດັ່ງກ່າວນັ້ນໃນກອງປະຊຸມໂຕະມົນ.

2014 **ເດືອນມັງກອນ - ມິຖຸນາ:ກຸ່ມ**LIWG ຈັດພິມຂໍ້ສະເໜີກ່ຽວກັບການຊົດເຊີຍແລະເຜີຍແຜ່ຜ່ານຊ່ອງທາງ MNA, ແຈກຢາຍຂໍ້ສະເໜີລະດັບນະໂຍບາຍແລະເສື້ອຢືດທີ່ມີຂໍ້ຄວາມວ່າ ,ທີ່ດິນແມ່ນຊີວິດ'. ໃນຂະນະ ດຽວກັນ, ກຸ່ມໄດ້ດໍາເນີນການສຶກສາຂໍ້ມູນເພື່ອສະແດງໃຫ້ເຫັນຄວາມບໍ່ສອດຄ່ອງຂອງການເວນຄືນທີ່ດິນ ເພື່ອຈຸດປະສົງຂອງພາກເອກະຊົນທີ່ຕິດພັນກັບຂໍ້ຕົກລົງທາງການຄ້າແລະການລົງທຶນທີ່ມີໃນປະຈຸບັນ.

**ເດືອນກໍລະກົດ:**ຮ່າງນະໂຍບາຍ NLP ສະບັບໃໝ່ບໍ່ໄດ້ລະບຸເນື້ອໃນ ກ່ຽວກັບການເວນຄືນທີ່ດິນເພື່ອຈຸດປະສົງຂອງພາກເອກະຊົນແຕ່ວ່າກໍ່ບໍ່ໄດ້ເກືອດຫ້າມເຊັ່ນກັນ. ໃນໄລຍະສຸດທ້າຍ, ສະຖານທູດເຢຍລະມັນໄດ້ສະເໜີໃນກອງປະຊຸມລະດັບສູງ, ກ່ອນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດໃນເດືອນກໍລະກົດ, ໄດ້ຊ່ວຍເຈາະການສິ່ງເອກະສານນະໂຍບາຍເຖິງສະພາແຫ່ງຊາດເພື່ອຂໍອະນຸມັດ. ອີກຄັ້ງໜຶ່ງ, ສະຖານທູດເຢຍລະມັນໄດ້ອ້າງອີງເຖິງຂໍ້ສະເໜີຂອງກຸ່ມ LIWG ແລະໄດ້ເຜີຍແຜ່ກົດໝາຍທີ່ດິນທີ່ຄືບໜ້າຂອງປະເທດຈີນຈຳນວນ 1 ໜ້າ. ຍ້ອນວ່າໃນເວລານັ້ນ, ຍັງບໍ່ທັນມີການຈັດພິມຮ່າງນະໂຍບາຍ NLP ສະບັບໃໝ່. ແຕ່ວ່າກົມການເມືອງໄດ້ອອກຖະແຫຼງການ (ມະຕິຕົກລົງ) ເພື່ອເນັ້ນໜັກຄືນຈຸດຢືນຂອງຕົນກ່ຽວກັບນະໂຍບາຍ NLP. ຫຼາຍພາກສ່ວນເຫັນວ່ານີ້ແມ່ນຄວາມພະຍາຍາມຂອງພັກເພື່ອຄວບຄຸມຂະບວນການຮ່າງນະໂຍບາຍ NLP.

**ເດືອນຕຸລາ:** ໃນກອງປະຊຸມໜ່ວຍງານ LSSWG, ພະນັກງານກະຊວງ MONRE ໄດ້ອະທິບາຍເຫດຜົນສະແດງຄວາມບໍ່ເຫັນດີນຳການເວນຄືນທີ່ດິນສຳລັບຈຸດປະສົງຂອງພາກເອກະຊົນ, ແລະກໍ່ໄດ້ຮັບການສະໜັບສະໜູນຈາກຫົວໜ້າກົມຂອງກະຊວງ MONRE.

**ເດືອນພະຈິກ:**ໃນກອງປະຊຸມໜ່ວຍງານຊັບພະຍາກອນທຳມະຊາດ, ຫົວໜ້າກົມຂອງກະຊວງ MONRE ໄດ້ລາຍງານ ຂໍ້ຄວາມດຽວກັນນີ້ໃຫ້ລັດຖະມົນຕີຊ່ວຍວ່າການກະຊວງ MONRE ຮັບຮູ້. ບົດຂ່າວໃນໜັງສືພິມວຽງຈັນໄທມ໌ອອກຂ່າວກ່ຽວກັບບົດລາຍງານຂອງກອງປະຊຸມ, ຍ້ຳຄືນອີກຄັ້ງໜຶ່ງຄວາມກັງວົນກ່ຽວກັບການເວນຄືນທີ່ດິນເພື່ອຈຸດປະສົງຂອງພາກເອກະຊົນ. ໃນກອງປະຊຸມໂຕະມົນທີ່ຈັດຂຶ້ນໃນເດືອນພະຈິກ, ເອກອະຂະລາດຊະທູດປະເທດເຢຍລະມັນໃນນາມທີ່ເປັນປະທານຮ່ວມຂອງໜ່ວຍງານຊັບພະຍາກອນທຳມະຊາດນຳສະເໜີຂໍ້ສະເໜີດຽວກັນນີ້ເຖິງນາຍົກລັດຖະມົນຕີ.

2015 **ເດືອນມັງກອນ - ມີນາ:** ກຸ່ມ LIWG ຈັດກອງປະຊຸມກ່ຽວກັບ FPIC ສຳລັບສະພາແຫ່ງຊາດ, ຄະນະກຳມະການຮ່າງນະໂຍບາຍ NLP, ຄູ່ຮ່ວມພັດທະນາ, ແລະພາກເອກະຊົນ. ພ້ອມທັງຕິດຕາມນຳຄະນະການຮ່າງນະໂຍບາຍເພື່ອຮັບປະກັນວ່າ ການປ່ຽນແປງທີ່ສ◌ຳຄັນໄດ້ຮັບການສັງລວມເຂົ້າໃນເອກະສານນະໂຍບາຍ NLP ສະບັບຮ່າງ. ຮ່ວມກັນຜະລິດພາຍວິດີໂອກ່ຽວກັບ FPIC.

# 4 ການວິເຄາະວຽກໂຄສະນາຂັບເຄື່ອນກ່ຽວກັບນະໂຍບາຍທີ່ດິນແຫ່ງຊາດ ໃນສປປລາວຂອງເຄືອຂ່າຍທີ່ດິນ

ພາກນີ້ດຳເນີນການວິເຄາະຂໍ້ມູນໂດຍການກຳນົດວ່າຮູບແບບຂອງກິດຈະກຳ, ປັດໃຈແລະພາກສ່ວນທີ່ກ່ຽວຂ້ອງທີ່ມີອຳນາດຕັດສິນບັນຫາແລະພວກກ່ຽວຕັດສິນບັນຫາທີ່ຕິດພັນຂະບວນການຮ່າງນະໂຍບາຍ NLP ແນວໃດ; ແລະໂດຍການກຳນົດຈຸດແຂງ, ຈຸດອ່ອນແລະຂໍ້ຄົງຄ້າງໃນວຽກໂຄສະນາຂັບເຄື່ອນແລະຍຸດທະສາດທີ່ມີ ໃນປະຈຸບັນ. ຄຸນນະພາບແລະປະສິດທິພາບຂອງວຽກໂຄສະນາຂັບເຄື່ອນບໍ່ສາມາດປະເມີນໄດ້ໂດຍການວິເຄາະປັດໃຈພາຍໃນພຽງເທົ່ານັ້ນ (ເຊັ່ນ: ວຽກໂຄສະນາຕົນເອງ). ການຂໍການສະໜັບສະໜູນທີ່ປະສົບຜົນສຳເລັດກໍ່ອາດຈະມີອຸປະສັກການປ່ຽນແປງແບບສຸກເສີນທາງດ້ານການເມືອງ, ເສດຖະກິດຫຼືສັງຄົມ. ສະນັ້ນ, ການວິເຄາະຕໍ່ໄປນີ້ຈະກຳນົດຄວາມແຕກຕ່າງ ລະຫວ່າງປັດໃຈພາຍນອກແລະປັດໃຈພາຍໃນຂອງຜົນສຳເລັດແລະຄວາມລົ້ມເຫຼວ. ບົນພື້ນຖານດັ່ງກ່າວນີ້, ການສຶກສາຄັ້ງນີ້ຈິ່ງປະເມີນຜົນກະທົບທາງການເມືອງຂອງວຽກການຂໍການສະໜັບສະໜູນຂອງກຸ່ມ LIWG ແລະສົນທະນາຈຸດແຂງແລະຈຸດອ່ອນທີ່ມີ. ຈາກນັ້ນ, ຈະກຳນົດຂໍ້ສະເໜີສຳລັບການສົນທະນານະໂຍບາຍໃນອະນາຄົດກ່ຽວກັບທີ່ດິນໃນສປປລາວໃນພາກທີ 5.

## 4.1 ປັດໃຈພາຍນອກຂອງຄວາມສຳເລັດແລະການລົ້ມເຫຼວ

**ຄວາມສອດຄ່ອງຂອງປະເດັນ**

ບໍ່ມີຂໍ້ສົງໃສເລີຍກ່ຽວກັບຄວາມສອດຄ່ອງຂອງບັນຫາທີ່ດິນໃນສປປລາວ. ບົນພື້ນຖານທີ່ວ່າລັດຖະບານແຫ່ງສປປລາວຕັດສິນໃຈທີ່ຈະຮ່າງນະໂຍບາຍທີ່ດິນແຫ່ງຊາດ - ເປັນວຽກງານທີ່ບໍ່ເຄີຍມີມາກ່ອນ - ຊີ້ໃຫ້ເຫັນວ່າລັດເອງກໍ່ພິຈາລະນາບັນຫາທີ່ດິນວ່າເປັນບຸລິມະສິດທາງການເມືອງເຊັ່ນກັນ. ນອກນັ້ນ, ຈຳນວນຂໍ້ຂັດແຍ້ງທີ່ມີຢ່າງຫຼວງຫຼາຍໃນທົ່ວປະເທດຊີ້ໃຫ້ເຫັນວ່າບັນຫາເຫຼົ່ານີ້ບໍ່ສາມາດແກ້ໄຂໄດ້ໂດຍນຳໃຊ້ມາດຕະການຂັ້ນທ້ອງຖິ່ນພຽງຢ່າງດຽວແຕ່ວ່າຈຳເປັນຕ້ອງໄດ້ຮັບການແກ້ໄຂໃນລະດັບນະໂຍບາຍ.

**ກາລະໂອກາດ**

ຂະບວນການຮ່າງນະໂຍບາຍ NLP ມາພ້ອມກັນກັບກາລະໂອກາດສຳລັບການປ່ຽນແປງນະໂຍບາຍ. ເຖິງແມ່ນວ່າຂະບວນການອາດຈະເບິ່ງຄືບໍ່ມີຄວາມໂປ່ງໃສແລະບໍ່ໜ້າເຊື່ອຖືກໍ່ຕາມ, ແຕ່ວ່າຂະບວນການນີ້ແມ່ນຈຸດເລີ່ມຕົ້ນສຳລັບພາກສ່ວນທີ່ກ່ຽວຂ້ອງເຊັ່ນ ກຸ່ມ LIWG ຊຶ່ງເປັນພາກສ່ວນທີ່ສາມາດກຳນົດແລະເຂົ້າເຖິງພາກສ່ວນທີ່ດຳເນີນການປ່ຽນແປງ. ກາລະໂອກາດດັ່ງກ່າວນີ້ເປີດກວ້າງຫຼາຍໃນປີ 2012 ຊຶ່ງເປັນເວລາທີ່ຄະນະກຳມາທິການ EPFC ຂອງສະພາແຫ່ງຊາດໄດ້ເຊີນກຸ່ມ LIWG ໃຫ້ຊ່ວຍໃນຂະບວນການຮ່າງນະໂຍບາຍແລະຊ່ວຍສະໜອງຄວາມຮູ້ທາງດ້ານວິຊາການ. ຫຼັງຈາກເດືອນທັນວາ 2012, ກາລະໂອກາດດັ່ງກ່າວນີ້ຖືກປິດຕົວລົງຢ່າງໄວວາ.

**ກຳລັງການເຄື່ອນໄຫວ**

ຄວາມຈິງແລ້ວ, ວຽກງານນີ້ເປັນທ່າແຮງສຳລັບກຸ່ມ LIWG ທີ່ວຽກງານນີ້ໄດ້ມີການເຄື່ອນໄຫວແລ້ວກ່ອນລັດຖະບານແຫ່ງສປປລາວຕັດສິນໃຈທີ່ຮ່າງນະໂຍບາຍທີ່ດິນແຫ່ງຊາດ. ສະນັ້ນ, ຈຶ່ງບໍ່ຈຳເປັນຕ້ອງສ້າງກຳລັງການເຄື່ອນໄຫວກ່ຽວກັບເລື່ອງທີ່ດິນພາຍໃນກຸ່ມອົງການຈັດຕັ້ງແລະຄູ່ຮ່ວມພັດທະນາທີ່ມີແນວຄວາມຄິດດຽວກັນ. ຂະບວນການຮ່າງນະໂຍບາຍ NLP ຈຶ່ງກາຍເປັນກາລະໂອກາດທີ່ດີທີ່ສຸດໃນການນຳເອົາ ປະສົບການຂັ້ນຮາກຖານຂອງກຸ່ມ LIWG ແລະຜົນໄດ້ຮັບແລະຄວາມຕ້ອງການໃຫ້ຂັ້ນເທິງຮັບຮູ້.

**ຄວາມລະອຽດອ່ອນ**

ບັນຫາຕະຫຼອດການທີ່ຕິດພັນກັບເລື່ອງທີ່ດິນແມ່ນຄວາມລະອຽດອ່ອນສູງສຸດຂອງບັນຫານີ້. ນະໂຍບາຍຂອງລັດຖະບານເອງ, ຄື ,ການຫັນທີ່ດິນເປັນທຶນ' ແລະ ການລົງທຶນໂດຍກົງຂອງຕ່າງປະເທດທີ່ມີຈຳນວນເພີ່ມຂຶ້ນໝາຍຄວາມວ່າຄວາມສົນໃຈຂອງລັດ ກ່ຽວກັບທີ່ດິນແມ່ນຜົນໄດ້ຮັບທາງເສດຖະກິດເປັນຕົ້ນຕໍ. ການປົກຄອງທີ່ຍັງເຮັດບໍ່ໄດ້ດີໃນແຕ່ລະຂັ້ນແລະສ່ວນໄດ້ສ່ວນເສຍຂອງຜູ້ກຳອຳນາດຍິ່ງເຮັດໃຫ້ສະພາບການຮ້າຍແຮງຫຼາຍຂຶ້ນໂດຍສະເພາະ ສຽງຂອງບຸກຄົນທີ່ມີຄວາມລໍ້າລວຍມັກຈະມີນໍ້າໜັກຫຼາຍກວ່າສຽງຂອງປະຊາຊົນທົ່ວໄປ.ສະນັ້ນ, ໃຜທີ່ຕັ້ງຄຳຖາມກ່ຽວກັບນະໂຍບາຍຂອງລັດຖະບານໝາຍເຖິງພາກກ່ຽວໄດ້ຕັ້ງຄຳຖາມກ່ຽວກັບຜູ້ທີ່ມີອຳນາດໃນລະດັບທ້ອງຖິ່ນແລະລະດັບຊາດ. ສິ່ງນີ້ນຳພາໄປສູ່ການຄອບຄຸມແລະຫຼຸດຜ່ອນພື້ນທີ່ຂອງການມີສ່ວນຮ່ວມໃຫ້ແຄບລົງຢ່າງຕໍ່ເນື່ອງທັງໃນລະດັບສະຖາບັນກໍ່ຄືລະດັບບຸກຄົນ. ນອກນັ້ນ, ການນຳໃຊ້ກົລະນີສຶກສາສຳລັບການສົນທະນາລະດັບນະໂຍບາຍອາດຈະບໍ່ມີຄວາມເປັນໄປໄດ້ຍ້ອນຄວາມສ່ຽງທີ່ອາດຈະເກີດຂຶ້ນກັບບຸກຄົນ (ລວມທັງບຸກຄົນໃນລະດັບທ້ອງຖິ່ນ) ທີ່ມີສ່ວນຮ່ວມນັ້ນຢູ່ໃນລະດັບສູງເກີນໄປ.

**ກົດລະບຽບຂອງການເກມ**

ອີກໜຶ່ງປັດໃຈທີ່ເປັນສິ່ງກີດຂວາງ ໃຫ້ວຽກໂຄສະນາຂົນຂວາຍແມ່ນການຂາດຂັ້ນຕອນການກຳນົດນະໂຍບາຍທີ່ເປັນທາງການ. ສະຖາບັນຂອງພາກລັດຈຳນວນໜຶ່ງມີພາລະບົດບາດທີ່ແຕກຕ່າງກັນໃນການຂະບວນການຮ່າງນະໂຍບາຍ NLP ແຕ່ວ່າໜ້າທີ່ຄວາມຮັບຜິດຊອບທີ່ແທ້ຈິງສ່ວນໃຫ່ຍຍັງບໍ່ທັນຈະແຈ້ງ, ເວລາໃດທີ່ພວກເຂົາຖືກອະນຸຍາດໃຫ້ມີຄຳເຫັນໃສ່ຮ່າງເອກະສານ, ແລະທັດສະນະຂອງພວກເຂົາກມີຄວາມສອດຄ່ອງຫຼາຍເທົ່າໃດ. ເຊັ່ນດຽວກັນກັບປັດໃຈພາຍນອກຈາກສັງຄົມ, ສະຖາບັນການສຶກສາແລະພາກສ່ວນທີ່ກ່ຽວຂ້ອງ. ຄຽງຄູ່ກັບຜົນອອກສຸດທ້າຍຂອງການຮ່າງນະໂຍບາຍຍັງຄົງຂຶ້ນຢູ່ກັບການຕັດສິນຂອງບາງບຸກຄົນແລະ ,ສະຖາບັນຂອງລັດທີ່ຢູ່ເບື້ອງຫຼັງ', ການດຳເນີນແລະການວັດແທກວຽກການຂໍການສະໜັບສະໜູນກໍ່ມີຄວາມຫຍຸ້ງຍາກຫຼາຍເຊັ່ນກັນ.

## 4.2 ປັດໄຈພາຍໃນຂອງຄວາມສຳເລັດແລະຄວາມລົ້ມເຫຼວ

ສ່ວນຫຼາຍແລ້ວ, ການຂໍການສະໜັບສະໜູນຈະປະສົບຜົນສຳເລັດໃນເວລາທີ່ອົງປະກອບທັງໝົດໄດ້ຮັບການສ້າງຕັ້ງຂຶ້ນແລະດຳເນີນງານຮ່ວມກັນ. ນີ້ບໍ່ໝາຍຄວາມວ່າບາດກ້າວແຕ່ລະອັນແລະບາດກ້າວທັງໝົດຕ້ອງເປັນທາງການແລະໄດ້ຮັບການເກັບກຳ; ແຕ່ວ່າ ສ່ວນຫຼາຍແລ້ວຄວາມເປັນເອກະພາບກັນຢ່າງຈະແຈ້ງພາຍໃນອົງການຈັດຕັ້ງພັນທະມິດແລະຜູ້ສະໜັບສະໜູນແມ່ນກຸນແຈສຳຄັນຂອງຄວາມສຳເລັດ (ອ້າງອີງເອກະສານຂອງອົງການ HELVETAS Swiss Intercooperation ປີ 2015; Acosta ແລະ Pettit ປີ 2013, 18ff).

***ການວິເຄາະບັນຫາແລະການກຳນົດວິທີການແກ້ໄຂ:*** *ກຸ່ມ LIWG ເຂົ້າໃຈບັນຫາຢ່າງແທ້ຈິງບໍ, ແລະໄດ້ນຳສະເໜີວິທີການແກ້ໄຂຢ່າງຊັດເຈນບໍ?*

ກຸ່ມ LIWG ໄດ້ກະກຽມແລະຄົ້ນຄ້ວາເອກະສານເພື່ອວິເຄາະສະພາບການທີ່ດິນໃນສປປລາວ. ຊ່ອງຫວ່າງໃນນະໂຍບາຍ, ນິຕິກຳແລະການຈັດຕັ້ງປະຕິບັດໄດ້ຮັບການວິເຄາະ (ແລະສືບຕໍ່ວິເຄາະຢ່າງຕໍ່ເນື່ອງ) ແລະວິທີການແກ້ໄຂຈຳນວນໜຶ່ງຖືກກຳນົດຂຶ້ນໃນຮູບແບບຄຳແນະນຳຕົ້ນຕໍຈຳນວນ 4 ຂໍ້. ສະມາຊິກກຸ່ມ LIWG ແລະຜູ້ສະໜັບສະໜູນທັງໝົດທີ່ຖືກສຳພາດໃນການສຶກສາຂໍ້ມູນຄັ້ງນີ້ເຫັນດີກັບຄຳແນະນຳເຫຼົ່ານີ້ແລະພິຈາລະນາວ່າຂໍ້ສະເໜີເຫຼົ່ານີ້ມີຄວາມສຳຄັນແລະເປັນປະໂຫຍດ.

***ຈຸດປະສົງການຂໍການສະໜັບສະໜູນ:*** *ສະມາຊິກແລະຜູ້ສະໜັບສະໜູນກຸ່ມ LIWG ມີເປົ້າໝາຍຄວາມສຳເລັດກ່ຽວກັບ NLP ອັນດຽວກັນບໍ?*

ໃນຂະນະທີ່ຜູ້ສະໜັບສະໜູນແລະສະມາຊິກກຸ່ມ LIWG ທັງໝົດໄດ້ໃຫ້ສຳພາດສຳລັບການສຶກສາຂໍ້ມູນດັ່ງກ່າວນີ້ເຫັນດີວ່ານະໂຍບາຍ NLP ເປັນເອກະສານທີ່ມີຄວາມໝາຍຄວາມສ໋າຄັນຮຽກຮ້ອງເຖິງຄວາມເອົາໃຈໃສ່, ຄວາມແຕກຕ່າງທາງດ້ານທັດສະນະຈຳນວນໜຶ່ງທີ່ຕິດພັນກັບ,ການປ່ຽນແປງທີ່ມີຄວາມໝາຍ'. ນອກຈາກຄວາມແຕກຕ່າງພາຍໃນທາງດ້ານຈຸດສຸມຂອງກຸ່ມ LIWG ກ່ຽວກັບການສົນທະນານະໂຍບາຍແຫ່ງຊາດທຽບກັບກິດຈະກຳລະດັບຊຸມຊົນ (ເບິ່ງຂໍ້ 4.5), ທັດສະນະ ກ່ຽວກັບນະໂຍບາຍ NLP ,ທີ່ມີຄວາມໝາຍ' ກໍ່ມີຄວາມແຕກຕ່າງກັນໄປເຊັ່ນກັນ. ໃນຂະນະທີ່ການເຫັນດີກັບຂໍ້ສະເໜີທັງ 4 ຂໍ້ນັ້ນຍັງບໍ່ທັນເປັນເອກະພາບກັນທັງໝົດ, ສະມາຊິກຈຳນວນໜຶ່ງຮູ້ສຶກວ່າກຸ່ມ LIWG ຈຳເປັນຕ້ອງມີການປະນິປະນອມ. ສຳລັບພວກເຂົາ, ການມີນະໂຍບາຍທີ່ດິນທີ່ມີເນື້ອໃນທຳມະດາແລະມີຄວາມເປັນເຈົ້າການຂອງປະຊາຊົນລາວໃນລະດັບໃດໜຶ່ງແມ່ນດີກວ່າ ການຕໍ່ສູ້ຢ່າງບໍ່ມີວັນສິ້ນສຸດເພື່ອນະໂຍບາຍທີ່ສົມບູນແບບທີ່ອາດຈະມີຄວາມເປັນເຈົ້າການຂອງຊາດພຽງແຕ່ໜ້ອຍດຽວ. ທັດສະນະນີ້ອາດຈະເກີດຂຶ້ນໃນໄລຍະການຮ່າງນະໂຍບາຍທີ່ດິນແຫ່ງຊາດທີ່ມີຄວາມຍາວນານ, ສ່ອງແສງໃຫ້ເຫັນລະດັບຄວາມບໍ່ພໍໃຈແລະຄວາມທໍ້ຖໍ້. ສະນັ້ນ, ກຸ່ມ LIWG ອາດຈະຈຳເປັນຕ້ອງເບິ່ງຄືນຈຸດປະສົງຂອງການໂຄສະນາຂົນຂວາຍຂອງຕົນແລະສ່ອງແສງໃຫ້ເຫັນການປ່ຽນແປງທີ່ເກີດຂຶ້ນຢ່າງຈະແຈ້ງ.

**ການວິເຄາະສະພາບການ:** *ກຸ່ມ LIWG ຮັບຮູ້ສະພາບເສດຖະກິດການເມືອງທີ່ພວກເຂົາດຳເນີນງານຢູ່ບໍ?*
ບັນຫານີ້ອາດຈະເປັນປະເດັນທີ່ຫຍຸ້ງຍາກທີ່ສຸດແລະສະນັ້ນຈຶ່ງກາຍເປັນອົງປະກອບທີ່ອ່ອນແອທີ່ສຸດຂອງນະໂຍບາຍທີ່ຕິດພັນກັບ NLP ຂອງກຸ່ມ LIWG. ກິດຈະກຳກຳນົດພາລະບົດບາດຂອງພາກສ່ວນທີ່ກ່ຽວຂ້ອງທີ່ກຸ່ມ LIWG ຈັດຕັ້ງປະຕິບັດໃນປີ 2013 (ເບິ່ງຂໍ້ 3.1) ຊີ້ໃຫ້ເຫັນລາຍລະອຽດທີ່ແຕກຕ່າງກັນຂອງແຕ່ລະສະຖາບັນ, ບຸກຄົນແລະພາລະບົດບາດຂອງພວກເຂົາພາຍໃນຂະບວນການຮ່າງນະໂຍບາຍ NLP. ເຖິງແມ່ນວ່າຂໍ້ມູນເຫຼົ່ານີ້ບໍ່ໄດ້ສ່ອງແສງໃຫ້ເຫັນວ່າພາລະບົດບາດເຫຼົ່ານັ້ນໄດ້ຮັບການຈັດຕັ້ງປະຕິບັດແນວໃດພາຍໃນແຕ່ລະສະຖາບັນແລະລະຫວ່າງສະຖາບັນ ແລະບຸກຄົນເຫຼົ່ານັ້ນ. ບົດສະຫຼຸບດຽວຈາກກິດຈະກຳນີ້ແມ່ນ „ຜົນໄດ້ຮັບຊີ້ໃຫ້ເຫັນວ່າ (ທັງສະພາແຫ່ງຊາດແລະກະຊວງ MONRE ມີທັດສະນະ)ວ່າພັກແລະສະພາແຫ່ງຊາດມີພາລະບົດບາດເທົ່າທຽມກັນໃນການຕັດສິນບັນຫາກ່ຽວກັບນະໂຍບາຍ NLP ສະບັບສຸດທ້າຍ" - ແຕ່ວ່າຍັງບໍ່ມີຫຼັກຖານທີ່ຊັດເຈນໃນຕົວຈິງທີ່ຈະໃຊ້ຢັ້ງຢືນສົມມຸດຖານດັ່ງກ່າວນີ້. ສະນັ້ນ, ກຸ່ມ LIWGມີຄວາມຮູ້ທີ່ດີກ່ຽວກັບພາກສ່ວນທີ່ກ່ຽວຂ້ອງ, ແຕ່ວ່າຍັງມີຄວາມເຂົ້າທີ່ຈຳກັດກ່ຽວກັບວ່າພາກສ່ວນທີກ່ຽວຂ້ອງເຫຼົ່ານີ້ປະຕິບັດໜ້າທີ່ແນວໃດໃນຕົວຈິງ, ອຳນາດໃນການຕັດສິນບັນຫາໄດ້ຮັບການກະຈ່າຍແນວໃດພາຍໃນສະຖາບັນເຫຼົ່ານັ້ນ, ແລະພວກເຂົາພົວພັນເຊິ່ງກັນ ແລະກັນແນວໃດ. ຂໍ້ສັງເກດດັ່ງກ່າວນີ້ສອດຄ່ອງກັບຄຳເຫັນຂອງຜູ້ສະໜັບສະໜູນ, ພັນທະມິດແລະ ສະມາຊິກຂອງກຸ່ມ LIWG ຜູ້ທີ່ຍອມຮັບວ່າຄວາມເຂົ້າໃຈກ່ຽວກັບຂະບວນການຕັດສິນບັນຫາທາງການເມືອງໃນ ສປປລາວແມ່ນເກືອບຈະບໍ່ມີຄວາມເປັນໄປໄດ້ເລີຍ. ໃນທາງກົງກັນຂ້າມກັນ, ບັນຫານີ້ກໍ່ກ່ຽວພັນກັບການຂາດຂໍ້ມູນຂ່າວສານຂອງຂັ້ນຕອນການຮ່າງນະໂຍບາຍທີ່ໜ້າເຊື່ອຖືໄດ້ແລະສະໝ່ຳສະເໝີ. ອີກດ້ານໜຶ່ງ, ຍັງບໍ່ທັນມີໃຜສາມາດຮັບຮູ້ກ່ຽວກັບພາລະບົດບາດແລະການຕັດສິນບັນຫາໃນຕົວຈິງຂອງພັກ, ຊຶ່ງເປັນຂໍ້ມູນທີ່ບໍ່ມີພາກສ່ວນໃດສາມາດເຂົ້າເຖິງໄດ້.

> "“ໃນປີ 2013, ພວກເຮົາຄິດວ່າພວກເຮົາເຂົ້າໃຈຂັ້ນຕອນຕ່າງໆ. ແຕ່ວ່າຜົນອອກມີຄວາມແຕກຕ່າງ, ມະຕິຕົກລົງຈາກກົມການເມືອງສູນກາງພັກແລະບັນຫາອື່ນໆບໍ່ມີຄວາມຈະແຈ້ງແລະບໍ່ມີລະບຽບຫຼັກການທີ່ເຊື່ອຖືໄດ້. ໃນສຸດທ້າຍ, ພວກເຮົາທັງໝົດກໍ່ຄາດເດົາຮ່ວມກັນ’"
>
> (ຄູ່ຮ່ວມພັດທະນາ)

**ການກຳນົດກຸ່ມເປົ້າໝາຍ:** *ກຸ່ມ LIWG ໄດ້ກຳນົດກຸ່ມເປົ້າໝາຍທີ່ຖືກຕ້ອງ ແລະ ເໝາະສົມແລ້ວບໍ?*
ພາຍໃຕ້ສະພາບການທີ່ມີຂໍ້ມູນຂ່າວສານຈຳກັດ, ກຸ່ມ LIWG ໄດ້ກຳນົດກຸ່ມເປົ້າໝາຍຈຳນວນໜຶ່ງຢ່າງຈະແຈ້ງ. ອີງຕາມຜົນໄດ້ຮັບຈາກກິດຈະກຳກຳນົດພາລະບົດບາດ, ກຸ່ມເປົ້າໝາຍຕົ້ນຕໍແມ່ນສະພາແຫ່ງຊາດແລະພັກ (ພາກສ່ວນທີ່ຢູ່ໃນວົງມົນດ້ານໃນ). ເປົ້າໝາຍສຳຮອງປະກອບມີຄະນະກຳມະການຮ່າງນະໂຍບາຍ NLP, ຄະນະກຳມາທິການ

ດ້ານ EPFC, ຄະນະຊີ້ນຳແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດແລະກະຊວງອື່ນໆທີ່ກ່ຽວຂ້ອງທີ່ມີຄວາມສົນໃຈກ່ຽວກັບບັນຫາທີ່ດິນແລະການຄຸ້ມຄອງຊັບພະຍາກອນທຳມະຊາດໂດຍລວມ (ພາກສ່ວນທີ່ຢູ່ໃນວົງມົນດ້ານນອກ). ແຕ່ວ່າ, ບັນຫາສຳຄັນມີຄື ການເຂົ້າເຖິງພາກສ່ວນທີ່ຢູ່ໃນວົງມົນດ້ານໃນແມ່ນມີຄວາມຫຍຸ້ງຍາກຫຼາຍແລະຖ້າບໍ່ມີຄວາມເປັນໄປໄດ້, ໃນຂະນະດຽວກັນພາກສ່ວນທີ່ຢູ່ວົງມົນດ້ານນອກກໍ່ມີຄວາມຈຳກັດ ທາງດ້ານການແຊກແຊງຂະບວນການຕັດສິນບັນຫາ (ເບິ່ງຂໍ້ 4.5).

**ການສ້າງພັນທະມິດ:** *ກຸ່ມ LIWG ໄດ້ຮັບການສະໜັບສະໜູນຈາກພັນທະມິດພາຍນອກຢ່າງພຽງພໍບໍ? ພັນທະມິດມີຄວາມກວ້າງຂວາງແລະມີຄວາມຫຼາກຫຼາຍຢ່າງພຽງພໍບໍ?*
ກຸ່ມ LIWG ໄດ້ຄ້ຳປະກັນການສະໜັບສະໜູນທີ່ຍາວນັ້ນແລະໜ້າເຊື່ອຖື ຈາກຄູ່ຮ່ວມພັດທະນາທີ່ສຳຄັນຈຳນວນໜຶ່ງ (ເບິ່ງຂໍ້ 3.1.3). ພັນທະມິດຕົ້ນຕໍແມ່ນອົງການ GIZ ແລະສະຖາທູດເຢຍລະມັນ, ຊຶ່ງເປັນພາກສ່ວນທີ່ມີສ່ວນຮ່ວມຢ່າງເປັນປົກກະຕິໃນຜູ້ຮ່ວມຂຽນສິ່ງພິມຂອງກຸ່ມ LIWG. ພັນທະມິດອື່ນໆປະກອບດ້ວຍສະຫະພາບເອີຣົບ, ຊຶ່ງເປັນພາກສ່ວນທີ່ເຜີຍແຜ່ຂໍ້ສະເໜີທີ່ສຳຄັນຂອງກຸ່ມ LIWG ໃນເວທີການສົນທະນານະໂຍບາຍຂອງຕົນເອງ. ນອກນັ້ນ, ສະຖານທູດປະເທດຝຣັ່ງແລະສະຖານທູດປະເທດອັງກິດບາງຄັ້ງກໍ່ໃຫ້ການສະໜັບສະໜູນຢ່າງເປັນທາງການຕໍ່ກຸ່ມ LIWG, ແລະອົງການ SDC ກໍ່ກຳລັງກາຍເປັນພັນທະມິດທີ່ສຳຄັນຂອງກຸ່ມ. ອີງຕາມຄຳເຫັນຂອງຜູ້ຕອບແບບສອບຖາມຈຳນວນໜຶ່ງ, ຍ້ອນການສະໜັບສະໜູນຢ່າງເຂັ້ມແຂງ ຂອງຜູ້ໃຫ້ທຶນ, ກຸ່ມ LIWG ຈຶ່ງບໍ່ຖືກຈຳແນກຫຼືຍຸບຕົວລົງໂດຍລັດຖະບານລາວພາຍຫຼັງເດືອນທັນວາ 2012. ແຕ່ວ່າໃນຂະນະດຽວກັນ, ການສະໜັບສະໜູນຈາກຄູ່ຮ່ວມມືທີ່ສຳຄັນຍັງຄົງບໍ່ເຂັ້ມແຂງ, ເປັນຕົ້ນແມ່ນອົງການເຄືອຂ່າຍ UN, ທະນາຄານໂລກ, ເອດີບີ, ແລະອົງການ FAO. ອີງຕາມອະດີດສະມາຊິກກຸ່ມ LIWG, ຄູ່ຮ່ວມພັດທະນາຈຳນວນໜຶ່ງຈະຫຼີກລ້ຽງການໂຕ້ຖຽງທາງການເມືອງແລະສົ່ງພຽງແຕ່ພະນັກງານວິຊາການ ມາເຂົ້າຮ່ວມປະຊຸມ. ນອກນັ້ນ, ອົງການຈັດຕັ້ງຈາກທະວີບເອີຣົບແລະສະຖາບັນຈາກພາກພື້ນຕາເວັນຕົກມີຄວາມຫຍຸ້ງຍາກທີ່ຈະສະແດງຈຸດຢືນໃນປະເທດນີ້ໃນໄລຍະຜ່ານມາ, ໂດຍມີຄວາມຈຳກັດໃນການເຂົ້າເຖິງຜູ້ມີອຳນາດຕັດສິນ, ຖ້າສົມທຽບກັບລັດຖະບານແລະນັກລົງທຶນຈາກປະເທດໃກ້ຄຽງ. ສະນັ້ນ, ກຸ່ມ LIWG ຈຶ່ງມີພັນທະມິດທີ່ມຸ້ງໝັ້ນໃນຈຳນວນຈຳກັດ, ຊຶ່ງເປັນພາກສ່ວນທີ່ບໍ່ມີອຳນາດແຊກແຊງຂະບວນການຕັດສິນບັນຫາ. ກ່ຽວກັບພັດທະມິດທີ່ເປັນຄົນລາວ, ການຮ່ວມມືກັບກັບເຄືອຂ່າຍ MIC-MAC ກໍ່ມີຄວາມຈຳກັດເຊັ່ນກັນ.

**ທິດສະດີຂອງການປ່ຽນແປງ:** *ມີຄວາມເຂົ້າໃຈທີ່ຈະແຈ້ງແລະເຂົ້າໃຈຄືກັນແລ້ວບໍກ່ຽວກັບຄາດໝາຍການປ່ຽນແປງທີ່ຄວນຈະເກີດຂຶ້ນ?*
ອີງຕາມເອກະສານຂອງ Asosta ແລະ Pettit (2013, 20), „ໂຄງການພັດທະນາທີ່ມີໃນປະຈຸບັນສຳລັບເກືອບໝົດທຸກພາກສ່ວນ, ແມ່ນຍັງບໍ່ທັນໄດ້ຮັບການສ້າງຂຶ້ນບົນພື້ນຖານເນື້ອໃນຜົນໄດ້ຮັບແລະຜົນກະທົບທີ່ມີຄວາມຊັດເຈນທີ່ໂຄງການແນໃສ່ບັນລຸ, ຫຼືປັດໄຈນຳເຂົ້າແລະກິດຈະກຳທີ່ກຳນົດໄວ້ນັ້ນຈະເຮັດໃຫ້ເກີດຜົນໄດ້ຮັບຫຼືຜົນກະທົບໄດ້ແນວໃດ". ບັນຫານີ້ແມ່ນຖືກຕ້ອງທີ່ສຸດສຳລັບກໍລະນີຂອງກຸ່ມ LIWG. ໃນເວລາທີ່ກຸ່ມ LIWG ຖືກເຊີນໂດຍກະຊວງ MONRE ແລະຄະນະກຳມາທິການ EPFC ໃຫ້ສະໜັບສະໜູນຂະບວນການກຳນົດນະໂຍບາຍ NLP, ກຸ່ມ LIWG ກໍ່ຕອບຮັບທັນທີໂດຍຄິດວ່າການສົນທະນາທາງວິຊາການຈະນຳພາໄປສູ່ການສັງລວມເອົາຂໍ້ສະເໜີຂອງພວກເຂົາເຂົ້າໃນນະໂຍບາຍ NLP ສະບັບສຸດທ້າຍ. ທິດສະດີຂອງການປ່ຽນແປງທີ່ບໍ່ມີຄວາມຊັດເຈນດັ່ງກ່າວນີ້ສາມາດເຮັດໃຫ້ຊັດເຈນໄດ້ໃນເວລາທີ່ ‚ປະໂຫຍກເລີ່ມຕົ້ນ' ເກີດຂຶ້ນຢ່າງສຸກເສີນໃນທ້າຍເດືອນທັນວາ 2012. ຈາກນັ້ນ, ກຸ່ມຈຶ່ງຮັບຮູ້ວ່າການປ່ຽນແປງລະດັບນະໂຍບາຍຈະບໍ່ເກີດຂຶ້ນບົນພື້ນຖານການປຶກສາຫາລືກັນພາຍໃນກຸ່ມຊ່ຽວຊານພຽງເທົ່ານັ້ນ, ແລະຍັງຮັບຮູ້ວ່າພວກເຂົາໄດ້ປະຕິເສດພາກສ່ວນອື່ນໆທີ່ມີຄວາມກ່ຽວຂ້ອງເທົ່າກັນແລະມີຈຸດຢືນທີ່ສຳຄັນຫຼາຍກວ່າພວກເຂົາ (ສົມທຽບກັບຂໍ້ 4.5). ໃນເວລາກັບຄືນສະພາບປົກກະຕິ, ກຸ່ມ LIWG ໄດ້ເລີ່ມຕົ້ນນຳໃຊ້ເວລາແລະຊັບພະຍາກອນໃນການຄົ້ນຄວ້າສະພາບທາງການເມືອງ, ໂດຍເລີ່ມຕົ້ນຈັດຕັ້ງປະຕິບັດກິດຈະກຳກຳນົດພາລະບົດບາດຂອງພາກສ່ວນທີ່ກ່ຽວຂ້ອງ (ເບິ່ງຂໍ້ 3.1).

**ໄລຍະເວລາ, ພາລະບົດບາດແລະຄວາມຮັບຜິດຊອບ:** *ບາດກ້າວຕ່າງໆທີ່ຈະນໍາໃຊ້ເພື່ອບັນລຸການປ່ຽນແປງໄດ້ຮັບການກໍານົດແລ້ວບໍ? ພາລະບົດບາດ ຂອງສະມາຊິກ, ຜູ້ສະໜັບສະໜູນແລະພັນທະມິດຈະແຈ້ງແລ້ວບໍ?*
ຫຼັງຈາກເຫດການນີ້, ໃນເດືອນກັນຍາ 2013, ກຸ່ມ LIWG ໄດ້ສ້າງແຜນການຢ່າງຈະແຈ້ງທີ່ມີກໍານົດເວລາແລະການມອບໝາຍໜ້າວຽກຢ່າງຄັກແນ່. ແຕ່ວ່າ, ແຜນການດັ່ງກ່າວນີ້ບັນຍາຍພາກສ່ວນໜຶ່ງຂອງວິທີການພຽງເທົ່ານັ້ນທີ່ຈະນໍາໃຊ້ເພື່ອບັນລຸຈຸດປະສົງເປົ້າໝາຍສູງສຸດຂອງກຸ່ມ. ແຜນການດັ່ງກ່າວນີ້ບໍ່ໄດ້ກໍານົດລໍາດັບຂອງກິດຈະກໍາ, ບາດເພີ່ມຕື່ມແລະຄາດໝາຍຜົນໄດ້ຮັບໃນໄລຍະຍາວ, ທີ່ຈະເປັນບ່ອນອີງໃຫ້ກຸ່ມສາມາດດໍາເນີນການປະເມີນແລະວັດແທກຄວາມຄືບໜ້າຂອງວຽກງານຂອງຕົນ. ການຂາດເອກະສານອ້າງອີງຕົ້ນຕໍສະແດງໃຫ້ເຫັນວ່າສະມາຊິກແຕ່ລະພາກສ່ວນມີທັດສະນະທີ່ແຕກຕ່າງກັນກ່ຽວກັບຄວາມສໍາເລັດ ທີ່ຕິດພັນກັບຂະບວນການຮ່າງນະໂຍບາຍ NLP.

**ການກໍານົດກອບຂໍ້ຄວາມ:** *ກຸ່ມ LIWG ມີເນື້ອໃນຂໍ້ຄວາມທີ່ຊັດເຈນແລ້ວບໍ, ແລະເນື້ອໃນຂໍ້ຄວາມເຫຼົ່ານັ້ນໄດ້ຮັບການກໍານົດກອບທີ່ເໝາະສົມແລ້ວບໍ ເພື່ອໃຫ້ກຸ່ມເປົ້າໝາຍເຂົ້າໃຈ?*
ກຸ່ມ LIWG ສ້າງການຕິດຕໍ່ພົວພັນວຽກງານກ່ຽວກັບນະໂຍບາຍ NLP ອີງຕາມຂໍ້ສະເໜີຕົ້ນຕໍ 4 ຂໍ້ຊຶ່ງໄດ້ຮັບການເຜີຍແຜ່ເຖິງພາກສ່ວນທີ່ກ່ຽວຂ້ອງຜ່ານຫຼາຍຊ່ອງທາງແລະຜ່ານພັດທະນາຂອງກຸ່ມເປັນຕົ້ນແມ່ນ:

- ກໍານົດຫຼັກການທີ່ຊັດເຈນກ່ຽວກັບການເວນຄືນທີ່ດິນ (ສິດທິໃນການເລືອກ);
- ຮັບຮູ້ສິດຄວາມເປັນເຈົ້າຂອງທີ່ດິນຕາມປະເພນີ;
- ພັດທະນານະໂຍບາຍກ່ຽວກັບການອອກກໍາມະສິດທີ່ດິນຊຸມຊົນ; ແລະ
- ຮັບປະກັນການຈັດຕັ້ງປະຕິບັດແລະການເຄື່ອນໄຫວຂອງກົນໄກແກ້ໄຂຂໍ້ຂ້ອງໃຈ.

ເນື້ອໃນຂໍ້ຄວາມເຫຼົ່ານີ້ມີຄວາມຊັດເຈນ, ເຊື່ອມໂຍງກັນແລະສອດຄ່ອງກັບສະພາບພາຍໃນປະເທດແລະການສົນທະນາກັນກ່ຽວກັບກໍາມະສິດທີ່ດິນໃນລະດັບໂລກ. ນອກນັ້ນ, ຂໍ້ຄວາມເຫຼົ່ານີ້ຍັງໄດ້ຮັບການນໍາສະເໜີໃນຫຼາຍວິທີການແລະຫຼາຍລະດັບຄວາມສົນສົນທີ່ແຕກຕ່າງກັນ, ບົນພື້ນຖານລະດັບຄວາມເຂົ້າໃຈແລະວິຊາການຂອງແຕ່ລະກຸ່ມເປົ້າໝາຍ. ເຖິງແມ່ນວ່າເອກະສານນະໂຍບາຍທີ່ມີຄວາມໜ້າສົນໃຈຈະກວມເອົາຄວາມກັງວົນຂັ້ນພື້ນຖານຈໍານວນໜຶ່ງທີ່ຢູ່ເບື້ອງຫຼັງຂອງຂໍ້ສະເໜີທັງ 4 ຂໍ້ນັ້ນ, ແຕ່ວ່າບົດລາຍງານແລະເອກະສານເພີ່ມຕື່ມຍັງຄົງປະກອບມີເນື້ອໃນທີ່ຈໍາເປັນຕ້ອງໄດ້ຮັບການປຶກສາຫາລືຮ່ວມກັນຢ່າງລະອຽດຫຼາຍກວ່າເກົ່າ.

**ການທວນຄືນແລະການດັດແກ້:** *ຈຸດປະສົງ, ທິດສະດີຂອງການປ່ຽນແປງແລະພາລະບົດບາດແລະໜ້າທີ່ຄວາມຮັບຜິດຊອບໄດ້ຮັບການດັດແກ້ແລະ ທວນຄືນຢ່າງເປັນປົກກະຕິບໍ?*
ບົນພື້ນຖານຄວາມຈິງທີ່ວ່າກອງເລຂາທີ່ມີພະນັກງານປະຈໍາ, ກຸ່ມ LIWG ຈຶ່ງສາມາດປະເມີນ, ທວນຄືນແລະດັດແກ້ກິດຈະກໍາແລະຍຸດທະສາດຂອງຕົນຢ່າງຕໍ່ເນື່ອງ. ຊຶ່ງແຕກຕ່າງຈາກພາກສ່ວນອື່ນ, ພັນທະມິດທີ່ບໍ່ມີດໍາເນີນການໂຄສະນາຂົນຂວາຍເປັນຫຼັກ, ກຸ່ມສາມາດຮັກສາການເຄື່ອນໄຫວ ແລະດັດແກ້ວຽກງານຂອງຕົນຢ່າງທັນເວລາ. ແຕ່ວ່າການຂາດທິດສະດີຂອງການປ່ຽນແປງຢ່າງຈະແຈ້ງແລະໄລຍະເວລາທັນຖືກຕ້ອງສອດຄ່ອງກັບກໍານົດເວລາ, ພາລະບົດບາດແລະໜ້າທີ່ຄວາມຮັບຜິດຊອບຊີ້ໃຫ້ເຫັນວ່າຍັງບໍ່ທັນມີການປະເມີນແລະການດັດແກ້ ຢ່າງເປັນລະບົບແລະເປັນປົກກະຕິເຊັ່ນ: ໃນສະພາບການຂອງຄະນະຊີ້ນໍາກຸ່ມ LIWG ຫຼືສະມາຊິກອື່ນໆ.

## 4.3 ຜົນກະທົບຂອງນະໂຍບາຍ

ສ່ວນຫຼາຍແລ້ວ, ການປະເມີນຜົນກະທົບຂອງວຽກນະໂຍບາຍແມ່ນມີຄວາມຫຍຸ້ງຍາກຫຼາຍກວ່າວຽກງານ ,ວິຊາການ‘ ຂອງໂຄງການອື່ນໆ. ແທນທີ່ຈະສຸມໃສ່ຜົນໄດ້ຮັບຂັ້ນສຸດທ້າຍ, - ເຊັ່ນ: ນະໂຍບາຍສະບັບສຸດທ້າຍຫຼືສະບັບຮ່າງ - ການສຸມໃສ່ການຫັນປ່ຽນຂອງຂະບວນການກຳນົດນະໂຍບາຍແມ່ນສາມາດເປີດເຜີຍໄດ້ຫຼາຍກວ່າ (ເບິ່ງພາກທີ 2). ອີງຕາມທັດສະນະດັ່ງກ່າວນີ້, ວຽກງານຂອງ LIWG ຈະມີຜົນກະທົບສຳຄັນຈຳນວນໜຶ່ງຕໍ່ຂະບວນການສ້າງນະໂຍບາຍ NLP.

**ການຫັນປ່ຽນຈຸດສຸມ**

ແຕກຕ່າງຈາກສອງປີກ່ອນ, ພາກສ່ວນທີ່ກ່ຽວຂ້ອງແລະຜູ້ຄັດສິນບັນຫາໃນສປປລາວໃນປະຈຸບັນຍອມຮັບວ່າມີບັນຫາກ່ຽວກັບທີ່ດິນ, ແລະມີຄວາມຈຳເປັນທີ່ຈະຕ້ອງມີລະບຽບຫຼັກການທີ່ຮັດກຸ່ມກວ່າເກົ່າ. ອີກດ້ານໜຶ່ງ, ພະນັກງານລັດຖະກອນ, ສະມາຊິກຂອງລະຖະບານລາວ, ແລະສະພາແຫ່ງຊາດຈຳນວນໜຶ່ງບໍ່ໄດ້ຖືກວ່າດິນເປັນຊັບສິນທາງເສດຖະກິດພຽງຢ່າງດຽວທີ່ສາມາດຫັນປ່ຽນມາເປັນທຶນ, ແຕ່ວ່າດິນຍັງຖືກຮັບຮູ້ວ່າເປັນປັດໄຈທາງດ້ານເສດຖະກິດສັງຄົມແລະການເມືອງ. ອີກດ້ານໜຶ່ງ, ອົງການຈັດຕັ້ງຜູ້ໃຫ້ທຶນແບບທະວິພາຄີແລະພາຫຸພາຄີແລະຄູ່ຮ່ວມພັດທະນາອື່ນໆບໍ່ໄດ້ປະຕິເສດຄວາມໝາຍຄວາມສຳຄັນຂອງທີ່ດິນວ່າເປັນປັດໄຈສຳຄັນສຳລັບການພັດທະນາຊົນນະບົດແລະການຫຼຸດຜ່ອນຄວາມທຸກຈົນໃນສປປລາວ, ສະນັ້ນຈຶ່ງເຮັດໃຫ້ ຫຼາຍພາກສ່ວນ ເອົາໃຈໃສ່ສູງຕໍ່ບັນຫາທີ່ດິນ. ຜູ້ຕອບແບບສອບຖາມຈາກທັງສອງກຸ່ມນີ້ເຫັນດີເປັນເອກະພາບກັນວ່າວຽກງານຂອງກຸ່ມ LIWG, ຊຶ່ງພົວພັນກັບການປຶກສາຫາລື ກ່ຽວກັບນະໂຍບາຍໃນປີ 2011 ແລະໄດ້ນຳສະເໜີຄວາມກັງວົນແລະຂໍ້ສະເໜີຂອງຕົນເຖິງພາກສ່ວນທີ່ກ່ຽວຂ້ອງຢ່າງຕໍ່ເນື່ອງ, ໄດ້ປະກອບສ່ວນເຮັດໃຫ້ມີການຫັນປ່ຽນຄັ້ງນີ້ໂດຍສະເພາະແມ່ນພາຍໃນກຸ່ມພະນັກງານລັດຖະກອນຈຳນວນໜຶ່ງແລະພາຍໃນສະພາແຫ່ງຊາດ.

**ການຫັນປ່ຽນການປະພຶດ**

ອີງຕາມທັດສະນະທີ່ປ່ຽນແປງກ່ຽວກັບເລື່ອງທີ່ດິນ, ພາກສ່ວນທີ່ກ່ຽວຂ້ອງຈຳນວນໜຶ່ງໃນປະຈຸບັນຕອບຮັບບັນຫາທີ່ດິນ ຢ່າງເປີດກວ້າງ. ໃນໄລຍະຫຼາຍປີທີ່ຜ່ານມາ, ບັນຫາທີ່ດິນທີ່ພົ້ນເດັ່ນ ເຊັ່ນ: ການເວນຄືນທີ່ດິນ, ກົນໄກການຊົດເຊີຍຫຼືບັນຫາອື່ນໆທີ່ຕິດພັນກັບການອອກກຳມະສິດທີ່ດິນຊຸມຊົນທີ່ບໍ່ພຽງແຕ່ເປັນການຕອບຮັບແລະໂຕ້ວາທີກັນໃນກອງປະຊຸມສຳມະນາຕ່າງໆລະຫວ່າງລັດຖະບານ - ອົງການຈັດຕັ້ງທາງສັງຄົມ, ເຊັ່ນ: ກອງປະຊຸມໜ່ວຍງານ LSSWG ຫຼືໃນກອງປະຊຸມຜູ້ໃຫ້ທຶນ - ລັດຖະບານ, ເຊັ່ນດຽວກັນກັບໃນສະພາແຫ່ງຊາດ. ສະນັ້ນ, ບັນຫາທີ່ດິນຈຶ່ງໄດ້ຮັບການລາຍງານຂ່າວຢ່າງຫຼວງຫຼາຍໃນໜັງສືພິມວຽງຈັນທາມ໌. ຜູ້ຕອບແບບສອບຖາມຈຳນວນໜຶ່ງເຫັນດີວ່າກຸ່ມ LIWG ໄດ້ປະກອບສ່ວນທີ່ສຳຄັນເຂົ້າໃນການຫັນປ່ຽນດັ່ງກ່າວນີ້ຍ້ອນວ່າກຸ່ມໄດ້ນຳໃຊ້ຫຼາຍຊ່ອງທາງແລະຫຼາຍເວທີເພື່ອສົ່ງຂໍ້ຄວາມຂອງຕົນໃຫ້ເຖິງພາກສ່ວນທີ່ກ່ຽວຂ້ອງແລະຍ້ອນວ່າກຸ່ມນີ້ໄດ້ສົ່ງຄວາມຮູ້ແລະຄວາມໝາຍຄຳສັບທີ່ຈຳເປັນໃຫ້ພັນທະມິດແລະກຸ່ມເປົ້າໝາຍເພື່ອຕອບຮັບບັນຫາທີ່ດິນດ້ວຍຕົນເອງ. ຫົວຂໍ້ຂ່າວທີ່ສື່ມວນຊົນນຳສະເໜີກໍ່ມີຈຳນວນເພີ່ມຂຶ້ນຊຶ່ງຖືວ່າເປັນຜົນອອກທີ່ບໍ່ໄດ້ຄາດໝາຍໄວ້ຍ້ອນວ່າກຸ່ມ LIWG ບໍ່ໄດ້ເຮັດວຽກ ກ່ຽວກັບສື່ມວນຊົນ.

**ການຫັນປ່ຽນຮູບແບບການພົວພັນວຽກງານ**

ການຫັນປ່ຽນທີ່ເດັດຂາດທີ່ສຸດໃນວຽກງານທີ່ຕິດພັນກັບການສ້າງນະໂຍບາຍ NLP ແມ່ນການປະຕິເສດຂອງສະພາແຫ່ງຊາດຕໍ່ຮ່າງນະໂຍບາຍທີ່ດິນແຫ່ງຊາດໃນປີ 2013. ອີງຕາມຜູ້ສັງເກດການຫຼາຍທ່ານ, ການຕັດສິນໃຈທີ່ຈະບໍ່ຮັບຮອງເອົາຮ່າງນະໂຍບາຍແມ່ນເປັນເລື່ອງໜ້າແປກໃຈ ພໍສົມຄວນ. ແຕ່ອະດີດຈົນເຖິງປະຈຸບັນ, ສະພາແຫ່ງຊາດບໍ່ກ້າທີ່ຈະຄັດຄ້ານບົດສະເໜີຂອງລັດຖະບານ ທີ່ມີຄວາມສຳຄັນເທົ່າທຽມກັບເລື່ອງນີ້. ເຖິງແມ່ນວ່າຂະບວນການສ້າງນະໂຍບາຍເກີດຂຶ້ນ ທ່າມກາງໄລຍະເວລາທີ່ສະພາແຫ່ງຊາດກຳລັງພັດທະນາຄວາມໝັ້ນໃຈຕົນເອງໃຫ້ມີບົດບາດທາງການເມືອງຢ່າງແທ້ຈິງ, ຂໍຄວາມຊ່ວຍເຫຼືອແລະວິຊາການ ຈາກພາຍນອກເພື່ອຍົກລະດັບຂີດຄວາມສາມາດ ແລະຈຸດຢືນຂອງຕົນໃນການສົນທະນາປະເດັນທາງການເມືອງ. ກຸ່ມ LIWG ກໍ່ໄດ້ຮັບຜົນປະໂຫຍດຈຳນວນໜຶ່ງຈາກການປ່ຽນດັ່ງກ່າວນີ້ຊຶ່ງຖືວ່າເປັນ,ການເປີດກວ້າງຄັ້ງໃໝ່' ໃນປີ 2012 ໃນເວລາທີ່ກຸ່ມໄດ້ຕອບຮັບຄຳເຊີນຈາກຄະກຳມາທິການ EPFC ເພື່ອໃຫ້ຄຳປຶກສາແລະການສະໜັບສະໜູນທາງວິຊາການ. ກຸ່ມ LIWG ໄດ້ນຳໃຊ້ກາລະໂອກາດ , ການເປີດກວ້າງຄັ້ງໃໝ່' ຢ່າງຕໍ່ເນື່ອງເຂົ້າໃນການແຊກແຊງແລະຂົນຂວາຍກ່ຽວກັບເລື່ອງທີ່ດິນຢ່າງຕັ້ງໜ້າ. ບົດສະເໜີໃນກອງປະຊຸມຄະນະກຳມາທິການ (ຈົນເຖິງປີ 2012) ກໍ່ຄືຫ້ອງວາງສະແດງຂອງກຸ່ມ LIWG ທີ່ຈັດຂຶ້ນລະຫວ່າງການດຳເນີນກອງປະຊຸມສະໄໝສາມັນ (ກຳລັງດຳເນີນງານຢູ່) ພິສູດໃຫ້ເຫັນວ່ານີ້ແມ່ນວິທີການທີ່ມີປະສິດທິພາບໃນການເຜີດແຜ່ຂໍ້ສະເໜີຕົ້ນຕໍພ້ອມທັງເປັນການຍົກໃຫ້ສະມາຊິກສະພາແຫ່ງຊາດຮັບຮູ້ຄວາມກັງວົນກ່ຽວກັບ

ເນື້ອໃນຂອງຮ່າງນະໂຍບາຍ NLP ສະບັບປີ 2013. ເຖິງແມ່ນວ່າວຽກງານຂອງກຸ່ມ LIWG ຖືກຮັບຮູ້ໂດຍທົ່ວໄປໃນໄລຍະການທົບທວນປັບປຸງຂອງສະພາແຫ່ງຊາດມາເປັນອົງການຈັດຕັ້ງທີ່ມີບົດບາດທາງການເມືອງໃນໄລຍະຫຼາຍປີທີ່ຜ່ານມາ. ແຕ່ວ່າພວກເຮົາຍັງພົບຄວາມຫຍຸ້ງຍາກໃນການກໍານົດ ການປະກອບສ່ວນທີ່ແທ້ຈິງຂອງກຸ່ມເຂົ້າໃນການທົບທວນປັບປຸງດັ່ງກ່າວນີ້.

**ການທົບທວນປັບປຸງດ້ານນະໂຍບາຍ**

ໃນໄລຍະການສຶກສາຂໍ້ມູນຄັ້ງນີ້, ສະພາແຫ່ງຊາດຍັງບໍ່ທັນຮັບຮອງເອົານະໂຍບາຍ NLP. ຜູ້ຕອບແບບສອບຖາມກໍ່ບໍ່ຮູ້ວ່າເອກະສານນະໂຍບາຍ NKP ຢູ່ໃນສະບັບທີ່ເທົ່າໃດແລ້ວແລະຍັງບໍ່ມີໃຜຮູ້ກ່ຽວກັບເນື້ອໃນຂອງເອກະສານດັ່ງກ່າວນີ້. ສະນັ້ນ, ຜົນກະທົບຂອງກຸ່ມ LIWG ຕໍ່ນະໂຍບາຍທີ່ດິນແຫ່ງຊາດຂອງ ສປປລາວຈຶ່ງບໍ່ສາມາດກໍານົດໄດ້.

**ການທົບທວນປັບປຸງດ້ານການປະຕິບັດ**

ຈາກທັດສະນະຕາມທິດສະດີແລ້ວ, ການທົບທວນປັບປຸງດ້ານການປະຕິບັດຈະເກີດຂຶ້ນຫຼັງຈາກທີ່ນະໂຍບາຍສະບັບໃໝ່ໄດ້ຮັບການຈັດຕັ້ງປະຕິບັດ. ແຕ່ວ່າໃນຕົວຈິງ, ພາກສ່ວນທີ່ກ່ຽວຂ້ອງອາດຈະດັດປັບການປະພຶດ ແລະການປະຕິບັດຂອງຕົນໃຫ້ສອດຄ່ອງກັບຕາມມາດຕະການທີ່ຈະເກີດຂຶ້ນ. ສະນັ້ນ, ຈຶ່ງຄາດຄະເນວ່າຈະມີການທົບທວນປັບປຸງທາງດ້ານນະໂຍບາຍ. ຄວາມຈິງແລ້ວ, ວຽກງານນີ້ແມ່ນຢູ່ນອກເໜືອກອບການສຶກສາຂໍ້ມູນ, ແຕ່ວ່າມີຄຸນຄ່າທີ່ຈະສຶກສາເບິ່ງ, ຕົວຢ່າງ, ສະພາບການສົນທະນາປະເດັນຕ່າງໆທີ່ຈະເກີດຂຶ້ນກ່ຽວກັບກົດໝາຍທີ່ດິນ.

## 4.4 ຈຸດດີ

ຖ້າເບິ່ງປັດໄຈພາຍໃນແລະພາຍນອກກໍ່ຄືຜົນກະທົບຂອງນະໂຍບາຍ, ພວກເຮົາສາມາດກໍານົດຈຸດແຂງແລະຈຸດອ່ອນຂອງວຽກການຂໍການສະໜັບສະໜູນຂອງກຸ່ມ LIWG ໄດ້ຈໍານວນໜຶ່ງ.

**ຄວາມພະຍາຍາມ**

ພາຍຫຼັງທີ່ໄດ້ດໍາເນີນວຽກໂຄສະນາຂົນຂວາຍກ່ຽວກັບນະໂຍບາຍ NLP ເປັນເວລາຫຼາຍປີ, ກຸ່ມ LIWG ໄດ້ຮັບການສ້າງຕັ້ງຂຶ້ນແລະໄດ້ຮັບຄວາມເຄົາລົບນັບຖືເປັນອົງການຈັດຕັ້ງນະໂຍບາຍທີ່ມີຈຸດຢືນລະດັບສະຖາບັນ ທີ່ໜັກແໜ້ນ. ສິ່ງນີ້ ເຫັນໄດ້ຈາກການແຕ່ງຕັ້ງໃຫ້ກຸ່ມ LIWG ເປັນປະທານຮ່ວມກອງປະຊຸມໜ່ວຍງານ LSSWG, ຊຶ່ງເປັນກອງປະຊຸມໜຶ່ງທີ່ອາດຈະບໍ່ສາມາດເກີດຂຶ້ນໃນໄລຍະ ຫຼາຍກ່ອນໜ້າປີ. ຕາງໜ້າລັດຖະບານ, ຄູ່ຮ່ວມພັດທະນາ, ອົງການ INGO ແລະອົງການຈັດຕັ້ງທາງສັງຄົມທີ່ກ່ຽວຂ້ອງຕີລາຄາສູງຕໍ່ຄວາມພະຍາຍາມຂອງກຸ່ມ LIWG ໃນເວລາເວົ້າເຖິງການເຜີຍແຜ່ຄວາມກັງວົນກ່ຽວກັບນະໂຍບາຍ NLP ແລະການນໍາສະເໜີຂໍ້ສະເໜີຕົ້ນຕໍ. ອີກໜຶ່ງຈຸດທີ່ສໍາຄັນແມ່ນກຸ່ມ LIWG ບໍ່ໄດ້ຖືກຢຸບຕົວລົງຫຼັງຈາກເຫດການເດືອນທັນວາ 2012, ຊຶ່ງເປັນໄລຍະທີ່ສະມາຊິກທັງພາຍໃນແລະຕ່າງປະເທດໄດ້ຖອນຕົວອອກຈາກຕໍາແໜ່ງສໍາຄັນຂອງກຸ່ມແລະສະພາບການເປີດກວ້າງຂອງພາກລັດຖືກຢຸດສະຫງັກແບບກະທັນຫັນ. ໃນສາຍຕາຂອງບາງພາກສ່ວນ, ການກ້າວຜ່ານໄລຍະທີ່ມີຄວາມຫຍຸ້ງຍາກດັ່ງກ່າວນີ້ແລະການຄົ້ນພົບວິທີການດໍາເນີນງານແບບໃໝ່ໄດ້ຊ່ວຍປັບປຸງຄວາມໜ້າເຊື່ອຖື ຂອງກຸ່ມ LIWG ວ່າເປັນອົງການລະດັບນະໂຍບາຍແລະມີຈຸດຢືນລະດັບສະຖາບັນທີ່ໜັກແໜ້ນ.

> "'ກຸ່ມ LIWG ສາມາດຖອນຕົວເອງໄດ້ ຫຼັງຈາກເດືອນທັນວາປີ 2012. ແຕ່ວ່າພວກກ່ຽວບໍ່ເຮັດເຊັ່ນນັ້ນ. ພວກກ່ຽວຍັງຄົງສືບຕໍ່ສົນທະນາ ກ່ຽວກັບບັນຫາທີ່ລະອຽດອ່ອນເຊັ່ນ: ບັນຫາການເວນຄືນທີ່ດິນ. ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍຕໍ່ຄວາມພະຍາຍາມດັ່ງກ່າວນີ້.'"

(ຄູ່ຮ່ວມພັດທະນາ)

**ຄວາມອາດສາມາດ**

ໃນປະຈຸບັນ, ກຸ່ມLIWG ມີຄວາມຮູ້ລວມກໍ່ຄືຄວາມຮູ້ເລິກເຊິ່ງກ່ຽວກັບເລື່ອງທີ່ດິນໃນສປປລາວແລະໂດຍທົ່ວໄປ. ກຸ່ມນີ້ໄດ້ເຕົ້າໂຮມເອົາບຸກຄົນແລະອົງການຈັດຕັ້ງທີ່ມາຈາກຫຼາຍຂະແໜງການທີ່ແຕກຕ່າງກັນ, ມີພື້ນຖານຄວາມເປັນມາທີ່ຫຼາຍຫຼາຍແລະມີປະສົບການຍາວນານແລະກິດຈະກຳຕົວຈິງໃນໝົດທຸກຂັ້ນ. ສະນັ້ນ, ກຸ່ມນີ້ຈິ່ງມີຄວາມສາມາດວິເຄາະເລື່ອງທີ່ດິນໃນສປປລາວຢ່າງມີຄວາມສອດຄ່ອງກັບການສົນທະນາລວມກ່ຽວກັບກຳມະສິດຊັບພະຍາກອນ, ແລະໃນທາງກົງກັນຂ້າມກັນ, ເພື່ອປັບໃຊ້ເຂົ້າກັບສະພາບຕົວຈິງແລະເພື່ອສະແດງໃຫ້ເຫັນແນວຄວາມຄິດແບບນາມມະທຳເຊັ່ນ: ຄະນະກຳມາທິການ FPFC. ໂດຍສະເພາະປະເດັນທີສອງແມ່ນມີຄວາມສຳຄັນໃນເວລາອະທິບາຍຜົນສະທ້ອນທີ່ອາດຈະເກີດຂຶ້ນກັບກຸ່ມເປົ້າໝາຍທີ່ເປັນສາເຫດມາຈາກນະໂຍບາຍແລະກົດໝາຍເຊັ່ນ: ນັກການເມືອງແລະພະນັກງານລັດຖະກອນທີ່ບໍ່ມີຄວາມຮູ້ກ່ຽວກັບເລື່ອງທີ່ດິນ. ເວົ້າສະເພາະ, ຕາງໜ້າລັດຖະບານໄດ້ຊີ້ໃຫ້ເຫັນບັນຫານີ້ວ່າເປັນຄຸນນະພາບຂອງກຸ່ມ LIWG, ໂດຍເນັ້ນໜັກວ່າທີ່ປຶກສາທີ່ໄດ້ຮັບຄ່າຈ້າງສູງຈຳນວນໜຶ່ງອາດຈະບໍ່ສາມາດປະສົບຜົນສຳເລັດຊ້ຳກັນກັບ ກຸ່ມນີ້. ນອກນັ້ນ, ກຸ່ມ LIWG ຍັງຮຽນຮູ້ທີ່ຈະເຜີຍແຜ່ເນື້ອໃນຂອງຂໍ້ຄວາມໃນລັກສະນະທີ່ບໍ່ເປັນການຕໍ່ຕ້ານແລະມີຄວາມສົມດຸ່ນ ເພື່ອດຶດດູງກຸ່ມເປົ້າໝາຍຂອງພວກເຂົາ - ນີ້ແມ່ນຄຸນນະພາບທີ່ຈຳເປັນຂອງການໂຄສະນາຂົນຂວາຍ, ບໍ່ແມ່ນພຽງແຕ່ໃນ ສປປລາວເທົ່ານັ້ນ.

**ຄວາມມຸ້ງໝັ້ນ**

ບໍ່ມີຂໍ້ສົງໄສ ກ່ຽວກັບ ‚ຄວາມປາດຖະໜາອັນແຮງກ້າ‘ ຂອງສະມາຊິກກຸ່ມ LIWG ເພື່ອປັບປຸງສະພາບການກ່ຽວກັບທີ່ດິນໃນ ສປປລາວ. ບົດສຳພາດທັງໝົດພະນັກງານກຸ່ມ LIWG ແລະຜູ້ສະໜັບສະໜູນທັງໝົດສະແດງໃຫ້ເຫັນຄວາມມຸ້ງໝັ້ນພິເສດກ່ຽວກັບເລື່ອງທີ່ດິນ, ການມີອຸດົມການດຽວກັນທີ່ເຂັ້ມແຂງເພື່ອປະຊາຊົນຢູ່ເຂດຊົນນະບົດແລະເພື່ອການຕໍ່ສູ້ແນໃສ່ປ້ອງກັນແລະຄ້ຳປະກັນສິດທິຄອບຄອງທີ່ດິນຂອງພວກເຂົາ. ຄວາມຈິງແລ້ວ, ກິດຈະກຳຈຳນວນໜຶ່ງ ຂອງກຸ່ມ LIWG ທີ່ຕິດພັນກັບນະໂຍບາຍ NLP ຈະບໍ່ສາມາດເກີດຂຶ້ນໄດ້ຖ້າປາດສະຈາກການພົວພັນວຽກງານອັນຍາວນານຂອງກຸ່ມ ແລະການຮ່ວມມືກັນຂອງສະມາຊິກແຕ່ລະທ່ານຊຶ່ງເປັນຜູ້ທີ່ອອກຄວາມຄິດເຫັນແລະປະສານງານໃນຊ່ວງເວລາທີ່ສັ້ນທີ່ສຸດລວມທັງການເຮັດວຽກໃນເວລາກາງຄືນ. ເລື່ອງນີ້ແມ່ນເປັນຄວາມຈິງໂດຍສະເພາະແມ່ນສະມາຊິກຂອງ ‚ໜ່ວຍງານສະເພາະນະໂຍບາຍ NLP‘, ຊຶ່ງເປັນສະມາຊິກກຸ່ມ LIWG ທີ່ມີຄວາມມຸ້ງໝັ້ນທີ່ໄດ້ຮ່ວມວຽກງານນີ້ໃນປີ 2012. ຄວາມມຸ້ງໝັ້ນທີ່ໜັກແໜ້ນນີ້ໄດ້ຮັບການຢ້ຳຕື່ມໂດຍຄວາມເຊື່ອໝັ້ນພາຍໃນສະມາຊິກຫຼັກຂອງກຸ່ມ LIWG.

> “‘ຄວາມມຸ້ງໝັ້ນສ່ວນຕົວຂອງພະນັກງານຈຳນວນໜຶ່ງຊ່ວຍຮັກສາກຸ່ມ (….) ພວກເຮົາຈະແຕກແຍກອີກຕໍ່ໄປ, ເຖິງແມ່ນນະໂຍບາຍ NLP ໄດ້ຮັບການອະນຸມັດແລ້ວກໍ່ຕາມ.’”
>
> (ສະມາຊິກກຸ່ມLIWG)

**ການຈັດສັນວຽກງານພາຍໃນກຸ່ມ**

ກອງເລຂາກຸ່ມ LIWG ມີຄວາມຈຳກັດທາງດ້ານຊັບພະຍາກອນມະນຸດແລະງົບປະມານ, ແຕ່ວ່າເປັນສະຖາບັນທີ່ມີໜ້າແລະເຂົ້າເຖິງໃນນາມຕາງໜ້າອົງການຈັດຕັ້ງອື່ນໆເຊັ່ນ: INGO, ອົງການຈັດຕັ້ງທາງສັງຄົມແລະອົງການ NPB. ສິ່ງນີ້ຖືກວ່າເປັນຈຸດດີອັນໜຶ່ງຂອງກຸ່ມ. ຕາງໜ້າລັດຖະບານເຫັນວ່າການມີອົງກອນດັ່ງກ່າວນີ້ເຮັດໃຫ້ມີຄວາມສະດວກສະບາຍຫຼາຍຂຶ້ນໃນການເຂົ້າເຖິງອົງການຈັດຕັ້ງທາງສັງຄົມ. ໃນຂະນະທີ່ບາງພາກສ່ວນເຫັນວ່າກຸ່ມນີ້ມີຈຸດດີຢູ່ບ່ອນວ່ານຳໃຊ້ງົບບໍລິການຕ່ຳ, ພາກສ່ວນອື່ນເວົ້າວ່າລັດຖະບານອາດຈະຮັບເອົາການພົວພັນວຽກງານກັບອົງການຈັດຕັ້ງໃນລັກສະນະນີ້ເຊັ່ນ: ກຸ່ມ LIWG, ໃນຂະນະທີ່ການຕິດຕໍ່ພົວພັນໂດຍກົງກັບແຕ່ລະອົງກອນຍັງຄົງເປັນເລື່ອງລະອຽດອ່ອນຢູ່. ລະດັບການປະສານງານແລະການຈັດການພາຍໃນກຸ່ມ LIWG ໄດ້ສ່ອງແສງໃຫ້ເຫັນຂໍ້ສະເໜີຕົ້ນຕໍ

ຂອງກຸ່ມນີ້, ຊຶ່ງໄດ້ຮັບການເຜີຍແຜ່ໃນລັກສະນະທີ່ສອດຄ່ອງ ແລະຕໍ່ເນື່ອງ. ແຕ່ວ່າວຽກງານນີ້ກໍ່ບໍ່ເປັນໄປຕາມແຜນສະເໜີໄປ: ອົງການ GIZ ແລະກຸ່ມ LIWG ໄດ້ເຜີຍແຜ່ເນື້ອໃນທີ່ແຕກຕ່າງກັນໃນເວລາທີ່ມີການເລີ່ມຕົ້ນຂະບວນການຮ່າງນະໂຍບາຍ NLP, ແລະໃນໄລຍະຕໍ່ມາທັງສອງພາກສ່ວນຈຶ່ງເຫັນດີທີ່ຈະນຳໃຊ້ເນື້ອໃນດຽວກັນ. ໃນປີ 2013, ໃນເວລາທີ່ ຜູ້ອຳນວຍການປະທານກຸ່ມ LIWG ນຳສະເໜີຄວາມຕ້ອງການຕໍ່ສະພາແຫ່ງຊາດຊຶ່ງເປັນເນື້ອໃນທີ່ບໍ່ສອດຄ່ອງກັບນະໂຍບາຍຂອງກຸ່ມ LIWG. ສະນັ້ນ, ພາລະບົດບາດຂອງກອງເລຂາທີ່ຕິດພັນກັບການສັງລວມທັດສະນະ ແລະຄຳຄິດເຫັນແລະທີ່ຕິດພັນກັບການກຳນົດກອບເນື້ອໃນຂອງກຸ່ມແມ່ນມີຄວາມຈຳເປັນທີ່ສຸດ.

## 4.5 ຈຸດອ່ອນ

### ຂາດການເຂົ້າເຖິງ

ເຖິງແມ່ນວ່າເປັນເວລາ 4 ປີແລ້ວທີ່ມີການພົວພັນວຽກງານກັບຜູ້ຕັດສິນບັນຫາຂອງສປປລາວແລະຕາງໜ້າພາກລັດທີ່ກ່ຽວຂ້ອງ, ສະມາຊິກຂອງກຸ່ມ LIWG ຍອມຮັບວ່າພວກເຂົາຍັງບໍ່ຮູ້ເລີຍວ່າໃຜຈະເປັນຜູ້ຕັດສິນໃຈຂັ້ນສຸດທ້າຍ, ແລະການຕັດສິນດັ່ງກ່າວຈະຢູ່ບົນພື້ນຖານຫຍັງ. ເລື່ອງນີ້ແມ່ນບັນຫາລວມພາຍໃນອົງການຈັດຕັ້ງທາງການເມືອງຕ່າງປະເທດທີ່ເຮັດວຽກໃນສປປລາວ, ເປັນຕົ້ນແມ່ນຜູ້ໃຫ້ທຶນແລະສະຖາທູດ. ຈຳນວນໜຶ່ງຄິດວ່າກົມການເມືອງມີບົດບາດຕັດສິນຂັ້ນສຸດທ້າຍກ່ຽວກັບເນື້ອໃນທີ່ຈະລະບຸຫຼືບໍ່ລະບຸໄວ້ໃນນະໂຍບາຍ NLP, ພາກສ່ວນໃດທີ່ຄວນຈະເຫັນເອກະສານສະບັບສຸດທ້າຍ, ແລະຄວນສົ່ງເອກະສານໄປໃສໃນຂັ້ນຕໍ່ໄປ. ອີກຈຳນວນໜຶ່ງຄິດວ່າການຕັດສິນໃຈຂັ້ນສຸດທ້າຍບໍ່ໄດ້ຂຶ້ນຢູ່ກັບກົມການເມືອງພຽງຝ່າຍດຽວແຕ່ວ່າຂຶ້ນກັບຜົນການປຶກສາຫາລືທີ່ມີຄວາມສັບສົນແລະຫຼາຍຫຼືບຫຼາຍຕ່າວລະຫວ່າງອົງການຈັດຕັ້ງຂອງລັດ ໃນແຕ່ລະຂັ້ນ. ບໍ່ວ່າຮູບການໃດ, ການຂາດຄວາມຈະແຈ້ງກ່ຽວກັບ ,ລະບຽບຫຼັກການ' ໃນການຮ່າງນະໂຍບາຍແມ່ນບັນຫາພື້ນເດັ່ນສຳລັບແຕ່ລະພາກສ່ວນ, ລວມທັງພະນັກງານບັດຖະກອນ. ສະນັ້ນ, ໃນຂະນະທີ່ກຸ່ມ LIWG ພະຍາຍາມຮັກສາຮູບແບບການສົນທະນາທີ່ເປີດກວ້າງແລະມີຄວາມສຳຄັນກັບກະຊວງ MONRE ແລະສະຖາບັນອື່ນໆທີ່ເປັນພາກລັດ, ແຕ່ວ່າກໍ່ຍັງບໍ່ທັນຈະແຈ້ງເທື່ອວ່າເນື້ອໃນຂອງຂໍ້ຄວາມຕ່າງໆໄດ້ຮັບການສົ່ງຕໍ່ແລະເຂົ້າໃຈຫຼືບໍ່ແລະໂດຍພາກສ່ວນໃດ. ສະຫຼຸບແລ້ວ, ຄຳຄິດເຫັນຂອງຜູ້ຕາງໜ້າພາກລັດທີ່ມີຄວາມມຸ້ງໝັ້ນ (ແລະໄດ້ຮັບອະນຸຍາດ) ໃນການເວົ້າແລະຮັບຟັງຄຳຄິດເຫັນຈາກກຸ່ມ LIWG ຍັງຄົງມີລັກສະນະຈຳກັດທີ່ສຸດ.

> "'ພວກເຮົາສາມາດແຊກແຊງພາກສ່ວນທີ່ກຽມພ້ອມທີ່ຈະຖືກແຊງເທົ່ານັ້ນ. ແຕ່ວ່າພາກສ່ວນນີ້ແມ່ນຈຳນວນໜ້ອຍທີ່ສຸດ.'"
>
> (ສະມາຊິກກຸ່ມ LIWG)

### ຂາດການຊີ້ນຳທາງດ້ານຂັ້ນຕອນ

ໃນປີ 2012 ກຸ່ມ LIWG ໄດ້ຮັບບັດເຊີນຈາກກະຊວງ MONRE ແລະຄະນະກຳມາທິການ EPFC ເພື່ອໃຫ້ສະໜັບສະໜູນຂະບວນການສ້າງນະໂຍບາຍ, ນີ້ແມ່ນກາລະໂອກາດພິເສດສຳລັບກຸ່ມ. ຫຼັງຈາກນັ້ນ, ກາລະໂອກາດ ສຳລັບການແຊກແຊງໂດຍກົງໃນລະດັບນະໂຍບາຍບໍ່ເກີດຂຶ້ນເລື່ອຍ ໃນປະເທດຕ່າງໆໂດຍສະເພາະແມ່ນປະເທດລາວ. ກຸ່ມ LIWG ໄດ້ຮັບຄຳເຊີນແລະເລີ່ມຕົ້ນສະໜອງຄຳຄິດເຫັນຕ່າງໆ, ສ່ວນຫຼາຍແລ້ວອີງຕາມການຮ້ອງຂໍ. ເທື່ອລະໜ້ອຍ, ຄຳຄິດເຫັນຂອງກຸ່ມກາຍເປັນອັກໜຶ່ງຂອງນະໂຍບາຍຊຶ່ງຖືກຂຽນໂດຍສະມາຊິກຂອງກຸ່ມ LIWG. ເຖິງແມ່ນວ່າກຸ່ມ LIWG ສາມາດແຊກແຊງໂດຍກົງກ່ຽວກັບເນື້ອໃນຂອງຮ່າງນະໂຍບາຍ NLP. ແຕ່ວ່າກຸ່ມ LIWG ພັດສູນເສຍການຄວບຄຸມກ່ຽວກັບຂັ້ນຕອນການຮ່າງນະໂຍບາຍ. ຈາກນັ້ນ, ສະມາຊິກຸ່ມເກືອບທັງໝົດຈຶ່ງຮັບຮູ້ວ່າລັດຖະບານຈະບໍ່ຍອມຮັບຂໍ້ສະເໜີແຕ່ຈຸດແລະຂໍ້ສະເໜີທັງໝົດ ຂອງກຸ່ມ; ແລະພ້ອມທັງຮັບຮູ້ວ່າຮ່າງເອກະສານສະບັບຕໍ່ໄປຈະໄດ້ຮັບການສອບຖາມຢ່າງໜັກຈາກຜູ້ຕັດສັນບັນຫາ. ເຖິງຢ່າງໃດກໍ່ດີ, ກຸ່ມຍັງຄົງຕ້ອງການທີ່ຈະສຸມ

ໃສ່ການສົນທະນາ ທາງດ້ານເນື້ອໃນ. ຂໍ້ຈໍາກັດຂອງວິທີການນີ້ເລີ່ມເຫັນໄດ້ຢ່າງຊັດເຈນໃນເວລາທີ່ມີເຫດການເດືອນທັນວາ 2012 ເກີດຂຶ້ນ. ຄະນະກໍາມາທິການ EPFC ໄດ້ຢຸດການຮ່ວມມືກັບກຸ່ມ LIWG; ແລະການເຂົ້າເຖິງຕາງໜ້າຂອງລັດຖະບານມີຄວາມຫຍຸ້ງຍາກອີກຄັ້ງໜຶ່ງ. ໄລຍະນີ້ແມ່ນໄລຍະທີ່ສະມາຊິກຈໍານວນຫຼວງຫຼາຍຂອງກຸ່ມ LIWG ຮັບຮູ້ວ່າທິດສະດີຂອງການປ່ຽນແປງ (ທີ່ບໍ່ຊັດເຈນ) ຂອງພວກເຂົາ - ຄືການປັບປຸງນະໂຍບາຍຂອງປະເທດລາວໂດຍຜ່ານການປຶກສາຫາລືກັບຊ່ຽວຊານ - ໃຊ້ບໍ່ໄດ້.

> ““ມັນບໍ່ແມ່ນການກໍານົດຂໍ້ສະເໜີ, ບໍ່ແມ່ນກ່ຽວກັບເນື້ອໃນ. ແຕ່ວ່າມັນກ່ຽວກັບຂັ້ນຕອນ. ພວກເຮົາໄດ້ພະຍາຍາມສ້າງໃຫ້ຮັດກຸມໝົດທຸກຂັ້ນຕອນ’”
>
> (ສະມາຊິກຫຼັກຂອງກຸ່ມLIWG)

ຍ້ອນຫຼັງກັບໄປ, ສະມາຊິກກຸ່ມLIWG ຈໍານວນໜຶ່ງໃນປະຈຸບັນເຫັນດີວ່າພວກເຂົາຄວນຈະເອົາໃຈໃສ່ເລື່ອງຂະບວນການທາງການເມືອງໃຫ້ຫຼາຍກວ່ານີ້. ສະນັ້ນ, ກຸ່ມ LIWG ອາດຈະສາມາດໄດ້ຮັບຄວາມມຸ້ງໝັ້ນຈໍານວນໜຶ່ງຈາກຄະນະກໍາມາທິການ EPFC ເພື່ອເປີດກວ້າງໃຫ້ພາກສ່ວນອື່ນປະກອບສ່ວນ, ແທນທີ່ຈະມີແຕ່ກຸ່ມ LIWG ພຽງຝ່າຍດຽວ. ສ່ວນຫຼືຂໍ້ໃດທີ່ເປັນການສົນທະນາທາງດ້ານວິຊາການຄວນຈະມີລັກສະນະກວ້າງຂວາງຫຼາຍກວ່ານີ້ , ພາກສ່ວນໜຶ່ງຄວນຈະການປຶກສາຫາລືກັບ ສາທາລະນະ. ນອກນັ້ນ, ເລື່ອງນີ້ຍັງເປັນປະໂຫຍດໃນການຮັບປະກັນໃຫ້ໄດ້ຮັບການສະໜັບສະໜູນ ຈາກຄູ່ຮ່ວມພັດທະນາໃນເບື້ອງຕົ້ນ. ການປິດຕົວລົງຂອງການປຶກສາຫາລືຫຼັງຈາກເດືອນທັນວາ 2012 ກາຍເປັນຄວາມຫຍຸ້ງຍາກຫຼາຍຂຶ້ນສໍາລັບລັດຖະບານ. ແຕ່ວ່າ, ເລື່ອງນີ້ເປັນການສົມມຸດຖານພຽງເທົ່ານັ້ນ.

**ເວທີການສະແດງຄໍາຄິດເຫັນຂອງຕ່າງປະເທດ**

ຈຸດອ່ອນອີກຈຸດໜຶ່ງທີ່ຜູ້ຕອບແບບສອບຖາມເວົ້າເຖິງແມ່ນການຂາດຄວາມດຸ່ນດ່ຽງຂອງຂອງກຸ່ມ LIWG ລະຫວ່າງອົງການຈັດຕັ້ງພາຍໃນປະເທດແລະອົງການຈັດຕັ້ງສາກົນ. ສະມາຊິກກຸ່ມປະມານ 40 ພາກສ່ວນພາຍໃນຈໍານວນສະມາຊິກທັງໝົດຈໍານວນ 95 ພາກກສ່ວນແມ່ນເປັນມີຕົ້ນກໍາເນີດໃນປະເທດລາວ; ແລະພາຍໃນຜູ້ສະໜັບສະໜູນທັງໝົດຈໍານວນ 116 ພາກສ່ວນ, ມີພຽງແຕ່ 15 ພາກສ່ວນເທົ່ານັ້ນທີ່ເປັນຄົນລາວ (ຕົວເລກໃນເດືອນພຶດສະພາ 2015). ນອກນັ້ນ, ມີພຽງແຕ່ 1 ໃນຄະນະຊີ້ນໍາທັງໝົດຈໍານວນ 7 ທ່ານແມ່ນອົງການຈັດຕັ້ງຂອງລາວ. ສ່ວນຫຼາຍແລ້ວ, ອົງການ NPA ແລະອົງການ NPB ໄດ້ແລກປ່ຽນຂໍ້ມູນຂ່າວສານຮ່ວມກັນແລະມີສ່ວນຮ່ວມໃນກອງປະຊຸມສໍາມະນາແລະ ການປຶກສາຫາລືພາຍໃນ. ແຕ່ວ່າ, ພວກກ່ຽວຫຼີກລ້ຽງກິດຈະກໍາທີ່ພົ້ນເດັ່ນ ແລະທີ່ລວມເອົາສາທາລະນະຊົນຫຼາຍເກີນໄປ. ອີງຕາມຜູ້ຕອບແບບສອບຖາມຈໍານວນໜຶ່ງ, ການມີສະມາຊິກທີ່ເປັນຄົນລາວເປັນຈໍານວນໜ້ອຍແມ່ນບັນຫາຍາວນານຂອງໃນໄລຍະເລີ່ມຕົ້ນຂອງກຸ່ມ. ອີກດ້ານໜຶ່ງ, ອົງການຈັດຕັ້ງທາງສັງຄົມແລະຫົວໜ່ວຍທຸລະກິດທີ່ບໍ່ຫວັງຜົນກໍາໄລກໍ່ໄດ້ຮັບຜົນກະທົບຈາກການຂາດຊັບພະຍາກອນການເງິນແລະບຸກຄະລາກອນ, ຈຶ່ງເຮັດໃຫ້ພວກເຂົາເນັ້ນໜັກໃສ່ການຈັດຕັ້ງປະຕິບັດໂຄງການແລະການຈັດຊື້, ແທນທີ່ຈະເຮັດວຽກໃນລະດັບນະໂຍບາຍ. ບັນຫານີ້ແມ່ນບັນທີ່ແຜ່ລາມໃນໝົດທຸກອົງການ NGO ໃນໂລກນີ້, ແລະບັນຫານີ້ເກີດຂຶ້ນ ພາຍໃນກຸ່ມສະມາຊິກອົງການຈັດຕັ້ງສາກົນເຊັ່ນກັນເຊັ່ນ: ມີພຽງແຕ່ທີ່ປຶກສາປະຈໍາດ້ານນະໂຍບາຍພຽງຄົນດຽວ. ເຖິງແມ່ນວ່າຂອບເຂດຂອງອົງການຈັດຕັ້ງຂອງປະເທດລາວມີລັກສະນະແຄບ. ແຕ່ວ່າການຂາດຊັບພະຍາກອນສໍາລັບວຽກນະໂຍບາຍສາມາດສ່ອງແສງໃຫ້ເຫັນວ່າໂດຍທົ່ວໄປແລ້ວອົງການ NPA ບໍ່ມີຄວາມສົນໃຈວຽກງານລະດັບນະໂຍບາຍ. ອີກດ້ານໜຶ່ງ, ກຸ່ມການເຊື່ອມໂຍງເສດຖະກິດຈຸລະພາກແລະມະຫາພາກ (MIC-MAC), ຊຶ່ງເປັນເຄືອຂ່າຍອົງການຈັດຕັ້ງທາງສັງຄົມທີ່ເຮັດວຽກກ່ຽວກັບທີ່ດິນ, ເຊັ່ນກັນ, ແຕ່ວ່າບໍ່ສະແດງອອກຢ່າງຈະແຈ້ງ. ໂດຍປະກອບດ້ວຍອົງການຈັດຕັ້ງຂອງລາວ, ສ່ວນໃຫ່ຍແລ້ວ, ກຸ່ມ MIC-MACດໍາເນີນຄວາມພະຍາຍາມໜ້ອຍກວ່າກຸ່ມ LIWG ກ່ຽວກັບຂະບວນການສ້າງນະໂຍບາຍ NLP. ເຫດຜົນໜຶ່ງທີ່ສໍາຄັນແມ່ນອົງການຈັດຕັ້ງທາງສັງຄົມແລະອົງການຈັດຕັ້ງ NPB ຈໍານວນໜຶ່ງຖືກກີດກັນຈາກເວທີສົນທະນາກ່ຽວກັບທີ່ດິນຫຼັງຈາກເດືອນທັນວາ 2012 ເປັນຕົ້ນມາ, ດ້ວຍ

ຄວາມຢ້ານກົວວ່າຈະໄດ້ຮັບຜົນສະທ້ອນສໍາລັບພາກສ່ວນທີ່ກ້າຕໍານິນະໂຍບາຍທີ່ດິນຂອງລັດແລະນະໂຍບາຍອື່ນໆທີ່ມີຄວາມລະອຽດອ່ອນ. ຜູ້ຕອບແບບສອບຖາມທີ່ເປັນຄົນລາວເວົ້າຢ່າງເປີດເຜີຍວ່າພວກເຂົາອາດຈະເຮັດໃຫ້ຊີວິດຂອງເຂົາຕົກຢູ່ໃນຄວາມສ່ຽງຖ້າວ່າພວກເຂົາຍັງສືບຕໍ່ວຽກງານຄືດັ່ງທີ່ຜ່ານມາ. ສະນັ້ນ, ພວກເຂົາຈຶ່ງຕ້ອງການໃຫ້ອົງການຈັດຕັ້ງ INGO ເປັນຜູ້ເວົ້າແລະຕາງໜ້າກຸ່ມ LIWG ຕໍ່ໜ້າລັດຖະບານ. ບົນພື້ນຖານທັດສະນະນີ້, ການຂາດຄວາມດຸ່ນດ່ຽງລະດັບສະຖາບັນບໍ່ແມ່ນບັນຫາທີ່ສໍາຄັນແລະສາມາດເປັນການຕັດສິນໃຈລະດັບຍຸດທະສາດ.

> "'ບັນຫາທີ່ແທ້ຈິງແມ່ນການສົນທະນາຂອງພວກເຮົາສ່ວນໃຫ່ຍຢູ່ແຕ່ພາຍໃນກຸ່ມ INGO. ເນື້ອໃນຂອງການສົນທະນາບໍ່ເຄີຍຖືກເຜີຍແຜ່ອອກພາຍນອກ, ໄປສູ່ເວທີຢ່າງກວ້າງຂວາງຂອງການສົນທະນາລະດັບນະໂຍບາຍ.'"
>
> (ສະມາຊິກຫຼັກຂອງກຸ່ມ LIWG)

ເຖິງຢ່າງໃດກໍ່ດີ, ໃນທັດສະນະຂອງຜູ້ຕອບແບບສອບຖາມຈໍານວນໜຶ່ງ, ພາລະບົດບາດທີ່ພົ້ນເດັ່ນຂອງອົງການຈັດຕັ້ງສາກົນໄດ້ສົ່ງຜົນສະທ້ອນທາງລົບຕໍ່ຜົນກະທົບຂອງກຸ່ມLIWG ກ່ຽວກັບວຽກງານການຮ່າງນະໂຍບາຍ NLP. ບາງພາກສ່ວນຍັງຕີລາຄາສູງຕໍ່ຂະບວນການຮ່າງນະໂຍບາຍທີ່ດິນແຫ່ງຊາດທີ່ນໍາພາສ່ວນໃຫ່ຍ ໂດຍຜູ້ໃຫ້ທຶນ. ໃນບາງຄໍາເວົ້າຂອງຜູ້ຕອບແບບສອບຖາມຈໍານວນໜຶ່ງ, ຄະນະກໍາມາທິການ EPFC ທັງໝົດໄດ້ຮັບໃນໄລຍະທ້າຍແມ່ນ ,ຄໍາແນະນໍາຈໍານວນໜຶ່ງຈາກ INGO' - ຊຶ່ງເປັນເລື່ອງທີ່ຊ່ວຍພວກເຂົາໄດ້ພຽງແຕ່ໜ້ອຍດຽວສໍາລັບການເອົາຊະນະຄວາມຄັດຄ້ານພາຍໃນຂອງລັດຕໍ່ວຽກປະຕິຮູບທີ່ດິນ. ນອກນັ້ນ, ບາງຄົນໃຫ້ເຫດຜົນວ່າຕາງໜ້າກຸ່ມ LIWG ທີ່ປາກພາສາອັງກິດເປັນສ່ວນໃຫ່ຍ ຈະພົບຄວາມລົ້ມເຫຼວໃນການເຂົ້າເຖິງອົງການຈັດຕັ້ງຂອງການປ່ຽນແປງທີ່ແທ້ຈິງພາຍໃນສະພາແຫ່ງຊາດ, ຊຶ່ງເປັນຜູ້ທີ່ບໍ່ຮູ້ພາສາອັງກິດເລີຍ.

**ຈຸດສຸມລະດັບຊາດ**

ເຖິງແມ່ນວ່າກຸ່ມ LIWG ພົບກັບອຸປະສັກຊໍ້າແລ້ວຊໍ້າອີກກໍ່ຕາມ, ກຸ່ມໄດ້ຕັດສິນໃຈພະຍາຍາມນໍາໃຊ້ວິທີການອື່ນໆແລະເຂົ້າເຖິງອໍານາດການປົກເມືອງແລະແຂວງກໍຄືລະດັບສາກົນ (ສົມທຽບກັບພາກທີ 5). ກ່ຽວກັບລະດັບສາກົນ, ອາດຈະບໍ່ມີຄວາມເປັນໄປໄດ້ເລີຍທີ່ຈະເລີ່ມການສົນທະນາ ກັບປະເທດໄກ້ຄຽງກ່ຽວກັບທີ່ດິນ, ໂດຍສະເພາະແມ່ນພາຍຫຼັງຈາກເຫດການທາງລົບທີ່ເກີດຂຶ້ນໃນກອງປະຊຸມສຸດຍອດອາຊຽນໃນປີ 2012 ແລະໃນກອງປະຊຸມ AEPF. ກົນໄກການເຊື່ອມໂຍງທີ່ອ່ອນແອກັບຂັ້ນທ້ອງຖິ່ນນໍາພາໄປສູ່ຈຸດອ່ອນພາຍໃນຂອງກຸ່ມ LIWG. ຄວາມຈິງແລ້ວ, ກຸ່ມ LIWG ໄດ້ຢຸດການດໍາເນີນກິດຈະກໍາຂອງຕົນໃນລະດັບທ້ອງຖິ່ນຫຼັງຈາກເດືອນທັນວາປີ 2012 ເປັນຕົ້ນມາ. ຕັ້ງແຕ່ນັ້ນມາ, ກຸ່ມ LIWG ໄດ້ພົບຄວາມຫຍຸ້ງຍາກຫຼາຍໃນການນໍາໃຊ້ຫຼັກຖານຂັ້ນທ້ອງຖິ່ນເປັນເຄື່ອງມືໃນການສົນທະນາ ລະດັບນະໂຍບາຍລະດັບຊາດເຊັ່ນ: ເພື່ອສະແດງໃຫ້ເຫັນບັນຫາຕ່າງໆທີ່ຕິດພັນກັບທີ່ດິນໂດຍຜ່ານກໍລະນີສຶກສາຈາກທ້ອງຖິ່ນ. ເຫດຜົນຕົ້ນຕໍແມ່ນຄວາມຢ້ານກົວ - ຊີ້ໃຫ້ເຫັນວ່າກໍລະນີຂອງການຄຸ້ມຄອງທີ່ບໍ່ຖືກຕ້ອງຂອງພາກລັດ, ການສໍ້ລາດບັງຫຼວງແລະການສໍ້ໂກງ (ສໍາລັບຫັກຖານທີ່ມີຢູ່ຢ່າງຫຼວງຫຼາຍ) ຖືວ່າອັນຕະລາຍເກີນໄປ, ບໍ່ພຽງແຕ່ສໍາລັບອົງການຈັດຕັ້ງທີ່ກ່ຽວຂ້ອງແຕ່ວ່າຍັງມີຜົນສະທ້ອນຕໍ່ ປະຊາຊົນທ້ອງຖິ່ນທີ່ໄດ້ຮັບຜົນກະທົບ.

> "'ການນໍາໃຊ້ຫຼັກຖານກ່ຽວກັບທີ່ດິນມີຄວາມຫຍຸ້ງຍາກ. ບໍ່ວ່າຕອນໃດທີ່ພວກທ່ານຈັດພິມກໍລະນີໃດໜຶ່ງ, ໝົດທຸກຄົນຈະຮູ້ວ່າໃຜເປັນຜູ້ເຮັດ.'"
>
> (ສະມາຊິກLIWG)

ການສຸມໃສ່ແນວທາງປະຕິບັດທີ່ດີແມ່ນອີກໜຶ່ງທາງເລືອກ - ເຖິງແມ່ນວ່າຈະບໍ່ມີແນວທາງປະຕິບັດທີ່ດີຫຼາຍແລ້ວປານໃດກໍ່ຕາມ. ຄຽງຄູ່ກັບການຢຸດວຽກງານຢູ່ຂັ້ນທ້ອງຖິ່ນ, ກຸ່ມLIWG ໄດ້ສູນເສຍຄວາມສົນໃຈກ່ຽວກັບກິດຈະກໍາຂອງສະມາຊິກ ແລະຜູ້ສະໜັບສະໜູນແຕ່ລະພາກສ່ວນ. ຄະນະຊີ້ນໍາຈໍານວນໜຶ່ງຍອມຮັບວ່າພວກເຂົາບໍ່ຮູ້ວ່າ

ສະມາຊິກຂອງກຸ່ມເຮັດວຽກງານຫຍັງແນ່ແລະບໍ່ຮູ້ວ່າວຽກງານເຫຼົ່ານັ້ນສຳມາດນຳໃຊ້ເຂົ້າໃນການໂຄສະນາຂົນຂວາຍໄດ້ຫຼືບໍ. ສະນັ້ນ, ຍັງຄົງມີຫຼາຍວຽກທີ່ຈະໄດ້ຮັບການຄົ້ນຄວ້າເພີ່ມຕື່ມ.

# 5 ສະຫຼຸບແລະຄຳແນະນຳ

ອີງຕາມຜົນການວິເຄາະປັດໄຈພາຍໃນແລະພາຍນອກ, ການປະເມີນຜົນກະທົບທາງດ້ານນະໂຍບາຍແລະຈຸດອ່ອນແລະຈຸດແຂງຂອງກຸ່ມLIWG, ຍັງຄົງມີບັນຫາຈຳນວນໜຶ່ງທີ່ກຸ່ມ LIWG ຄວນຈະພິຈາລະນາສຳລັບກິດຈະກຳໃນອະນາຄົດ, ຊຶ່ງກວມເອົາໄລຍະພາຍຫຼັງການອະນຸມັດນະໂຍບາຍທີ່ດິນແຫ່ງຊາດ.

## 5.1 ປະສົມປະສານວິທີການເຮັດວຽກແບບແຕ່ເທິງລົງລຸ່ມແລະແຕ່ລຸ່ມຂຶ້ນເທິງ

ທັດສະນະຂອງຜູ້ຕອບແບບສອບຖາມກ່ຽວກັບວ່ານະໂຍບາຍ NLP ຈະສົ່ງຜົນແນວໃດກິດຈະກຳຂອງກຸ່ມLIWG ໃນອະນາຄົດມີຄວາມແຕກຕ່າງກັນໄປ - ພາຍໃນສະມາຊິກກຸ່ມ LIWG, ຜູ້ສະໜັບສະໜູນແລະພັນທະມິດ. ມີບາງພາກສ່ວນຄິດວ່າການສົນທະນາແບບຕໍ່ເນື່ອງກ່ຽວກັບນະໂຍບາຍທີ່ດິນແຫ່ງຊາດມີເຫດຜົນໃນກໍລະນີທີ່ນະໂຍບາຍ NLP ມີຄວາມຄືບໜ້າ, ເພື່ອເປັນພື້ນຖານສຳລັບເຊື່ອມສານຄຳແນະນຳຕົ້ນຕໍຂອງກຸ່ມເຂົ້າໃນກົດໝາຍວ່າດ້ວຍນໍ້າ, ປາໄມ້, ແລະອື່ນໆ; ຊຶ່ງຈະໄດ້ຮັບການປຶກສາຫາລືພາຍຫຼັງທີ່ນະໂຍບາຍທີ່ດິນແຫ່ງຊາດໄດ້ຮັບການອະນຸມັດ. ພາກສ່ວນໜຶ່ງມີເຫດຜົນວ່າການສົນທະນາກ່ຽວກັບລະບຽບກົດໝາຍຈະມີຄວາມສຳຄັນເປັນພິເສດໃນກໍລະນີທີ່ນະໂຍບາຍ NLPບໍ່ລວມເອົາຄຳແນະນຳຂອງກຸ່ມLIWG - ເພື່ອເປັນ 'ມາດຕະການປົກປ້ອງທາງສັງຄົມ' ທີ່ຄວນພະຍາຍາມອີກຄັ້ງໜຶ່ງ, ແລະຄວນຈະພະຍາຍາມຫຼາຍຂຶ້ນກວ່າເກົ່າ. ໂດຍທົ່ວໄປແລ້ວ, ຕາງໜ້າອົງການຈັດຕັ້ງ INGO ເຫັນໄດ້ຄວາມໝາຍຄວາມສຳຄັນຂອງວຽກໂຄສະນາຂົນຂວາຍ ລະດັບນະໂຍບາຍແລະເຫັນດີໃຫ້ມີການສືບຕໍ່ສົນທະສາຢ່າງຕໍ່ເນື່ອງໃນລະດັບຊາດ, ໃນຂະນະທີ່ຜູ້ຕາງໜ້າສ່ວນໃຫ່ຍ ຂອງອົງການຈັດຕັ້ງ NPA ແລະ NPB ເນັ້ນໜັກໃສ່ຜົນອອກທີ່ຈຳກັດຂອງການພົວພັນວຽກໄລຍະຍາວຂອງກຸ່ມ LIWG ໃນລະດັບຊາດແລະໃຫ້ເຫດຜົນວ່າຄວນຈະສຸມໃສ່ລະດັບທ້ອງຖິ່ນໃຫ້ຫຼາຍກວ່າເກົ່າ. ສະນັ້ນ, ຖ້າວ່າຈັດແບ່ງປັດໄຈທີ່ກ່ຽວຂ້ອງລະຫວ່າງ ສະມາຊິກ ແລະຜູ້ສະໜັບສະໜູນ ທີ່ເປັນອົງການຈັດຕັ້ງພາຍໃນແລະສະມາຊິກທີ່ເປັນອົງການຈັດຕັ້ງສາກົນແລ້ວ, ປະເດັນດັ່ງກ່າວນີ້ກ່ຽວຂ້ອງກັບວິທີການເຮັດວຽກແບບແຕ່ເທິງ-ລົງ-ລຸ່ມແລະວິທີການເຮັດວຽກແບບແຕ່ລຸ່ມ-ຂຶ້ນ-ເທິງ; ຄືວ່າ: ນີ້ແມ່ນຈຸດເລີ່ມຕົ້ນທີ່ດີທີ່ສຸດສຳລັບກຸ່ມ LIWG ທີ່ຈະເຮັດວຽກກ່ຽວກັບເລື່ອງທີ່ດິນໃນອະນາຄົດ. ບັນຫານີ້ສ່ອງແສງໃຫ້ເຫັນທິດສະດີຂອງການປ່ຽນແປງ ຈຳນວນ 2 ທິດສະດີທີ່ແຕກຕ່າງກັນຊຶ່ງຕິດພັນກັບວິທີການປັບປຸງສະພາບທີ່ດິນໃນປະເທດລາວໃນອະນາຄົດ, ແລະພາລະບົດບາດຂອງກຸ່ມLIWG ທີ່ຄວນຈະປະຕິບັດໃນອະນາຄົດ.

ບົດລາຍງານສະບັບນີ້ແນະນຳໃຫ້ພາກສ່ວນທີ່ກ່ຽວຂ້ອງເລືອກເອົາວິທີການທີ່ປະສົມປະສານກັນ. ກຸ່ມLIWG ຕ້ອງສືບຕໍ່ການປຶກສາຫາລືໃນລະດັບນະໂຍບາຍແລະປະຕິບັດວຽກງານບົນພື້ນຖານປະສົບການທີ່ມີ, ຄວາມອາສາມາດທີ່ໄດ້ຮັບ, ເຄືອຂ່າຍທີ່ມີໃນປະຈຸບັນແລະຈຸດຢືນທີ່ໜັກແໜ້ນຂອງຕົນ ໃນລະດັບສະຖາບັນ. ໃນຂະນະດຽວກັນ, ກຸ່ມຕ້ອງຮັບປະກັນວ່າມີວຽກງານຈຳນວນໜຶ່ງຢູ່ຂັ້ນຮາກຖານໂດຍຜ່ານການນຳໃຊ້ຫຼັກຖານຍຸດທະສາດເພື່ອດຳເນີນການປຶກສາຫາລືໃນລະດັບນະໂຍບາຍ. ຍັງຄົງມີຫຼາຍຈຸດທີ່ຄວນປັບປຸງກ່ຽວກັບບັນຫານີ້.

**ບໍ່ຄວນລໍຖ້າສະບັບສຸດຂອງນະໂຍບາຍ NLP:** ແນ່ນອນ, ຜົນອອກສຸດທ້າຍຂອງການຮ່າງນະໂຍບາຍ NLP ຈະກາຍເປັນປັດໄຈຕົ້ນຕໍສຳລັບວຽກງານຂອງກຸ່ມ LIWG ໃນໄລຍະຕໍ່ໜ້າ. ເຖິງແມ່ນວ່ານະໂຍບາຍຈະເປັນແນວໃດກໍ່ຕາມ , ການນຳໃຊ້ຈຸດຢືນທີ່ໜັກແໜ້ນຂອງຕົນໃນລະດັບສະຖາບັນແມ່ນສິ່ງທີ່ຂາດບໍ່ໄດ້. ການເປັນປະທານຮ່ວມ ໃນກອງປະຊຸມໜ່ວຍງານ LSSWG ແລະການເປັນຄູ່ຮ່ວມມືທີ່ໜ້າເຊື່ອຖືແລະຖືກຮັບຮູ້ໂດຍຜູ້ຕາງໜ້າພາກລັດແລະຄູ່ຮ່ວມພັດທະນາແມ່ນພື້ນຖານທີ່ດີເລີດສຳລັບການສົນທະນາລະດັບນະໂຍບາຍໃນໄລຍະຕໍ່ໄປ. ອີງຕາມທັດສະນະຂອງຫຼາຍພາກສ່ວນ, ການສົນທະນາ ກ່ຽວກັບລະບຽບກົດໝາຍອາດຈະມີຄວາມລະອຽດອ່ອນ ແລະມີຄວາມສ່ຽງຫຼຸດລົງຫຼັງຈາກນະໂຍບາຍ NLP ໄດ້ຮັບການອະນຸມັດ - ແລະສະນັ້ນຈະບໍ່ມີ ,ຄຳຖາມທ້າທາຍອີກ'. ນອກນັ້ນ, ກຸ່ມ LIWGຍັງສາມາດປະກອບສ່ວນຢ່າງຕັ້ງໜ້າໃນຫົວຂໍ້ການສົນທະນາທີ່ບໍ່ມີຄວາມພົ້ນເດັ່ນໃນສັງຄົມເຊັ່ນ: ກົດລະ

ບຽບການລົງທຶນຫຼືສັນຍາການອອກນິຕິກຳໄມ້ທ່ອນ, ຊຶ່ງມີຄວາມຈະແຈ້ງກ່ຽວກັບຊັບພະຍາກອນທີ່ດິນ. ໃນຂະນະດຽວກັນ, ອີກວຽກງານໜຶ່ງທີ່ຈຳເປັນທີ່ກຸ່ມ LIWGໄດ້ປະຕິບັດແລ້ວກ່ຽວກັບວຽກໂຄສະນາຂົນຂວາຍ, ເປັນຕົ້ນແມ່ນການປະສົມປະສານກັນລະຫວ່າງວຽກການປຶກສາຫາລືລະດັບນະໂຍບາຍລະດັບຊາດແລະກິດຈະກຳຢູ່ຂັ້ນຮາກຖານ (ເບິ່ງຂ້າງລຸ່ມນີ້).

**ຕ້ອງມີຄວາມຈະແຈ້ງກ່ຽວກັບທິດສະດີຂອງການປ່ຽນແປງຂອງທ່ານ:** ບາດກ້າວທຳອິດທີ່ສຳຄັນແມ່ນການສົນທະສາແບບເປີດກວ້າງກ່ຽວກັບທັດສະນະທີ່ແຕກຕ່າງກັນລະຫວ່າງອົງການ INGO ແລະ NPA. ພະຍາຍາມກຳນົດເນື້ອໃນຂອງຄວາມສຳເລັດພາຍໃນກຸ່ມ LIWG ໃຫ້ມີຄວາມຈະແຈ້ງ, ແລະເຫັນດີເປັນເອກະພາບກັນກ່ຽວກັບທິດສະດີຂອງການປ່ຽນແປງ. ແຕ່ວ່າ, ສິ່ງນີ້ບໍ່ໝາຍຄວາມວ່າໃຫ້ຄັດເລືອກເອົາວິທີການນີ້ແມ່ນວິທີການເຮັດວຽກແບບແຕ່ເທິງ-ລົງ-ລຸ່ມຫຼືວິທີການເຮັດວຽກແບບແຕ່ລຸ່ມ-ຂຶ້ນ-ເທິງ. ທິດສະດີການປ່ຽນແປງອາດຈະລວມຢູ່ໃນທັງສອງວິທີການນີ້, ຊຶ່ງຈະສົ່ງຜົນໄດ້ຮັບໃຫ້ແກ່ ຍຸດທະສາດການໂຄສະນາຂົນຂວາຍທີ່ປະສົບປະສານກັນທັງສອງວິທີການນີ້ເຂົ້າກັນ ຢ່າງເປັນລະບົບ. ຄວາມຊັດເຈນຂອງທິດສະດີການປ່ຽນແປງຈະຊ່ວຍໃຫ້ມີຄວາມເຂົ້າໃຈຈະແຈ້ງວ່າວິທີການໃດແລະເວທີໃດໃຊ້ງານໄດ້ດີທີ່ສຸດພາຍໃຕ້ສະພາບການແລະເງື່ອນໄຂຕົວໃດ, ແລະຈະເປີດໂອກາດໃນການກຳນົດຫົວຂໍ້ການສົນທະນາໃນລະດັບຍຸດທະສາດ, ກາລະໂອກາດແລະກຸ່ມເປົ້າໝາຍ.

**ເຊື່ອມສານອົງການຈັດຕັ້ງ NPA ແລະອົງການຈັດຕັ້ງ NPB ໃຫ້ຫຼາຍກວ່າເກົ່າໂດຍຜ່ານກິດຈະກຳຂັ້ນຮາກຖານແລະບົດສະເໜີໂຄງການຮ່ວມກັນ:** ການພັດທະນາກິດຈະກຳຂັ້ນຮາກຖານອາດຈະຊ່ວຍເຊື່ອມສານອົງການຈັດຕັ້ງ NPA ແລະອົງການຈັດຕັ້ງ NPB ເຂົ້າໃນວຽກງານຂອງກຸ່ມໄດ້ດີກວ່າເກົ່າ, ເພີ່ມລະດັບຄວາມເປັນເຈົ້າການແລະທັງເປັນການແກ້ໄຂບັນຫາການລຳອຽງອົງການຈັດຕັ້ງ INGO ຂອງກຸ່ມນຳອີກ. ກິດຈະກຳລະດັບຊຸມຊົນ, ເມືອງແລະແຂວງສາມາດກາຍເປັນກາລະໂອກາດ ສຳລັບຮູບແບບອື່ນໆຂອງການໂຄສະນາຂົນຂວາຍຊຶ່ງສາມາດປະກອບສ່ວນເຂົ້າໃນແລະເນັ້ນໜັກໃສ່ໃນການສົນທະນານະໂຍບາຍລະດັບຊາດທີ່ນຳໃຊ້ວິທີການເຮັດວຽກແບບແຕ່ລຸ່ມ-ຂຶ້ນ-ເທິງ. ທັນທີທີ່ນະໂຍບາຍ NLP ໄດ້ຮັບການອະນຸມັດ, ການແກ້ໄຂບັນຫາທີ່ຍັງເປັນຊ່ອງຫວ່າງຈະມີຄວາມສຳຄັນເປັນພິເສດ. ວິທີການທີ່ສາມາດເປັນໄປໄດ້ລວມມີການສຶກສາທາງດ້ານນິຕິກຳໃຫ້ພະນັກງານລັດຖະກອນແລະປະຊາຊົນທົ່ວໄປ, ການປັບປຸງການເຂົ້າເຖິງຄວາມຍຸຕິທຳ, ການຫຼຸດຜ່ອນຄວາມຂັດແຍ້ງ, ຫຼືການສ້າງຄວາມເຂັ້ມແຂງໃຫ້ເຄືອຂ່າຍທີ່ໄດ້ຮັບຜົນກະທົບຈາກບັນຫາທີ່ດິນ. ໃນລະດັບໜຶ່ງ, ວຽກງານເຫຼົ່ານີ້ແມ່ນວຽກງານທີ່ກຸ່ມLIWGປະຕິບັດກ່ອນເດືອນທັນວາ 2012. ສົມມຸດວ່າຄູ່ຮ່ວມພັດທະນາຈຳນວນໜຶ່ງມີຄວາມສົນໃຈໃນການສະໜອງທຶນໃຫ້ການນຳໃຊ້ນະໂຍບາຍ NLP, ສິ່ງນີ້ອາດຈະເປັນກາລະໂອກາດທີ່ດີສຳລັບການຂຽນບົດສະເໜີໂຄງການຮ່ວມກັນຂອງສະມາຊິກກຸ່ມLIWGທີ່ເປັນຄົນລາວແລະຄົນຕ່າງປະເທດ. ໃນເວລາດຽວກັນ, ວຽກງານນີ້ອາດຈະຊ່ວຍແກ້ໄຂບັນຫາຄວາມຈຳກັດ ທາງດ້ານງົບປະມານທີ່ອົງການຈັດຕັ້ງ NPA ແລະອົງການຈັດຕັ້ງ NPB ປະເຊີນໜ້າຢູ່ໃນປະຈຸບັນ. ຈຸດສຳຄັນອີກຈຸດໜຶ່ງແມ່ນຄວາມເປັນເຈົ້າການຂອງພາກສ່ວນທີ່ກ່ຽວຂ້ອງທີ່ເປັນຄົນລາວ, ໂດຍສະເພາະແມ່ນຊຸມຊົນ, ບໍ່ແມ່ນອົງການ INGO.

> ""ວິທີການແບບແຕ່ລຸ່ມ-ຂຶ້ນ-ເທິງຈະຊ່ວຍແກ້ໄຂສິ່ງກີດຂວາງຈຳນວນໜຶ່ງ. ວິທີການນີ້ຈະເປີດໂອກາດໃຫ້ອົງການ NPA ມີສ່ວນຮ່ວມຫຼາຍຂຶ້ນກວ່າເກົ່າ.""
>
> (ສະມາຊິກຫຼັກຂອງກຸ່ມLIWG)

**ຊອກຫາວິທີການນຳໃຊ້ຫຼັກຖານຂັ້ນຮາກຖານເພື່ອການສົນທະນາໃນລະດັບນະໂຍບາຍ:** ກິດຈະກຳສ້າງຄວາມເຂັ້ມແຂງໃນລະດັບທ້ອງຖິ່ນຈະຊ່ວຍແກ້ໄຂຈຸດອ່ອນຕ່າງໆຂອງກຸ່ມLIWG, ຊຶ່ງວ່າ ໜຶ່ງໃນຈຸດອ່ອນແມ່ນການຂາດຫຼັກຖານທີ່ໜ້າເຊື່ອຖືທີ່ສາມາດນຳໃຊ້ເຂົ້າໃນການສົນທະນາ ລະດັບນະໂຍບາຍ. ຜູ້ຕອບແບບສອບຖາມສ່ວນໃຫ່ຍເຫັນດີວ່າມັນບໍ່ແມ່ນຫຼັກຖານແລະຄຳແນະນຳທາງວິທະຍາສາດເຊັ່ນ: VGGT ທີ່ໃຊ້ຈູງໃຈຜູ້ຕັດສິນບັນຫາ, ແຕ່ວ່າມັນແມ່ນຫຼັກຖານຂັ້ນຮາກຖານພຽງເທົ່ານັ້ນເຊັ່ນ: ກໍລະນີຕົວຈິງທີ່ສິດທິຂອງປະຊາຊົນທ້ອງຖິ່ນຖືກລະເມີດ. ບາງພາກ

ສ່ວນຄິດວ່າມີຂໍ້ຂ້ອງໃຈຫຼາຍໆເລື່ອງກ່ຽວກັບທີ່ດິນທີ່ລາຍງານຜ່ານໂທລະສັບສາຍດ່ວນເຖິງສະພາແຫ່ງຊາດທີ່ເຮັດໃຫ້ສະພາແຫ່ງຊາດມີຄວາມສົນໃຈໃນບັນຫາທີ່ດິນແລະນຳພາໄປສູ່ການປະຕິເສດຮ່າງນະໂຍບາຍ NLP ໃນປີ 2013. ສະນັ້ນ, ກຸ່ມ LIWG ຄວນຄົ້ນຄວ້າຫາວິທີການນຳໃຊ້ຫຼັກຖານຂັ້ນຮາກຖານໃຫ້ຫຼາຍຂຶ້ນແລະໃຫ້ດີກວ່າເກົ່າໃນລະດັບຍຸດທະສາດເພື່ອເປັນເຫດຜົນສະໜັບສະໜູນການສົນທະນາກ່ຽວກັບນະໂຍບາຍໃນລະດັບຊາດ. ຄວາມຈິງແລ້ວ, ເຫດຜົນທີ່ສຳຄັນວ່າເປັນຫຍັງຈຶ່ງ ວຽກງານນີ້ຈຶ່ງຍັງບໍ່ທັນເກີດຂຶ້ນແມ່ນເລື່ອງນີ້ມີຄວາມສ່ຽງສູງ. ແຕ່ເດືອນທັນວາ 2012 ເປັນຕົ້ນມາ, ບໍ່ມີອົງການຈັດຕັ້ງໃດກ້າທີ່ຈະສົນທະນາຢ່າງເປີດເຜີຍກ່ຽວກັບກໍລະນີທີ່ເປັນບັນຫາ. ສິ່ງນີ້ແມ່ນມີຄວາມຈິງທີ່ສຸດສຳລັບອົງການຈັດຕັ້ງ NPA. ເຖິງຢ່າງໃດກໍ່ດີ, ຍັງມີອີກຫຼາຍວິທີທີ່ຈະຫຼີກເວັ້ນບັນຫາເຫຼົ່ານີ້ແລະທີ່ສາມາດຫຼຸດຜ່ອນຄວາມສ່ຽງ ທີ່ອາດຈະເກີດຂຶ້ນ.

> "'ລັດຖະບານແຫ່ງສປປລາວບໍ່ໄດ້ຕັດສິນບັນຫາບົນພື້ນຖານຜົນການວິເຄາະ, ຕົວເລກແລະສະຖິຕິທາງດ້ານເສດຖະກິດ. ພວກເຂົາເບິ່ງວ່າມີຫຍັງກຳລັງເກີດຂຶ້ນໃນຕົວຈິງ. ສະນັ້ນ, ສິ່ງສຳຄັນສຳລັບການຕັດສິນບັນຫາແມ່ນສະພາບການທີ່ເກີດຂຶ້ນຢູ່ພາກສະໜາມ, ກໍລະນີຕົວຈິງແລະການຊີ້ໃຫ້ເຫັນຕົວຢ່າງທີ່ເກີດຂຶ້ນ.'"
>
> (ສະມາຊິກຫຼັກຂອງກຸ່ມLIWG)

**ການນຳໃຊ້ສື່ມວນຊົນທາງສັງຄົມ:** ວິທີການໜຶ່ງເພື່ອນຳເອົາຫຼັກຖານຂັ້ນຮາກຖານຂຶ້ນສູ່ການສົນທະນາໃນລະດັບນະໂຍບາຍແຫ່ງຊາດສາມາດຈັດຕັ້ງປະຕິບັດ ຜ່ານສື່ມວນຊົນທາງສັງຄົມ. ລະບົບ Facebook, Twitter, YouTube ແລະລະບົບການສື່ສານປະເພດອື່ນໆໄດ້ກາຍເປັນເຄື່ອງມືທີ່ມີຄວາມນິຍົມ ຢ່າງສູງໃນປະເທດລາວ. ແລະກຳລັງໄດ້ຮັບການໃຊ້ງານຢ່າຫຼວງຫຼາຍໂດຍປະຊາຊົນທົ່ວໄປ, ບໍ່ແມ່ນມີພຽງແຕ່ຄົນໃນເມືອງຊົນຊັ້ນສູງ ເທົ່ານັ້ນ. ສະພາບການມີຄວາມແຕກຕ່າງກັບຫຼາຍປີທີ່ຜ່ານມາ, ໃນປະຈຸບັນມີຄວາມເປັນໄປໄດ້ສຳລັບການສື່ສານທີ່ງ່າຍ, ວ່ອງໄວແລະສາມາດຊື້ຫາໄດ້ລວມທັງຢູ່ເຂດຊົນນະບົດ. ນີ້ແມ່ນກາລະໂອກາດໃໝ່ສຳລັບການເກັບກຳຂໍ້ມູນມືໜຶ່ງກ່ຽວກັບທີ່ດິນຈາກແຫຼ່ງຂໍ້ມູນໃນທົ່ວປະເທດແລະສົ່ງຕໍ່ໃຫ້ກຸ່ມເປົ້າໝາຍຕ່າງໆແລະສາທາລະນະຊົນ. ຖ້າຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບ, ສື່ທາງສັງຄົມສາມາດຊ່ວຍນຳເອົາຫຼັກຖານຂັ້ນຮາກຖານຂຶ້ນມາເປັນກໍລະນີການສົນທະນາຢ່າງກວ້າງຂວາງໂດຍປາດສະຈາກຄວາມສ່ຽງທີ່ອາດຈະເກີດຂຶ້ນກັບພາກສ່ວນ ທີ່ກ່ຽວຂ້ອງ. ພະນັກງານ NGO, ຊາວກະສິກອນ, ນັກສຶກສາແລະພະນັກງານລັດຖະກອນອາດຈະໄດ້ຮັບການສົ່ງເສີມໃຫ້ແລກປ່ຽນຂໍ້ສັງເກດຂອງຕົນ. ສິ່ງນີ້ຈະເປີດໂອກາດໃຫ້ທົບທວນຄືນກ່ຽວກັບການເປີດໂທລະສັບສາຍດ່ວນໃນໄລຍະເລີ່ມຕົ້ນເພື່ອເປີດໂອກາດໃຫ້ບຸກຄົນລາຍງານບັນຫາທີ່ດິນໂດຍບໍ່ຕ້ອງສະແດງບອກຊື່. ສະນັ້ນ, ກຸ່ມLIWG ຄວນຄົ້ນຄວ້າຫາວິທີການຕ່າງທີ່ເປັນໄປໄດ້ໃນການນຳໃຊ້ສື່ທາງສັງຄົມເຂົ້າໃນວຽກໂຄສະນາຂົນຂວາຍແລະຮຽນຮູ້ຈາກປະສົບການຂອງພວກສ່ວນອື່ນໆ; ນອກນັ້ນ, ກຸ່ມອາດຈະເຫັນວ່າ ເໝາະສົມທີ່ຈະຊອກຫາຄູ່ຮ່ວມມືແລະພັນທະມິດໃໝ່ຜູ້ທີ່ມີປະສົບການທີ່ຈຳເປັນກ່ຽວກັບເລື່ອງນີ້.

> "'ສື່ມວນຊົນທາງສັງຄົມໃນປະຈຸບັນແມ່ນປັດໄຈຕົ້ນຕໍໃນການເຜີຍແຜ່ຂໍ້ມູນຂ່າວສານໃຫ້ລະດັບນະໂຍບາຍຮັບຮູ້.'"
>
> (ສະມາຊິກຫຼັກຂອງກຸ່ມ LIWG)

**ສົ່ງເສີມການສຶກສາຂໍ້ມູນກ່ຽວກັບຫຼາຍສາຂາວິຊາ:** ດີທີ່ສຸດ, ຫຼັກຖານມືໜຶ່ງທີ່ທັນເຫດການຈາກພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນຮາກຖານແມ່ນຫຼັກຖານທາງວິທະຍາສາດທີ່ໜັກແໜ້ນ ແລະເຊື່ອຖືໄດ້. ຈົນເຖິງປະຈຸບັນ, ສູນການພັດທະນາແລະສິ່ງແວດລ້ອມຂອງມະຫາວິທະຍາໄລເບີນ (cde), ຊຶ່ງເປັນສະມາຊິກຫຼັກຂອງກຸ່ມ LIWG, ເປັນຜູ້ສະໜອງຫຼັກຖານທາງວິທະຍາສາດສ່ວນໃຫ່ຍ, ໃນຂະນະດຽວກັນການແລກປ່ຽນແລະການຮ່ວມມືກັບສະຖາບັນຄົ້ນຄວ້າຂອງປະເທດລາວຍັງຄົງມີຄວາມຈຳກັດຫຼາຍດ້ານ. ຜູ້ຕອບແບບສອບຖາມຫຼາຍທ່ານເຫັນດີເປັນເອກະພາບກັນວ່າກຸ່ມ LIWG ຄວນຄົ້ນຄວ້າແລະ ສ້າການຮ່ວມມືກ່ຽວກັບເລື່ອງນີ້, ຕົວຢ່າງ: ຄົ້ນຄວ້າກ່ຽວກັບຜົນກະທົບຂອງນະ

ໂຍບາຍ NLP ໃນລະດັບທ້ອງຖິ່ນ. ນອກນັ້ນພາກກ່ຽວຍັງເນັ້ນໜັກເຖິງຄວາມສຳຄັນຂອງການມີສ່ວນຮ່ວມໃນເບື້ອງຕົ້ນຂອງຂະບວນການຕັດສິນບັນຫາໃນແຕ່ລະຂັ້ນເພື່ອສ້າງຄວາມເປັນເຈົ້າການແລະຫຼີກລ້ຽງກໍລະນີການຖືກລະເມີດສິດທີ່ອາດຈະເກີດຂຶ້ນ. ບັນຫານີ້ສອດຄ່ອງກັບປະສົບການຂອງອົງການ JVC, ສະມາຊິກຫຼັກຂອງກຸ່ມ LIWG, ຊຶ່ງເປັນພາກສ່ວນທີ່ລາຍງານຜົນຂອງການໂຄງການສຳຫຼວດ ຢູ່ແຂວງສະຫວັນນະເຂດ. ໂດຍຜ່ານການຮ່ວມມືຢ່າງໃກ້ຊິດກັບສາດສະດາຈານຈາກມະຫາວິທະຍາໄລແມ່ຍິງຈາກນະຄອນຫຼວງວຽງຈັນ, ຄວາມສົງໄສແລະຄວາມຄັດຄ້ານໃນເບື້ອງຕົ້ນຂອງພະນັກງານທ້ອງຖິ່ນຕໍ່ກັບໂຄງການດັ່ງກ່າວນີ້ໄດ້ສິ້ນສຸດລົງທັນທີທີ່ພວກເຂົາຮັບຮູ້ວ່າສາດສະດາຈານມີການພົວພັນທີ່ດີທີ່ກັບລັດຖະບານ. ເຖິງຢ່າງໃດກໍ່ດີ, ການເຮັດວຽກຢ່າງໃກ້ສິດກັບຜູ້ທີ່ມີອຳນາດຕັດສິນຮຽກຮ້ອງເຖິງຄວາມເອົາໃຈໃສ່ເປັນພິເສດກ່ຽວກັບເລື່ອງອະຄະຕິທີ່ອາດຈະເກີດຂຶ້ນ.

## 5.2 ເປີດກວ້າງການປຶກສາຫາລືແລະສ້າງພື້ນທີ່ໃຫ້ພາກສ່ວນອື່ນໆ

ພື້ນທີ່ສຳລັບອົງການຈັດຕັ້ງທາງສັງຄົມມີຄວາມຈຳກັດໃນສປປລາວ. ດັ່ງທີ່ໄດ້ກ່າວໄວ້ໃນພາກທີ 4.5, ການຕັດສິນໃຈຂອງກຸ່ມ LIWG ທີ່ຈະຮັບຄຳເຊີນຈາກຄະນະກຳມາທິການ EPFC ຂອງສະພາແຫ່ງຊາດແລະການສະໜັບສະໜູນຂະບວນການຮ່າງນະໂຍບາຍ NLP ໄດ້ຈຳກັດຂອບເຂດຂອງກຸ່ມຢູ່ໃນວົງສົນທະນາທາງດ້ານວິຊາການ. ໃນປະຈຸບັນຫຼາຍພາກສ່ວນຄິດວ່ານີ້ແມ່ນກາລະໂອກາດທີ່ຜິດພາດ. ແທນທີ່ຈະນຳໃຊ້ພື້ນທີ່ທີ່ມີຄວາມຈຳກັດ ສຳລັບອົງການຈັດຕັ້ງທາງສັງຄົມໃນຂະບວນການຮ່າງນະໂຍບາຍ NLP, ກຸ່ມ LIWG ສາມາດນຳໃຊ້ຈຸດແຂງດັ່ງກ່າວນີ້ເພື່ອນຂະຫຍາຍການສົນທະນາແລະສ້າງໂອກາດເພີ່ມຕື່ມໃຫ້ພາກສ່ວນອື່ນໆຢ່າງສະເໝີພາບກັນ. ກາລະໂອກາດດັ່ງກ່າວນີ້ໄດ້ຜ່ານໄປແລ້ວ, ກາລະໂອກາດຄັ້ງໃໝ່ອາດຈະເກີດຂຶ້ນອີກພາຍຫຼັງທີ່ນະໂຍບາຍ NLP ໄດ້ຮັບການອະນຸມັດແລະຈະເລີ່ມຕົ້ນການປຶກສາຫາລືກ່ຽວກັບກົດໝາຍທີ່ກ່ຽວຂ້ອງ. ສະນັ້ນ, ກຸ່ມ LIWG ຄວນຈະຄົ້ນຄວ້າຫາວິທີການນຳໃຊ້ຈຸດຢືນຂອງຕົນ ໃນລະດັບສະຖາບັນ (ເຊັ່ນ: ການເປັນປະທານຮ່ວມໃນກອງປະຊຸມໜ່ວຍງານ LSSWG) ເພື່ອຂະຫຍາຍການສົນທະນາໃນລະດັບນະໂຍບາຍຢ່າງຕັ້ງໜ້າ.

**ສືບຕໍ່ແລກປ່ຽນກັບສະພາແຫ່ງຊາດ:** ເຖິງແມ່ນວ່າການເຂົ້າເຖິງແລະການແລກປ່ຽນກັບສະພາແຫ່ງຊາດມີຄວາມຫຍຸ້ງຍາກຫຼັງຈາກເດືອນທັນວາປີ 2012 ເປັນຕົ້ນມາ, ກຸ່ມ LIWG ກໍ່ບໍ່ເຄີຍທີ່ຈະຢຸດອິ້ງເຕັ້ນຂໍຮ່ວມວຽກງານກັບສະມາຊິກສະພາແຫ່ງຊາດ, ສ່ວນໃຫ່ຍແມ່ນໃນໄລຍະການຈັດກອງປະຊຸມສະໄໝສາມັນ. ວຽກງານນີ້ບໍ່ພຽງແຕ່ມີຄວາມສຳຄັນສຳລັບຂະບວນການຮ່າງນະໂຍບາຍ NLP ເທົ່ານັ້ນ, ແຕ່ວ່າມັນຍັງມີຄວາມສອດຄ່ອງຢ່າງສູງກັບການສືບຕໍ່ສະໜັບສະໜູນ ຂະບວນການປະຕິຮູບຕົນເອງຂອງສະພາແຫ່ງຊາດ. ໃນປະຈຸບັນ, ສະພາແຫ່ງຊາດແນໃສ່ສ້າງຄວາມເຂັ້ມແຂງໃຫ້ຈຸດຢືນຂອງຕົນຢ່າງທີ່ບໍ່ເຄີຍມີມາກ່ອນເພື່ອສົມທຽບກັບພັກແລະລັດຖະບານ. ເພື່ອບັນລຸເປົ້າໝາຍນີ້, ການສືບຕໍ່ສະໜັບສະໜູນຈາກອົງການຈັດຕັ້ງພາຍນອກແມ່ນມີຄວາມຈຳເປັນ. ການສືບຕໍ່ແລກປ່ຽນທັດສະນະກັບສະພາແຫ່ງຊາດແມ່ນການລົງທຶນໃນໄລຍະຍາວເພື່ອຂັ້ນຕອນທີ່ເປັນປະຊາທິປະໄຕຫຼາຍຂຶ້ນກວ່າເກົ່າແລະເພື່ອສະພາບແວດລ້ອມທີ່ເອື້ອອຳນວຍສຳລັບອົງການຈັດຕັ້ງທາງສັງຄົມ.

**ເຂົ້າເຖິງອົງການຈັດຕັ້ງອື່ນໆຂອງພາກລັດ:** ຈົນເຖິງປະຈຸບັນ, ກະຊວງ MONRE, ກະຊວງ MAF ແລະສະພາແຫ່ງຊາດແມ່ນກຸ່ມເປົ້າໝາຍຕົ້ນຕໍຂອງກຸ່ມ LIWG ກ່ຽວກັບນະໂຍບາຍ NLP. ແຕ່ວ່າ, ສ່ວນຫຼາຍແລ້ວການເຖິງພາກສ່ວນທີ່ກ່ຽວຂ້ອງພາຍໃນກະຊວງເຫຼົ່ານີ້ຍັງຈຳກັດສະເພາະບຸກຄົນທີເປີດຮັບຄຳແນະນຳແລະຂໍ້ແລກປ່ຽນ, ຊຶ່ງວ່າພວກເຂົາບໍ່ແມ່ນຜູ້ຕັດສິນບັນຫາທີ່ແທ້ຈິງພາຍໃນລະບົບດັ່ງກ່າວນີ້. ນີ້ແມ່ນເຫດຜົນ ທີ່ຜູ້ຕອບແບບສອບຖາມສ່ວນຫຼາຍແນະນຳໃຫ້ໃຫ້ຂະຫຍາຍ ຂອບເຂດການສົນທະນາໂດຍຜ່ານການເຂົ້າເຖິງສະຖາບັນອື່ນໆຂອງພາກລັດທີ່ກ່ຽວຂ້ອງ (ຫຼືສອດຄ່ອງກັບ) ເລື່ອງທີ່ດິນ. ຕົວຢ່າງ ກະຊວງຍຸຕິທຳຫຼືກະຊວງການເງິນ. ແຕ່ວ່າອົງການຈັດຕັ້ງມະຫາຊົນຂອງປະເທດລາວເຊັ່ນ: ສະຫະພັນແມ່ຍິງຫຼືສູນກາງຊາວໜຸ່ມກໍ່ມີຄວາມສຳຄັນໃນການແຊກແຊງບັນຫາຈາກລະດັບຊາດເຖິງລະດັບຮາກຖານ.

**ສຸມໃສ່ຂັ້ນຮາກຖານແລະລະດັບພາກພື້ນ:** ການສ້າງຕັ້ງສະພາການປົກຄອງທ້ອງຖິ່ນໃນຂະບວນການປະຕິຮູບລັດຖະທຳມະນູນອາດຈະເປີດໂອກາດໃໝ່ສຳລັບວຽກການຂໍການສະໜັບສະໜູນກ່ຽວກັບທີ່ດິນຢູ່ຂັ້ນຮາກຖານ, ບໍ່ພຽງແຕ່ກ່ຽວຂ້ອງກັບນະໂຍບາຍທີ່ດິນແຫ່ງຊາດແລະການປະຕິຮູບນິຕິກຳ, ແຕ່ວ່າຍັງພົວພັນເຖິງການຊີ້ນຳແລະການສະໜັບສະໜູນການຈັດຕັ້ງປະຕິບັດວຽກງານນີ້ອີກດ້ວຍ. ກອງປະຊຸມສຳມະນາຮ່ວມກັບສະມາຊິກສະພາແຫ່ງຊາດ, ເຈົ້າແຂວງແລະອຳນາດການປົກຄອງແຂວງແລະເມືອງສາມາດໄດ້ຮັບການຈັດຂຶ້ນເພື່ອຊ່ວຍເປີດການສົນທະນາແລະສ້າງຄວາມເຂັ້ມແຂງໃຫ້ເຄືອຂ່າຍລະຫ່າງພາກສ່ວນທີ່ກ່ຽວຂ້ອງ. ຜູ້ຕອບຄຳຖາມຈຳນວນໜຶ່ງເນັ້ນໜັກໃສ່ພາລະບົດບາດທີ່ສ ຳຄັນຂອງເຈົ້າແຂວງແລະພະນັກງານທີ່ກ່ຽວຂ້ອງຈຳນວນໜຶ່ງທີ່ມີຄວາມກ້າວໜ້າ, ມີແນວຄິດເປີດກວ້າງແລະມີຄວາມສົນໃຈທີ່ຈະຮ່ວມມືຢ່າງໃກ້ຊິດ. ໃນຂະນະດຽວກັນ, ໂຄງການການປົກຄອງທີ່ດິນໃນພາກພື້ນແມ່ນ້ຳຂອງ (MRLG) ໄດ້ສ້າງພື້ນທີ່ສຳລັບການແລກປ່ຽນສອງຝ່າຍແລະການຮຽນຮູ້ໃນລະດັບພາກພື້ນ. ທ່າແຮງດັ່ງກ່າວນີ້ບໍ່ພຽງແຕ່ເປັນການເປີດໂອກາດໃຫ້ພົບປະກັບພາກສ່ວນທີ່ຄ້າຍຄືກັນຈາກປະເທດເພື່ອນບ້ານ, ແຕ່ວ່າຍັງເປັນການເອື້ອອຳນວຍໃຫ້ການສົນທະນາລະດັບນະໂຍບາຍພາຍໃນກຸ່ມຜູ້ຕາງໜ້າລັດຖະບານຫຼືສະມາຊິກສະພາແຫ່ງຊາດໃນທົ່ວພາກພື້ນ. ການສົນທະນາບັນຫາທີ່ມີຄວາມລະອຽດອ່ອນອາດຈະມີຄວາມງ່າຍດາຍຫຼາຍຂຶ້ນຖ້າໄດ້ຮັບການຕອບຮັບໃນສະພາບການທີ່ຢູ່ພາຍນອກປະເທດໃດໜຶ່ງ.

**ໄດ້ຮັບຄວາມມຸ້ງໝັ້ນທີ່ໜັກແໜ້ນຈາກຄູ່ຮ່ວມພັດທະນາ:** ກຸ່ມ LIWG ໄດ້ຮັບການສະໜັບສະໜູນທີ່ຈຳເປັນຈາກຄູ່ຮ່ວມພັດທະນາຈຳນວນໜຶ່ງ, ເປັນຕົ້ນແມ່ນອົງການ GIZ ແລະສະຖານທູດປະເທດເຢຍລະມັນຊຶ່ງເປັນຄູ່ຮ່ວມມືທີ່ສຳຄັນທີ່ສຸດ. ນອກນັ້ນ, ສະຫະພາບເອີຣົບແລະອົງການ SDC ກໍ່ໃຫ້ການສະໜັບສະໜູນຈຳນວນໜຶ່ງ. ເຖິງແມ່ນວ່າມີອົງການຜູ້ໃຫ້ທຶນແບບສອງຝ່າຍແລະຫຼາຍຝ່າຍຈຳນວນຫຼວງຫຼາຍດຳເນີນວຽກງານໃນນະຄອນຫຼວງວຽງຈັນຊຶ່ງເປັນພາກສ່ວນທີ່ສາມາດແລະຄວນເຮັດວຽກນີ້ໃຫ້ຫຼາຍກວ່າເກົ່າ. ກຸ່ມ LIWG ສາມາດນຳໃຊ້ວິທີການແບບຕັ້ງໜ້າເພື່ອຈູງໃຈສະຖາບັນເຫຼົ່ານີ້ເພື່ອໃຫ້ພວກເຂົາເຫັນຄວາມຈຳເປັນໃນການຮ່ວມມື.

## 5.3 ຄັດເລືອກເອົານະໂຍບາຍທີ່ຖືກຕ້ອງ

ການສົນທະນາ ກ່ຽວກັບນະໂຍບາຍ NLP ມີລັກສະນະຄ້າຍຄືກັບການສົມທຽບນະໂຍບາຍ 2 ສະບັບ: ສະບັບໜຶ່ງກ່ຽວກັບ 'ການຫັນທີ່ດິນໃຫ້ເປັນທຶນ', ຊຶ່ງເປັນນະໂຍບາຍທີ່ເຫັນວ່າ ທີ່ດິນເປັນຊັບສິນທາງການເງິນ / ເສດຖະກິດທີ່ເປັນກຸນແຈສຳຄັນ ສຳລັບການຂະຫຍາຍຕົວຂອງເສດຖະກິດຂອງ ສປປ ລາວ, ໂດຍຜ່ານການລົງທຶນພາຍໃນແລະ ຕ່າງປະເທດ. ນີ້ແມ່ນ ນະໂຍບາຍ ຂອງຜູ້ຕັດສິນບັນຫາ ສ່ວນໃຫຍ່. ອີກໜຶ່ງນະໂຍບາຍ ແມ່ນກ່ຽວກັບ 'ການກະສິກຳແບບຍືນຍົງ ແລະ ຊີວິດຄວາມເປັນຢູ່ຂອງປະຊາຊົນເຂດຊົນນະບົດ'. ນະໂຍບາຍນີ້ ເຫັນວ່າ ທີ່ດິນ ແມ່ນກຸນແຈສຳຄັນ ສຳລັບການອະນຸລັກ ແລະ ການສ້າງຄວາມເຂັ້ມແຂງໃຫ້ຊາວກະສິກອນຂະໜາດນ້ອຍ ແລະ ການປັບປຸງຊີວິດຄວາມເປັນຢູ່ຂອງປະຊາຊົນເຂດຊົນນະບົດ. ສະນັ້ນ ນະໂນບາຍນີ້ ແນໃສ່ຫຼຸດຜ່ອນຄວາມທຸກຈົນ. ນະໂຍບາຍນີ້ ແມ່ນນະໂຍບາຍຂອງພາກສ່ວນ ເຊັ່ນ: ກຸ່ມ LIWG, ປະຊາຄົມຜູ້ໃຫ້ທຶນ ແລະ ສະຖາບັນການສຶກສາ. ຈົນເຖິງປະຈຸບັນ, ກຸ່ມ LIWG ໄດ້ກຳນົດກອບແຜນວຽກທີ່ມີ 'ເນື້ອໃນສ່ວນໃຫ່ຍຂອງນະໂຍບາຍ ສອດຄ່ອງກັບ ນະໂຍບາຍສະບັບທີສອງ - ຄື ການຮັບປະກັນວ່າ ສິດຂອງຊຸມຊົນຢູ່ເຂດຊົນນນະບົດ ຖືກເຄົາລົບ ແລະ ຖືກປົກປ້ອງ; ໃຫ້ສິດພວກເຂົາ ໃນການປະຕິເສດ ຕໍ່ການລົງທຶນ; ບໍ່ແມ່ນພຽງແຕ່ຈະເອົາທີ່ດິນຂອງພວກເຂົາໄປ; ຕ້ອງຮັບປະກັນໃຫ້ມີການຊົດເຊີຍທີ່ຍຸຕິທຳ (cf. LIWG 2012; 2014).

> "'ເຫດຜົນຂອງນະໂຍບາຍທາງດ້ານເສດຖະກິດ ແມ່ນກ່ຽວກັບການເຮັດໃຫ້ DFI ຕົກຢູ່ໃນສະພາບຄວາມສ່ຽງ, ກ່ຽວກັບນັກລົງທຶນ ຜູ້ທີ່ຈະຖອນຕົວອອກ. ລັດຖະບານເຂົ້າໃຈເຊັ່ນນັ້ນ.'"
>
> (ຄູ່ຮ່ວມພັດທະນາ)

ເຖິງແມ່ນວ່າ ຜູ້ຕອບແບບສອບຖາມສ່ວນໃຫ່ຍ ຮັບຮູ້ເຖິງ ຜົນສຳເລັດຂອງກຸ່ມ LIWG ກ່ຽວກັບການສົ່ງເສີມການສົນທະນາບັນຫາທີ່ດິນ ໃນສາທາລະນະຊົນ, ບາງພາກສ່ວນ ຍັງມີຂໍ້ສົງໄສ ກ່ຽວກັບຜົນກະທົບຂອງການໂຄສະນາຂົນຂວາຍ ກ່ຽວກັບຮ່າງນະໂຍບາຍ NLP ຂອງກຸ່ມ LIWG. ໃນຄວາມເປັນຈິງແລ້ວ, ຂໍ້ສະເໜີຕ່າງໆ ທີ່ຖືກສັງລວມເຂົ້າໃນຮ່າງເອກະສານ ມີເປົ້າໝາຍເພື່ອຈະຖືກເອົາອອກ ໃນຮ່າງເອກະສານສະບັບຕໍ່ໄປ. ໃນເວລາດຽວກັນ, ຜູ້ຕອບແບບສອບຖາມຈຳນວນໜຶ່ງ ມີທັດສະນະທາງບວກ ຕໍ່ວຽກງານຂອງກຸ່ມ LIWG ທີ່ຕິດພັນກັບການເວນຄືນທີ່ດິນ ສຳລັບຈຸດປະສົງພາກເອກະຊົນ, ຊຶ່ງເປັນວຽກທີ່ຊີ້ໃຫ້ເຫັນວ່າ ກຸ່ມມີຄວາມສາມາດໃນການຄຸ້ມຄອງ ເພື່ອສະແດງວ່າ ການປະຕິບັດດັ່ງກ່າວນີ້ ແມ່ນການລະເມີດຢ່າງຈະແຈ້ງ ຕໍ່ຂໍ້ຜູກມັດຂອງສັນຍາສ່ວນໃຫ່ຍ ກ່ຽວກັບການລົງທຶນ ແລະ ການຄ້າລະດັບພາກພື້ນ ແລະ ສັນຍາແບບສອງຝ່າຍ ຂອງ ສປປ ລາວ (ກຸ່ມ LIWG, 2014b). ຜູ້ຕອບແບບສອບຖາມຈຳນວນໜຶ່ງ ເຊື່ອໝັ້ນວ່າ ເນື້ອໃນການໂຄສະນາຂົນຂວາຍ ມີຜົນກະທົບໃນລະດັບໜຶ່ງ ຍ້ອນວ່າ ວຽກໂຄສະນາຂົນຂວາຍເຫຼົ່ານີ້ນຳໃຊ້ ນະໂຍບາຍຂອງລັດຖະບານເອງ ໂດຍການຊີ້ໃຫ້ເຫັນຄວາມເສຍຫາຍທີ່ອາດຈະເກີດຂຶ້ນກັບ ຍຸດທະສາດຄວາມເຕີບໂຕທາງດ້ານເສດຖະກິດຂອງປະເທດ. ໝາຍຄວາມວ່າ, ກຸ່ມ LIWG ໄດ້ສົ່ງຂໍ້ຄວາມທີ່ລັດຖະບານ ສາມາດເຂົ້າໃຈງ່າຍ ຍ້ອນວ່າ ຂໍ້ຄວາມເຫຼົ່ານັ້ນ ໄດ້ຮັບການກຳນົດກອບຕາມເຫດຜົນຂອງພວກເຂົາເອງ.

**ກຳນົດກອບເນື້ອຂໍ້ຄວາມ ໃຫ້ສອດຄ່ອງກັບນະໂຍບາຍຂອງກຸ່ມເປົ້າໝາຍຂອງພວກທ່ານ:** ອາດຈະມີຂໍ້ຄວາມອື່ນໆ ທີ່ມີເນື້ອໃນຄ້າຍຄືກັນ ທີ່ສາມາດກຳນົດກອບໃຫ້ສອດຄ່ອງກັບນະໂຍບາຍຂອງລັດຖະບານ. ບັນຫານີ້ ອາດຈະຫຸ້ຍຸ້ງຍາກສຳລັບອົງການຈັດຕັ້ງທາງສັງຄົມ ຍ້ອນວ່າ ມັນອາດຈະຂັດກັບຫຼັກການ ແລະ ອຸດົມການຂອງຕົນ. ເຖິງແມ່ນວ່າ ການກຳນົດກອບເນື້ອໃນຂອງຂໍ້ຄວາມ ໃຫ້ສອດຄ່ອງກັບເຫດຜົນ ຂອງກັບກຸ່ມເປົ້າໝາຍ ຈະຊ່ວຍໃຫ້ພວກເຂົາ ສາມາດກ້າວຜ່ານໄປໄດ້ ກໍ່ຕາມ. ແຕ່ວ່າ ອີກວິທີການໜຶ່ງ ອາດຈະສາມາດໃຊ້ໄດ້ ແມ່ນການຄົ້ນຄວ້າບັນຫາການເກັບອາກອນທີ່ດິນ ແລະ ການເພີ່ມມູນຄ່າທາງການເງິນຂອງລັດ: ການອອກໃບຕາດິນ ຈະເຮັດຊ່ວຍລັດຖະບານ ໃນການຍົກລະດັບອາກອນທີ່ດິນ ແລະ ຈະຄ້ຳປະກັນລາຍຮັບຂອງລັດ ໃນໄລຍະຍາວ. ຖ້າສົມທຽບບັນຫານີ້ກັບຜົນປະໂຫຍດທີ່ຈຳກັດຂອງລັດ ທີ່ໄດ້ຮັບຈາກໂຄງການສຳປະທານຂະໜາດໃຫ່ຍ (ລາຍຮັບຈາກຄ່າທຳນຽມ ແລະ ອາກອນມີຈຳນວນຈຳກັດ ແລະ ມີໃນໄລຍະສັ້ນ, ຍ້ອນວ່າມີຜົນສະທ້ອນຕໍ່ການຈ້າງງານ) ອາດຈະຈູງໃຈໃຫ້ພາກສ່ວນຕັດສິນບັນຫາວ່າ ການຄ້ຳປະກັນສິດທິໃນການຄອບຄອງທີ່ດິນ ຂອງຊາວກະສິກອນຂະໜາດນ້ອຍ ຈະບໍ່ຂັດແຍ້ງກັບນະໂຍບາຍຂອງລັດ ກ່ຽວກັບ 'ການຫັນທີ່ດິນໃຫ້ເປັນທຶນ'.

**ລວມເອົາປະສົບການຢູ່ເຂດເທດສະບານ ເຂົ້າໃນນະໂຍບາຍຂອງພວກທ່ານ:** ອີງຕາມຕົວຢ່າງ ໃນໄລຍະບໍ່ດົນມານີ້ ທີ່ເກີດຂຶ້ນ ຢູ່ເຂດເທດສະບານ ກ່ຽວກັບກໍລະນີທີ່ ສິດຄອບຄອງທີ່ດິນປະຊາຊົນ ຖືກລະເມີດ (ເຊັ່ນ: ໂຄງການຖະໜົນ 450 ປີ ແລະ ໂຄງການກໍ່ສ້າງຂອງນັກລົງທຶນຊາວຈີນ ຢູ່ບຶງທາດຫຼວງ ໄກ້ກັບເຂດເທດສະບານນະຄອນຫຼວງວຽງຈັນ) ອາດຈະຊ່ວຍດຶງດູດຄວາມສົນໃຈ ຂອງປະຊາຊົນເຂດເທດສະບານ ກ່ຽວກັບການສົນທະນານະໂຍບາຍທີ່ດິນ. ຖ້າວ່າກຸ່ມ LIWG ສາມາດສະແດງໃຫ້ເຫັນວ່າ ນະໂຍບາຍ NLP ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ ບໍ່ພຽງແຕ່ສົ່ງຜົນສະທ້ອນຕໍ່ຊົນເຜົ່າກຸ່ມນ້ອຍຢູ່ເຂດຊົນນະບົດ ພຽງເທົ່ານັ້ນ, ແຕ່ວ່າ ມັນຍັງສົ່ງຜົນສະທ້ອນທີ່ເທົ່າກັນ ຕໍ່ປະຊາຊົນເຂດເທດສະບານ ຊຶ່ງອາດຈະຊ່ວຍສ້າງແຮງກົດດັນຈາກສັງຄົມ ທີ່ມີປະສິດທິພາບ ໃຫ້ແກ່ລັດຖະບານ ເພື່ອໃຫ້ພວກເຂົາ ສ້າງລະບຽບກົດໝາຍທີ່ມີຄວາມໝາຍ ແລະ ຮັດກຸມຫຼາຍຂຶ້ນກວ່າເກົ່າ. ຫຼັງຈາກນັ້ນ, ຄວາມເປັນຈິງ ແລະ ຄວາມຕ້ອງການຂອງຊົນຊັ້ນກາງຢູ່ເຂດເທດສະບານ ມີຄວາມໄກ້ຊິດກັບນັກການເມືອງ ຫຼາຍກວ່າ ຜູ້ທີ່ໄດ້ຮັບຜົນກະທົບ ຢູ່ເຂດຊົນນະບົດ ທີ່ຢູ່ຫ່າງໄກ.

# ເອກະສານອ້າງອີງ


ທ່ານ Acosta A.M., Pettit J. (2013). ຄູ່ມືສໍາລັບການປະຕິບັດງານ: ການປະສົມປະສານວິທີການ ກ່ຽວກັບເສດຖະກິດທາງການເມືອງ ແລະ ການວິເຄາະອໍານາດໃນການຕັດສິນບັນຫາ. ເອກະສານຄົ້ນຄ້ວາ ທີ່ຂຽນໂດຍອົງການຮ່ວມມືສາກົນຂອງປະເທດສະວິດສ໌. ກອບແຜນວຽກ IDS-DLGN, ເດືອນພຶດສະພາ 2013.

ລັດຖະບານ ສປປ ລາວ (2014). ຮ່າງມະຕິຕົກລົງ ກ່ຽວກັບທີ່ດິນ ຂອງກົມການເມືອງສູນກາງພັກ. ວຽງຈັນ, 2014.

–. (2014). ຮ່າງນະໂຍບາຍທີ່ດິນແຫ່ງຊາດ. ວຽງຈັນ, 2014.

ທ່ານ Krisch F. (2012). ຄູ່ມື ສໍາລັບການແນະນໍາຜົນກະທົບຂອງວຽກການຂໍການສະໜັບສະໜູນ. ຄູ່ມື ສໍາລັບການວາງແຜນ ແລະ ການຕິດຕາມປະເມີນຜົນ. ເອກະສານຂອງ Bort für die Welt Dialogue ເລກທີ 8.Stuttgart, ເດືອນເມສາ 2012.

ອົງການ HELVETAS Swiss Intercooperation (2015). ແນວຄວາມຄິດການການຂໍການສະໜັບສະໜູນ. Zurich and Bern.

ໜ່ວຍງານ Land Issues Working Group (2012). ບົດແນະນໍາ ກ່ຽວກັບບັນຫາທີ່ດິນ ໃນ ສປປ ລາວ. ການຄຸ້ມຄອງທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນທໍາມະຊາດ. ເພີ້ມທະວີຄວາມສະເໝີພາບ ຫຼື ເພີ້ມທະວີຄວາມບໍ່ສະເໝີພາບ?ວຽງຈັນ, 2012.

–. (2014a). ຄໍາແນະນໍາຕົ້ນຕໍ ສໍາລັບນະໂຍບາຍທີ່ດິນແຫ່ງຊາດ. ວຽງຈັນ, ເດືອນພຶດສະພາ 2014.

–. (2014b). ຜົນການວິເຄາະ ສັນຍາການລົງທຶນ ແລະ ການຄ້າ. ເອກະສານພາຍໃນ. ວຽງຈັນ, ເດືອນມິຖຸນາ 2014.

ທ່ານ Schönweger O., Heinimann A., Epprecht M., Lu J., Thalongsengchanh P. (2012). ການເປີດໃຫ້ເຊົ່າ ແລະ ສໍາປະທານ ໃນ ສປປ ລາວ. ການຄຸ້ມຄອງທີ່ດິນ ເພື່ອການລົງທຶນ. ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ມະຫາວິທະຍາໄລເບີນ, ອົງການ SDC, ອົງການການຮ່ວມມືປະເທດເຢຍລະມັນ.

# ເອກະສານແນບທ້າຍ: ຄຳຖາມແນະແນວ

### 1. ພາລະບົດບາດຂອງອົງການຈັດຕັ້ງ / ສະຖາບັນໃນປະເທດລາວ

- ອົງການຈັດຕັ້ງແລະສະຖາບັນທີ່ທ່ານເຮັດວຽກໃນປະເທດລາວ; ເປົ້າໝາຍ ແລະຈຸດປະສົງຕົ້ນຕໍ?
- ແມ່ນຫຍັງແນ່ທີ່ປະເດັນທີ່ດິນແລະການຄຸ້ມຄອງຊັບພະຍາກອນທຳມະຊາດມີຄວາມສອດຄ່ອງກັບອົງການຈັດຕັ້ງຂອງທ່ານໃນປະເທດລາວ?
- ໃນລະດັບໃດແລະໃນພາລະບົດບາດໃດທີ່ສະຖາບັນຂອງທ່ານມີສ່ວນຮ່ວມໃນຂະບວນການສ້າງນະໂຍບາຍ NLP?

### 2. ຂັ້ນຕອນການສ້າງນະໂຍບາຍທີ່ດິນໃນປະເທດລາວ: ພາກສ່ວນທີ່ກ່ຽວຂ້ອງແລະຂັ້ນຕອນ

- ຕາມທັດສະນະຂອງທ່ານ, ພາກສ່ວນໃດມີຄວາມກ່ຽວຂ້ອງແລະມີອຳນາດໃນການຕັດສິນບັນຫາກ່ຽວກັບທີ່ດິນໃນປະເທດລາວ, ໂດຍສະເພາະແມ່ນໃນຂັ້ນຕອນການກຳນົດນະໂຍບາຍ NLP? ພາກສ່ວນເຫຼົ່ານັ້ນມີຄວາມສົນໃຈຫຍັງແນ່ກ່ຽວກັບນະໂຍບາຍ NLP?
- ຕາມທັດສະນະຂອງທ່ານ, ໃຜເປັນພາກສ່ວນຕັດສິນບັນຫາກ່ຽວກັບນະໂຍບາຍ NLP? ພາກສ່ວນດັ່ງກ່າວນັ້ນຈະເຂົ້າເຖິງແລະເປັນເປົ້າໝາຍຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງໄດ້ແນວໃດ?

### 3. ນະໂຍບາຍທີ່ດິນ / ຂັ້ນຕອນການສ້າງນະໂຍບາຍ NLP ໃນ ສປປລາວ: ປະເດັນແລະຫົວຂໍ້ທີ່ກ່ຽວຂ້ອງ

- ຕາມທັດສະນະຂອງພວກທ່ານ, ປະດັນໃດທີ່ຄວນຈະຖືກຕອບຮັບໃນຂະບວນການສ້າງນະໂຍບາຍ NLP?
- ເນື້ອໃນຂອງເອກະສານສະບັບຮ່າງ ສ່ອງແສງໃຫ້ເຫັນ ປະເດັນເຫຼົ່ານັ້ນ ຢ່າງພຽງພໍບໍ?
- ບັນຫາທີ່ສຳຄັນທີ່ສຸດຄືວໃດ ທີ່ຄວນກຳນົດໄວ້ໃນນະໂຍບາຍ NLP?
- ຖ້າພວກເຮົາເບິ່ງການປຶກສາຫາລື ກ່ຽວກັບນະໂຍບາຍ NLP ແຕ່ອະດີດຈົນເຖິງປະຈຸບັນ, ພວກທ່ານຄິດວ່າ ແມ່ນຫຍັງເຮັດໄດ້ ແລະ ແມ່ນຫຍັງ ຄວນຈະໄດ້ຮັບການປັບປຸງ?
- ຕາມທັດສະນະຂອງພວກທ່ານ, ແມ່ນຫຍັງທີ່ເປັນເສັ້ນທາງທີ່ມີຄວາມຫວັງທີ່ສຸດ ສຳລັບນະໂຍບາຍ NLP ທີ່ດິນ?
- ທ່ານພໍຮູ້ຕົວຢ່າງຫຍັງບໍ ກ່ຽວກັບວຽກການຂໍການສະໜັບສະໜູນທີ່ລົ້ມເຫຼວ ກ່ຽວກັບທີ່ດິນ / ກຳມະສິດທີ່ດິນ ໃນ ສປປລາວ?

### 4. ສາຍພົວພັນວຽກງານຂອງອົງການຈັດຕັ້ງ / ສະຖາບັນ ທຽມກັບ ກຸ່ມ LIWG

- ພວກທ່ານ ຫຼື ອົງການຈັດຕັ້ງຂອງພວກທ່ານ ພົວພັນວຽກງານ ກັບກຸ່ມ LIWG ແນວໃດ?
- ອົງການຈັດຕັ້ງຂອງພວກທ່ານ ໄດ້ອຸທິດ ທາງດ້ານຊັບພະຍາກອນ (ເວລາ, ງົບປະມານ, ແລະອື່ນ) ໃຫ້ແກ່ກຸ່ມ LIWG ຫຼາຍເທົ່າໃດ?

### 5. ກຸ່ມ LIWG: ການປະເມີນ

- ຜົນກະທົບ: ຜົນກະທົບຕໍ່ການສົນທະນາ ກ່ຽວກັບນະໂຍບາຍທີ່ດິນ ໂດຍສະເພາະແມ່ນ ຂະບວນການຮ່າງນະໂຍບາຍ NLP?
- ທ່າແຮງ: ກຸ່ມ LIWG ໄດ້ນຳໃຊ້ທ່າແຮງຂອງຕົນໃນໝົດທຸກດ້ານບໍ ໃນນາມທີ່ເປັນຜູ້ຂໍການສະໜັບສະໜູນ ກ່ຽວກັບນະໂຍບາຍທີ່ດິນ?
- ສິດທິຕາມລະບຽບກົດໝາຍ: ກຸ່ມ LIWG ຕາງໜ້າໃຫ້ 'ສິດທິ' ຂອງພາກສ່ວນທີ່ກ່ຽວຂ້ອງບໍ?
- ວິທີການ ແລະ ນ້ຳສຽງ: ກຸ່ມ LIWG ກຳນົດກອບເນື້ອໃນຂໍ້ຄວາມການໂຄສະນາບໍ? ກຸ່ມ LIWG ໄດ້ກຳນົດ ກຸ່ມເປົ້າໝາຍ ທີ່ຖືກຕ້ອງແລ້ວບໍ? ວິທີການ ໄດ້ຮັບການນຳໃຊ້ຢ່າງຖືກຕ້ອງ ແລະ ມີປະສິດທິພາບບໍ?
- ການຕັດສິນພາຍໃນ: ການຕັດສິນໃຈ ແມ່ນມີຂັ້ນຕອນຫຍັງແນ່! ໃຜແນ່ມີສ່ວນຮ່ວມ ໃນການຕັດສິນໃຈ?

- ມີຄວາມດຸ່ນດ່ຽງບໍ ພາຍໃນສະມາຊິກແຕ່ລະທ່ານ ກ່ຽວກັບອຳນາດໃນການຕັດສິນບັນຫາ/ການແຊກແຊງໃນການຕັດສິນໃຈ, ມີໜ້າປະຊຸມ, ຊັບພະຍາກອນ ທີ່ຖືກນຳໃຊ້, ການຮັບຮູ້ຂໍ້ມູນ?
- ໃນໄລຍະບໍ່ດົນມານີ້, ມີສະມາຊິກໃດບໍ ໄດ້ຖອນຕົວອອກ / ໄດເຂົ້າຮ່ວມກຸ່ມ LIWG? ຖ້າມີ, ຍ້ອນຫຍັງ?
- ທ່ານຈະປະເມີນພາວະຜູ້ນຳ / ກອງເລຂາຂອງກຸ່ມ LIWG ແນວໃດ?

## 6. ກຸ່ມLIWG: ທັດສະນະ

ການປ່ຽນແປງຫຍັງແນ່, ຖ້າມີ, ທີ່ທ່ານຕ້ອງການແນະນຳກ່ຽວກັບບັນຫາຂ້າງລຸ່ມນີ້:

- ອົງປະກອບແລະການສ້າງຕັ້ງທາງດ້ານສະຖາບັນ
- ພາວະຜູ້ນຳ
- ພາລະບົດບາດແລະໜ້າວຽກ (ການຂໍການສະໜັບສະໜູນ, ຜູ້ດຳເນີນກອງປະຊຸມ, ຜູ້ເຊື່ອມຕໍ່ຄວາມຮູ້, ແລະອື່ນໆ)
- ຂັ້ນຕອນການຕັດສິນບັນຫາພາຍໃນ
- ການຮ່ວມມືກັບພາກສ່ວນອື່ນໆ (ເຊັ່ນ: ອົງການ NGO ທ້ອງຖິ່ນ, ອົງການຜູ້ໃຫ້ທຶນ, ອົງການຈັດຕັ້ງຫຼາຍຝ່າຍ, ແລະອື່ນໆ)
- ວິທີການແລະນ້ຳສຽງ (ເຊັ່ນ: ວິທີການສຳລັບກຸ່ມເປົ້າໝາຍຕົ້ນຕໍ)
- ແລະອື່ນໆ.